# ການສັງລວມຄວາມຮູ້ ແລະ ປະສົບການທ້ອງຖິ່ນ

## ປື້ມຄູ່ມືການຝຶກອົບຮົມ ສຳລັບຜູ້ນຳທ່ຽວ ຍິງ - ຊາຍ ຂັ້ນທ້ອງຖິ່ນ ໃນ ສປປ ລາວ



ທ່ານ ພອລ ແອຊູ ແລະ ທ່ານ ນ. ພອງສິດ ດາວະດິງ

ກໍລະກົດ 2005

LNTA-ADB
Mekong Tourism Development Project

# ການສັງລວມຄວາມຮູ້ ແລະ ປະສົບການທ້ອງຖິ່ນ

## ປື້ມຄູ່ມືການຝຶກອົບຮົມ ສຳລັບຜູ້ນຳທ່ຽວ ຍິງ - ຊາຍ ຂັ້ນທ້ອງຖິ່ນ ໃນ ສປປ ລາວ

ທ່ານ ພອລ ແອຊູ ແລະ ທ່ານ ນ. ຟອງສິດ ດາວະດີງ

ກໍລະກົດ 2005

# ຄຳຂອບໃຈ

ພວກຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ມາຍັງທ່ານ ຈິມ ຈອນສັນ, ທ່ານ ສະຕີເວັນ ຊີບປານີ, ທ່ານ ນ. ທາຣາ ກູຈາເດີ ແລະ ທ່ານ ທະວີເພັດ ອຸລາ ສຳລັບຂໍ້ມູນ ແລະ ການແນະນຳ ທີ່ມີ ປະໂຫຍດ, ຊຶ່ງປື້ມຄູ່ມືນີ້ບໍ່ອາດສາມາດ ເປັນໄປໄດ້ ຖ້າປາສະຈາກການຊ່ວຍເຫລືອ ຈາກພວກທ່ານ. ພ້ອມກັນນັ້ນ, ພວກເຮົາຂໍສະແດງຄວາມຮູ້ບຸນຄຸນ ນຳ ອົງການທ່ອງທ່ຽວແຫ່ງຊາດ - ເອດີບີ, ໂຄງການ ພັດທະນາການທ່ອງທ່ຽວລຸ່ມແມ່ນ້ຳຂອງ ທີ່ໃຫ້ການສະໜັບ ສະໜູນ ແລະ ການຊ່ວຍເຫລືອ.

ນອກຈາກນີ້, ພວກຂ້າພະເຈົ້າ ກໍຂໍສະແດງຄວາມຂອບໃຈ ນຳບັນດາບ້ານ ແລະ ອົງການຈັດຕັ້ງຕ່າງໆ ທີ່ໃຫ້ການ ຊ່ວຍເຫລືອ ແລະ ໃຫ້ບັນດາຕົວຢ່າງທີ່ມີປະໂຫຍດ ກ່ຽວກັບຄວາມຮູ້ ແລະ ປະສົບການທ້ອງຖິ່ນ ດັ່ງຕໍ່ໄປນີ້:
<u>ຢູ່ແຂວງ ຫລວງນ້ຳທາ:</u> ບ້ານ ພູແຢະ, ບ້ານ ເລົ້າເຂົ້າ (ເມືອງສິງ); ບ້ານ ຂອນ, ບ້ານ ສົບຊິມໃຫຍ່ (ເມືອງນ້ຳທາ); ບ້ານ ພູແຢະ, ບ້ານ ນ້ຳໂລະ (ເມືອງວຽງພູຄາ) ແລະ ໜ່ວຍບໍລິການນຳທ່ຽວອະນຸລັກ ເມືອງວຽງພູຄາ; ເຮືອນພັກ ທ່າເຮືອ, ໂຄງການພັດທະນາຊົນນະບົດ (GTZ) ແລະ ປະສົບການເຜົ່າກໍ (ອາຄາ).
<u>ຢູ່ແຂວງ ສະຫວັນນະເຂດ:</u> ບ້ານ ທາດ, ບ້ານ ຍາງ (ເມືອງພີນ) ແລະ ໜ່ວຍບໍລິການນຳທ່ຽວອະນຸລັກ ສະຫວັນນະເຂດ.
<u>ຢູ່ແຂວງ ຈຳປາສັກ:</u> ບ້ານ ດອນໂຄ (ເມືອງ ຊະນະສົມບູນ); ບ້ານ ຫົວດອນແດງ, ບ້ານ ຕະອອງ, ບ້ານ ພະລາຍບົກ ແລະ ບ້ານ ເພຍໄຟ (ເມືອງ ປະທຸມພອນ).

ອອກແບບ ແລະ ຈັດໜ້າ : ທ້າວ ພີພັດ ພະເມືອງ, ທ້າວ ຂັນທະວອນ ພະເມືອງ ແລະ ທ້າວ ບຸນຍະສອນ ວົງພູທອນ

# ສາລະບານ


ບົດແນະນຳ
.........................................................................................................................
7

**ພາກທີ 1: ການແນະນຳ ກ່ຽວກັບຄວາມຮູ້ທ້ອງຖິ່ນ ແລະ ຄຸນຄ່າຂອງມັນ ຄືກັນກັບ ຊັບພະຍາກອນທ່ອງທ່ຽວ..........................................................................................**
**9**

ຄວາມຮູ້ທ້ອງຖິ່ນ ແມ່ນຫຍັງ? ........................................................................ 9
ເປັນຫຍັງຄວາມຮູ້ ແລະ ປະສົບການທ້ອງຖິ່ນຈິ່ງມີຄວາມສຳຄັນ ? ................................ 11
ຍ້ອນຫຍັງ ຄວາມຮູ້ ແລະ ປະສົບການທ້ອງຖິ່ນຈິ່ງມີຄວາມສຳຄັນ ຕໍ່ການທ່ອງທ່ຽວ
ໃນ ສປປ ລາວ ? ......................................................................................... 12
ໃຜແດ່ ມີຄວາມຮູ້ທ້ອງຖິ່ນ ? ........................................................................ 13
ໃຜແດ່ ສາມາດເປັນຜູ້ນຳທ່ຽວ ແລະໃຫ້ຄວາມຮູ້ທ້ອງຖິ່ນ ແກ່ນັກທ່ອງທ່ຽວ ? .................. 14
ຄວາມຮູ້ ແລະ ປະສົບການທ້ອງຖິ່ນທັງໝົດ ເໝາະສົມສຳລັບການທ່ອງທ່ຽວ ຫລື ບໍ່ ?.......... 16

**ພາກທີ 2 : ບັນດາຕົວຢ່າງ ກ່ຽວກັບຄວາມຮູ້ທ້ອງຖິ່ນ ແລະ ວິທີການນຳໃຊ້ຄວາມຮູ້ເຫລົ່ານັ້ນ ເຂົ້າໃນວຽກງານການທ່ອງທ່ຽວ** ........................................................................ 18

ການອະທິບາຍ ຂອບເຂດ ຫລື ສະຖານທີ່ໃດໜຶ່ງ.................................................... 18
ຮູບແບບການປຸກເຮືອນ ................................................................................ 21
ດ້ານສາທາລະນະສຸກ ..................................................................................... 22
ດ້ານກະສິກຳ ແລະ ການລ້ຽງສັດ ..................................................................... 26
ດ້ານອາຫານ ............................................................................................ 29
ດ້ານຫັດຖະກຳ ແລະ ການນຸ່ງຖື....................................................................... 32
ນິທານຕ່າງໆ ............................................................................................ 35
ຂໍ້ຫ້າມ (ສິ່ງຂະລຳ) ຕ່າງໆ .............................................................................. 39
ດິນຕີ ...................................................................................................... 40
ເຄື່ອງປ່າຂອງດົງ ....................................................................................... 43
ສັດປ່າ ..................................................................................................... 46
ການລ່າເນື້ອ ແລະ ຫາປາ .............................................................................. 48

**ພາກທີ 3 : ວິທີການ ຖ່າຍທອດຄວາມຮູ້ ແລະ ປະສົບການທ້ອງຖິ່ນ**
**.......................................... 50**

ການນຳໃຊ້ ອິນຊີທັງຫ້າ ................................................................................ 51
ການແນະນຳ ດ້ວຍວິທີສະແດງອອກ ( ສະແດງ ແລະ ສາທິດ )...................................... 52
ການແນະນຳ ດ້ວຍການເຮັດຕົວຈິງ ( ປະສົບການ ແລະ ກິດຈະກຳຕ່າງໆ ) ...................... 55
ການແນະນຳ ດ້ວຍການປາກເວົ້າ ( ການອະທິບາຍ ) ................................................ 57
ການແນະນຳ ດ້ວຍບົດນິທານຕ່າງໆ (ນິທານເລົ່າລື).................................................. 63
ການແນະນຳ ດ້ວຍການສົນທະນາ (ບົດສົນທະນາ) ................................................... 65

ສ ະ ທ ລ , ບ

# ບົດແນະນຳ

ການທ່ອງທ່ຽວແມ່ນ ໜຶ່ງໃນແຫລ່ງລາຍຮັບທີ່ສຳຄັນຕົ້ນຕໍ ສຳລັບ ສປປ ລາວ. ການທ່ອງທ່ຽວໄດ້ເຄີຍເປັນອັນດັບໜຶ່ງໃນການສ້າງລາຍຮັບດ້ານເງິນຕາໃຫ້ແກ່ປະເທດຊາດ ໃນໄລຍະສອງ - ສາມປີ ທີ່ຜ່ານມາ, ຊຶ່ງນຳໜ້າໂດຍຂະແໜງການກະສິກຳ, ການຕັດຫຍິບ, ບັນດາບໍ່ແຮ່ຕ່າງໆ ແລະ ໄມ້ທ່ອນ. ໜຶ່ງໃນບູລິມະສິດຕົ້ນຕໍ ຂອງລັດຖະບານ ສປປ ລາວ ແມ່ນເພື່ອລຶບລ້າງ ຄວາມທຸກຈົນ ຂອງປະຊາຊົນບັນດາເຜົ່າ ແລະ ຍຸດທະສາດໃໝ່ສຳລັບການລຶບລ້າງຄວາມທຸກຈົນ ແມ່ນ ນຳໃຊ້ການທ່ອງທ່ຽວ ເປັນເຄື່ອງມືສຳລັບການສ້າງລາຍໄດ້ໃຫ້ແກ່ປະຊາຊົນທ້ອງຖິ່ນ. ໃນແນວຄວາມຄິດ ແມ່ນງ່າຍດາຍ ເຊັ່ນ: ທັນປ່ຽນການກະຈາຍລາຍໄດ້ ແລະ ຜົນປະໂຫຍດຈາກ ອຸດສະຫະກຳທ່ອງທ່ຽວ ແກ່ປະຊາຊົນເຫລົ່ານັ້ນ.

ບັນຫາຢູ່ທີ່ວ່າ ພວກເຮົາຈະນຳໃຊ້ການທ່ອງທ່ຽວຄືແນວໃດ ເພື່ອຫລຸດຜ່ອນຄວາມທຸກຍາກ ? ໂດຍແຕກຕ່າງຈາກຂະແໜງ ກະສິກຳ ຕົວຢ່າງ: ເຂົ້າເປັນໂຕນໆ, ໝາກໄມ້ຫລາຍກິໂລ, ສາລີຫລາຍເປົາ, ການທ່ອງທ່ຽວ ແມ່ນຂະແໜງການທີ່ໃຫ້ການບໍລິການ. ການບໍລິການ ດ້ານການທ່ອງທ່ຽວ ລວມມີ: ການປຸງແຕ່ງອາຫານ, ສະຖານທີ່ພັກເຊົາ, ການຂົນສົ່ງ, ການນຳທ່ຽວ ແລະ ອື່ນໆ. ເພື່ອກຳໜົດວິທີການ ນຳໃຊ້ການທ່ອງທ່ຽວ ເຂົ້າໃນການຫລຸດຜ່ອນຄວາມທຸກຍາກ , ສິ່ງທີ່ພວກເຮົາ ຄວນຄິດກ່ອນອື່ນໝົດແມ່ນ ມີການບໍລິການໃດແດ່ທີ່ຊາວບ້ານສາມາດໃຫ້ ແກ່ນັກທ່ອງທ່ຽວ, ໂດຍການໃຫ້ ການບໍລິການແກ່ນັກທ່ອງທ່ຽວ, ຊາວບ້ານ ສາມາດ ຫາລາຍໄດ້ເພີ່ມເຕີມ.

ນັກທ່ອງທ່ຽວ ເຂົ້າມາ ສປປ ລາວ ເພື່ອເບິ່ງສິ່ງໃໝ່ໆ ແລະ ແຕກຕ່າງ, ສິ່ງທີ່ເຂົາເຈົ້າບໍ່ເຄີຍເຫັນ ຫລື ປະສົບມາກ່ອນໃນປະເທດຂອງເຂົາເຈົ້າເອງ. ເຂົາເຈົ້າມາເພື່ອສຶກສາຫາຄວາມຮູ້, ຄວາມເຂົ້າໃຈ ແລະ ຮູບພາບອັນໃໝ່ຈາກໂລກທີ່ອ້ອມຕົວເຂົາເຈົ້າ. ພວກເຂົາສົນໃຈ ໃນການຮຽນຮູ້ ກ່ຽວກັບການດຳລົງຊີວິດ ແບບຮີດຄອງເດີມ ແລະວິທີການດຳລົງຊີວິດຂອງຄົນລາວ. ເຂົາເຈົ້າຍັງຕ້ອງການຮຽນ ກ່ຽວກັບສາດສະໜາຕ່າງໆ ຂອງບັນດາເຜົ່າ, ລະບົບການຜະລິດກະສິກຳແບບດັ້ງເດີມ, ບັນດາຫັດຖະກຳທ້ອງຖິ່ນ, ສິລະປະດົນຕີ ແລະ ການສະແດງຂອງລາວເຮົາ, ສັດປ່າ ແລະ ການນຳໃຊ້ພືດ ແລະ ເຄື່ອງປ່າຂອງດົງຕ່າງໆ. ວັດທະນະທຳທີ່ເດັ່ນ ຂອງຊາດລາວລວມມີທຳມະຊາດ ແລະ ມໍລະດົກທາງປະຫວັດສາດ ແມ່ນ ແຕກຕ່າງຈາກບັນດາປະເທດໃນໂລກ ເພາະສະນັ້ນ, ມັນເປັນສິ່ງດຶງດູດທີ່ສຳຄັນ ສຳລັບນັກທ່ອງທ່ຽວ.

ສະນັ້ນ, ໃຜຈະແນະນຳ ຫລື ສອນໃຫ້ນັກທ່ອງທ່ຽວ ກ່ຽວກັບວັດທະນະທຳ, ທຳມະຊາດ ແລະ ມໍລະດົກທາງປະຫວັດສາດ ໄດ້ດີກວ່າຄົນລາວທ້ອງຖິ່ນ ໂດຍການອະທິບາຍ ດ້ວຍຕົວເຂົາເຈົ້າເອງ ? ຄວາມຮູ້ທ້ອງຖິ່ນ ສ່ວນຫລວງຫລາຍ, ຮຽກຮ້ອງໃຫ້ອະທິບາຍ ສິ່ງທີ່ໜ້າປະທັບໃຈເຫລົ່ານີ້. ບັນດາຄວາມຮູ້ທ້ອງຖິ່ນບໍ່ຄ່ອຍຈະໄດ້ຮັບການບັນທຶກ ແລະ ກໍບໍ່ໄດ້ນອນຢູ່ໃນລະບົບ ການສຶກສາທີ່ທັນສະໄໝ, ແຕ່ໄດ້ສືບທອດມາຈາກ ວັດທະນະທຳທ້ອງຖິ່ນ ແລະ ມໍລະດົກຂອງເຜົ່າຕ່າງໆ, ຊຶ່ງໄດ້ຖືກຖ່າຍທອດປາກເປົ່າຈາກຄົນລຸ້ນນີ້ຫາລຸ້ນຕໍ່ໄປ. ສະນັ້ນ, ມັນເປັນໂອກາດທີ່ສຳຄັນ ສຳລັບຊາວບ້ານຕ່າງໆ ຂອງລາວເຮົາ ທີ່ຈະໃຊ້ຄວາມຮູ້ທ້ອງຖິ່ນຂອງເຂົາເຈົ້າ ເຊັ່ນ: ການເປັນພະນັກງານນຳທ່ຽວ, ຊຶ່ງສາມາດສ້າງແຫລ່ງລາຍຮັບທີ່ສຳຄັນ ໃຫ້ແກ່ປະຊາຊົນທ້ອງຖິ່ນ.

# ພາກທີ 1 :

# ການແນະນຳ ກ່ຽວກັບຄວາມຮູ້ທ້ອງຖິ່ນ ແລະ ຄຸນຄ່າຂອງມັນຕໍ່ກັບກັບ ຊັບພະຍາກອນທ້ອງຖິ່ນ

## *ຄວາມຮູ້ທ້ອງຖິ່ນແມ່ນຫຍັງ ?*

ຄວາມຮູ້ ແລະ ປະສົບການ ຂອງຄົນທ້ອງຖິ່ນ ໄດ້ຖືກນິຍາມວ່າເປັນ: "*ຄວາມຮູ້ ແລະ ປະ ສົບການຂອງທ້ອງຖິ່ນ ຊຶ່ງເປັນ ເອກະລັກ ຂອງ ວັດທະນະທຳ ແລະ ສັງຄົມໃດໜຶ່ງ. ຄວາມຮູ້ເຫລົ່ານັ້ນ ແມ່ນເປັນພື້ນຖານສຳລັບການຕັດສິນໃຈ ໃນລະດັບທ້ອງຖິ່ນ ກ່ຽວກັບການຜະລິດກະສິກຳ,* ດ້ານສາທາລະນະສຸກ, ການປຸງແຕ່ງອາຫານ, ການສຶກສາ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ກິດຈະກຳອື່ນໆ". " *ຄວາມຮູ້ນີ້ແມ່ນເປັນຄວາມຮູ້ທີ່ຖືກສັງລວມນອກລະບົບສາມັນສຶກສາ ແລະ ໄດ້ຮັບການພັດທະນາ ແລະ ຖ່າຍທອດກັນມາ ໂດຍຊາວບ້ານໃດໜຶ່ງໃນໄລຍະທີ່ຜ່ານມາ ແລະ ໄດ້ຮັບການສືບຕໍ່ພັດທະນາຕໍ່ໄປເລື້ອຍໆ* ".

ອົງການຢູແນັດສໂກ ( UNESCO : ອົງການດ້ານການສຶກສາ, ວິທະຍາສາດ ແລະ ວັດທະນະທຳ ຂອງອົງການສະຫະປະຊາຊາດ ) ໄດ້ສະຫລຸບຫຍໍ້ ບາງຈຸດສຳຄັນ ຂອງຄວາມຮູ້ ແລະ ປະສົບການທ້ອງຖິ່ນດັ່ງນີ້:

- ມີຂອບເຂດຊາຍແດນຂອງທ້ອງຖິ່ນ ແລະ ເປັນຊາວພື້ນເມືອງສຳລັບຂົງເຂດໃດໜຶ່ງ.
- ເປັນວັດທະນະທຳ ແລະ ສະພາບແວດລ້ອມສະເພາະ .
- ເປັນຄວາມຮູ້ ແລະ ປະສົບການທ້ອງຖິ່ນ ທີ່ບໍ່ເປັນທາງການ.
- ການຖ່າຍທອດຄວາມຮູ້ແບບປາກເປົ່າ, ໂດຍທົ່ວໄປແລ້ວບໍ່ໄດ້ຮັບການບັນທຶກ.
- ມີການປ່ຽນແປງ ແລະ ດັດແກ້ຢູ່ສະເໝີ .
- ຄວາມສົມບູນໃນທຳມະຊາດ .
- ຕິດພັນຢ່າງໃກ້ຊິດກັບຄວາມຢູ່ລອດ ແລະ ການດຳລົງຊີວິດຂອງຜູ້ຄົນທີ່ຫລວງຫລາຍ ໃນໂລກ.

ຄວາມຮູ້ພື້ນເມືອງ ແມ່ນຄວາມຮູ້ທີ່ໄດ້ຖ່າຍທອດກັນມາໃນແຕ່ລະຍຸກສະໃໝ, ຈາກແມ່ສູ່ລູກສາວ, ຈາກພໍ່ຫາລູກຊາຍ. ຄວາມຮູ້ ແລະ ປະສົບການດັ່ງກ່າວ ບໍ່ແມ່ນສິ່ງທີ່ນັກຮຽນ ໄດ້ຮຽນຢູ່ໂຮງຮຽນ. ມັນແມ່ນສິ່ງທີ່ເຂົາເຈົ້າຮຽນ ຈາກພໍ່ແມ່ ແລະ ຜູ້ອາວຸໂສ. ມັນເປັນຂໍ້ມູນທີ່ເດັ່ນຂອງບັນດາຊົນຊາດຊົນເຜົ່າ ຫລື ປະຊາຊົນທ້ອງຖິ່ນທີ່ພົວພັນກັບດ້ານຕ່າງໆ, ຊຶ່ງເປັນສ່ວນໜຶ່ງຂອງວັດທະນະທຳ ແລະ ຮູບແບບການດຳລົງຊີວິດຂອງເຂົາເຈົ້າ. ມັນເປັນຂໍ້ມູນທີ່ບໍ່ໄດ້ຮັບການບັນທຶກ, ຊຶ່ງຊາວບ້ານໃນທົ່ວປະເທດລາວເພິ່ງພາອາໃສ ເພື່ອທຳການປູກຝັງ ແລະ ເກັບກ່ຽວຜົນລະປູກ, ສະແຫວງຫາສະຖານທີ່ ທີ່ເໝາະສົມ ເພື່ອຕັ້ງຖິ່ນຖານ, ສະແດງພິທີທາງສາດສະໜາ, ອົບຮົມສິດສອນລູກຫລານ ຂອງເຂົາເຈົ້າ, ປຸງແຕ່ງອາຫານທ້ອງຖິ່ນ, ປິ່ນປົວດູແລຕົນເອງ ໃນຍາມເຈັບເປັນ, ຄຸ້ມຄອງປ່າໄມ້ ແລະ ຫ້ວຍນ້ຳລຳເຊ ລວມທັງກິດຈະກຳອື່ນໆທີ່ຈຳເປັນ ເພື່ອຄວາມຢູ່ລອດ ຫລື ຮັກສາຄວາມໝັ້ນຄົງ ດ້ານວັດທະນະທຳຂອງເຂົາເຈົ້າ.

---

**ແຫລ່ງຂໍ້ມູນ:**

[1] See Flavier et al. 1995:479

[2] World Bank website text. See: www.worldbank.org/afr/ik/index.htm

[3] See IIRR, Philippines, 1996. 'ການບັນທຶກ ແລະ ນຳໃຊ້ ຄວາມຮູ້ແບບພື້ນເມືອງ: ປື້ມຄູ່ມື.

[4] UNESCO website text: See http://www.unesco.org/most/bpindi.htm#_ftnref1

*ບົດເຝິກຫັດ #1*

ຈົ່ງຂຽນສາມກິດຈະກໍາ ທີ່ກ່ຽວຂ້ອງກັບການຜະລິດກະສິກໍາ, ຫັດຖະກໍາ ແລະ ການນໍາໃຊ້ເຄື່ອງປ່າຂອງດົງ, ຊຶ່ງທ່ານໄດ້ຮຽນຮູ້ ຈາກພໍ່ແມ່ຂອງທ່ານ. ຄວາມຮູ້ທ້ອງຖິ່ນຂອງທ່ານທີ່
ກ່ຽວຂ້ອງກັບກິດຈະກໍາເຫລົ່ານີ້ ເປັນເອກະລັກຂອງບ້ານ ແລະ ຂອງຊົນເຜົ່າຂອງທ່ານບໍ ?
ຍ້ອນຫຍັງ ແລະ ເປັນຫຍັງ ຈຶ່ງບໍ່ແມ່ນ ? ມັນແມ່ນ *ຄວາມຮູ້ທ້ອງຖິ່ນ* ຫລືບໍ່ ?

## ເປັນຫຍັງ ຄວາມຮູ້ ແລະ ປະສົບການທ້ອງຖິ່ນ ຈຶ່ງມີຄວາມສໍາຄັນ ?

ຄວາມຮູ້ ແລະ ປະສົບການທ້ອງຖິ່ນ ແມ່ນມີຄວາມສໍາຄັນທີ່ສຸດຕໍ່ ສປປ ລາວ ແລະ ຊາວໂລກ. ຂໍ້ມູນທີ່ໄດ້ຮຽນຢູ່ໂຮງຮຽນ ແລະ ຈາກປຶ້ມແມ່ນບໍ່ທັນສົມບູນ. ຄວາມຮູ້ ແລະ ປະສົບການ ທ້ອງຖິ່ນ ແມ່ນຄວາມຮູ້ ແລະ ປະສົບການທີ່ໄດ້ຖືກພັດທະນາຕາມໄລຍະເວລາອັນຍາວນານຫລາຍຮ້ອຍປີ ແລະ ກະທັ້ງຫລາຍພັນປີມາແລ້ວ. ເພາະວ່າ ວັດທະນະທໍາ ກໍໄດ້ຮັບການພັດທະນາ, ຕາມປົກກະຕິ ຄວາມຮູ້ ແລະ ປະສົບການທ້ອງຖິ່ນ ເກົ່າແກ່ກວ່າສະຖາບັນມະຫາວິທະຍາໄລ ແລະ ສະຖາບັນຕ່າງໆ ທີ່ທັນສະໄໝຂອງລັດຖະບານ. ຄວາມຮູ້ ແລະ ປະສົບການທ້ອງຖິ່ນ ເປັນສາງບັນຈຸສະຕິປັນຍາ ແລະ ບັນດາຍຸດທະສາດ ຂອງແບບແຜນວິທີການດໍາລົງຊີວິດ, ບາງທີອາດມີຄວາມສາມາດບັນຈຸຄວາມຮູ້ ຫລາຍກວ່າວິທະຍາສາດທີ່ທັນສະໄໝ. ມັນມີຄວາມສໍາຄັນຢູ່ບ່ອນວ່າຂໍ້ມູນເຫລົ່ານີ້ ຈະບໍ່ຖືກສູນເສຍໄປ.

ການຂະຫຍາຍຕົວທີ່ໜ້າເປັນຫ່ວງ, ຊຶ່ງການບັງຄັບ ຂອງໂລກທີ່ທັນສະໄໝ ເຊັ່ນ: ໂທລະທັດ, ທຸລະກິດກະສິກໍາ ແລະ ສັງຄົມໃນຕົວເມືອງ ຈະປ່ຽນແປງປະຊາຊົນທ້ອງຖິ່ນ ແລະ ກຸ່ມຊົນເຜົ່ານັ້ນ ເປັນສາເຫດທີ່ເຮັດໃຫ້ສູນເສຍຄວາມຮູ້ ແລະ ປະສົບການທ້ອງຖິ່ນ. ສະຖານະການແບບນີ້ ທ່ານ ຄິດວ່າຈະດີບໍ່ ? ມັນອາດຈະສູນເສຍຄວາມຮູ້ ແລະ ປະສົບການ ທີ່ໄດ້ຮັບການພັດທະນາມາຕັ້ງຫລາຍຮ້ອຍປີ ແລະ ຈາກຫລາຍຮຸ້ນຄົນບໍ່ ? ມີບາງຂໍ້ມູນທີ່ຄົນທ້ອງຖິ່ນ ອາດຈະມີຄວາມຈໍາເປັນ ເພື່ອການດູແລສຸຂະພາບ ແລະ ເພື່ອຄວາມຢູ່ລອດ ຂອງໝົດທຸກຄົນໃນໂລກບໍ ? ຫລາຍໆຄົນມີຄວາມເຊື່ອຖືວ່າ ຄວາມຮູ້ ແລະ ປະສົບການທ້ອງຖິ່ນສໍາຄັນທີ່ສຸດ ແລະ ບໍ່ອາດຈະສູນເສຍມັນໄປ. ພວກເຂົາເຊື່ອໝັ້ນວ່າ ຄວາມຮູ້ຂອງຊາວພື້ນເມືອງຄວນຈະໄດ້ຮັບການສະໜັບສະໜູນ ແລະ ພິຈາລະນາໂດຍ ນັກວິທະຍາສາດ, ນັກຮຽນຮູ້ ນັກສຶກສາ, ນັກການເມືອງ ແລະ ກຸ່ມຄົນໃນສັງຄົມ.



ໃນ ສປປລາວ ມີພືດນາໆຊະນິດ ທີ່ເປັນຢາພື້ນເມືອງ, ຊຶ່ງມັນໃຫ້ປະໂຫຍດຢ່າງຫລວງຫລາຍ ເຊັ່ນ: ພືດຊະນິດນີ້ ສາມາດຢຸດເລືອດໄຫລໄດ້. ພືດນີ້ເອີ້ນວ່າ: ຫຍ້າຂິວ ຫລື ຫຍ້າຝະລັ່ງ, ຊຶ່ງຄົນລາວສ່ວນຫລວງຫລາຍແມ່ນຮູ້ຈັກກັນດີ ແລະ ມັນມີຢູ່ທົ່ວທຸກແຫ່ງໃນ ສປປລາວ. ພ້ອມກັນນັ້ນ, ມັນຍັງມີປະໂຫຍດສໍາລັບການປິ່ນປົວກະເພາະລໍາໄສ້ອີກດ້ວຍ.

ມັນເປັນທຳມະຊາດຂອງຄົນ ທີ່ຢາກຊອກຮູ້ກ່ຽວກັບວັດທະນະທຳ ແລະ ຄວາມເຊື່ອຖືຕ່າງໆ ຂອງຄົນອື່ນ. ສະນັ້ນ, ນັກທ່ອງທ່ຽວ ມາປະເທດລາວ ເພື່ອຮຽນຮູ້ ແລະ ສົມທຽບວັດທະນະທຳຂອງເຂົາເຈົ້າ ກັບວັດທະນະທຳຂອງລາວເຮົາ. ຕົວຢ່າງ: ເຂົາເຈົ້າອາດຕ້ອງການຮຽນຮູ້ ກ່ຽວກັບສາດສະໜາພຸດ ແລະ ສາດສະໜາທ້ອງຖິ່ນອື່ນ. ນັກທ່ອງທ່ຽວ ອາດຈະຕ້ອງການຮູ້ຄຳຕອບ ສຳລັບຄຳຖາມຄືແນວນີ້: ບັນດາສາດສະໜາຂອງຊົນຊາດຕ່າງໆ ຂອງລາວ ແຕກຕ່າງຈາກຂອງຕົນເອງ ຄືແນວໃດ ? ເຂົາເຈົ້າສະຫລອງງານບຸນປະເພນີຕ່າງໆ ແບບໃດ ? ເຂົາເຈົ້າເຮັດພິທີຫຍັງແດ່ ເມື່ອມີຄົນເຈັບເປັນ ? ເຖິງແມ່ນວ່າ ມີບາງຂໍ້ມູນມີໃນປຶ້ມຕ່າງໆ, ແຕ່ມັນເປັນສິ່ງທີ່ໜ້າສົນໃຈ ແລະ ສະໜຸກສະໜານຫລາຍກວ່າ ທີ່ໄດ້ຂໍ້ມູນເຫລົ່ານີ້ໂດຍກົງ ຈາກປະຊາຊົນລາວ. ດ້ວຍເຫດນັ້ນ, ນັກທ່ອງທ່ຽວຫລາຍຄົນມາຢ້ຽມຢາມລາວທຸກໆ ປີ ໃນການຄົ້ນຄ້ວາຄວາມຮູ້, ການລົງຝຶກຫັດ ກ່ຽວກັບວັດທະນະທຳທ້ອງຖິ່ນ ແລະ ຄວາມເຊື່ອຖືຕ່າງໆ. ນັກທ່ອງທ່ຽວຈຳນວນໜຶ່ງເຊື່ອຖືວ່າ: ຄວາມຮູ້ ແລະ ປະສົບການທ້ອງຖິ່ນ ອາດເປັນປະໂຫຍດ ໃຫ້ແກ່ຊີວິດຂອງເຂົາເຈົ້າ. ຕົວຢ່າງ: ມີຄົນເຈັບຈຳນວນໜຶ່ງ ທີ່ຢາຫລວງ ກໍບໍ່ສາມາດປິ່ນປົວໄດ້. ເພາະສະນັ້ນ, ນັກທ່ອງທ່ຽວບາງຈຳນວນມາ ສປປ ລາວ ເພື່ອສຶກສາ ກ່ຽວກັບຢາພື້ນເມືອງຕ່າງໆ ທີ່ອາດຈະມີປະໂຫຍດບໍ່ຫລາຍກໍ່ໜ້ອຍ ສຳລັບເຂົາເຈົ້າ.

*ບົດເຝິກຫັດ #2*

ກະລຸນາແນະນຳ ສອງກິດຈະກຳ ທີ່ທ່ານໄດ້ເຄີຍເຮັດເປັນປະຈຳ ຢູ່ໃນ ຫລື ອ້ອມແອ້ມບ້ານຂອງ ທ່ານ, ຊຶ່ງທ່ານອາດຄິດວ່າ ເປັນສິ່ງທີ່ໜ້າສົນໃຈ ຫລື ມີຄວາມສະໜຸກສະໜານສຳລັບນັກທ່ອງທ່ຽວ ເພື່ອຮຽນຮູ້.

## ໃຜມີຄວາມຮູ້ທ້ອງຖິ່ນ ?

*ມັນມີພຽງແຕ່ຄົນອະວຸໂສເທົ່ານັ້ນບໍ ທີ່ມີຄວາມຮູ້ ແລະ ປະສົບການທ້ອງຖິ່ນ ?* ມັນເປັນຄວາມຈິງທີ່ຜູ້ອາວຸໂສມີຄວາມຮູ້ ແລະ ປະສົບການ ທ້ອງຖິ່ນຫລາຍ. ພວກເຮົາຈຳເປັນຕ້ອງເຂົ້າໃຈວ່າ ຄວາມຮູ້ທ້ອງຖິ່ນນີ້ ຕ້ອງຖ່າຍທອດໃຫ້ແກ່ຄົນຮຸ່ນໃໝ່. ຊາວໜຸ່ມສາມາດມີຄວາມຮູ້ທ້ອງຖິ່ນເຊັ່ນກັນ. ໃນຕົວຈິງ, ຄວາມຮູ້ທ້ອງຖິ່ນມີຫລາຍປະເພດທີ່ໄດ້ ຖືກນຳໃຊ້ ໂດຍຊາວໜຸ່ມ ແລະ ຜູ້ເຖົ້າເຂົ້າໃນຊີວິດປະຈຳວັນ ເຊັ່ນ: ວິທີການ ໃນການປູກຝັງ ແລະ ລ້ຽງສັດ, ຫາປາ, ປຸງແຕ່ງອາຫານ ແລະ ບັນດາວຽກ ທີ່ເຮັດປະຈຳວັນ. *ມັນມີພຽງແຕ່ ເພດຊາຍ ເທົ່ານັ້ນບໍ ທີ່ມີຄວາມຮູ້ ແລະ ປະສົບການທ້ອງຖິ່ນ?* ທັງເພດຊາຍ ແລະ ເພດຍິງ ລ້ວນແລ້ວແຕ່ມີຄວາມຮູ້ທ້ອງຖິ່ນ ມີຫລາຍກິດຈະກຳທີ່ເພດຍິງຮັບຜິດຊອບ, ຊຶ່ງເພດຊາຍບໍ່ໄດ້ຮັບຜິດຊອບ ແລະ ກົງກັນຂ້າມມີຫລາຍກິດຈະກຳທີ່ເພດຊາຍຮັບຜິດຊອບ, ຊຶ່ງເພດຍິງບໍ່ໄດ້ຮັບຜິດຊອບ. ຕົວຢ່າງ: ໃນຫລາຍໆ ບ້ານຢູ່ ສປປ ລາວ ຕາມປົກກະຕິແລ້ວ ເພດຍິງຈະຮູ້ກ່ຽວກັບ ການຕໍ່າຫູກທໍໄໝຫລາຍກວ່າ ເພດຊາຍ, ໃນຂະນະທີ່ເພດຊາຍກໍມີຄວາມຮູ້ ແລະ ປະສົບການຫລາຍກວ່າເພດຍິງ ກ່ຽວກັບວຽກຈັກສານ. ຄວາມຮູ້ທີ່ເພດຍິງມີ ກ່ຽວກັບການປູກພືດ ແລະ ເຮັດສວນ, ລ້ຽງສັດ, ລ້ຽງລູກເຕົ້າ, ຜະລິດເຄື່ອງຫັດຖະກຳ, ປຸງແຕ່ງອາຫານ, ເກັບກູ້ບັນດາເຄື່ອງປ່າຂອງດົງ ແລະ ຫລາຍໆ ກິດຈະກຳອື່ນອີກ ທີ່ສຳຄັນ ແລະ ເປັນທີ່ໜ້າສົນໃຈ ສຳລັບນັກທ່ອງທ່ຽວ.



ເພດຍິງ ມີຄວາມຮູ້ ແລະ ປະສົບການທ້ອງຖິ່ນ ທີ່ສຳຄັນຫລາຍທີ່ສຸດ ເຊັ່ນ: ຊ່າງຕໍ່າຜ້າໄໝ

ທ່ານຄວນພູມໃຈ ກ່ຽວກັບວັດທະນະທຳ, ຄວາມຮູ້ທ້ອງຖິ່ນຂອງຕົນ ແລະ ທ່ານຄວນຈະມີກຳລັງໃຈ ໃຫ້ຂໍ້ມູນເຫລົ່ານີ້ແກ່ຄົນອື່ນ. ທ່ານບໍ່ຄວນໜ້າອາຍ ແລະ ຢ້ານວ່າຄວາມຮູ້ ແລະ ວັດທະນະທຳຂອງທ່ານ ບໍ່ດີພໍ ສຳລັບນັກທ່ອງທ່ຽວ.

*ມັນມີຄວາມຈຳເປັນ ທີ່ຈະປາກພາສາອັງກິດ ຫລື ພາສາຕ່າງປະເທດອື່ນໆ ເຊັ່ນ: ພາສາຝະລັ່ງ, ຍີ່ປຸ່ນ ເພື່ອຈະໄດ້ເປັນ ພະນັກງານນຳທ່ຽວ ແມ່ນບໍ?* ມັນແມ່ນຄວາມຈິງ ທີ່ການປາກພາສາຕ່າງປະເທດໃດໜຶ່ງ ຈະປັບປຸງຄຸນຄ່າຂອງການບໍລິການນຳທ່ຽວຂອງທ່ານ ແລະ ຈະເຮັດໃຫ້ການສື່ສານ ກັບ ນັກທ່ອງທ່ຽວຕ່າງປະເທດມີຊີວິດຊີວາແທ້ໆ. ໂດຍວິທີໃດກໍ່ຕາມ ທ່ານກໍ່ຍັງສາມາດເປັນພະນັກງານນຳທ່ຽວຂັ້ນທ້ອງຖິ່ນ, ເຖິງແມ່ນວ່າທ່ານບໍ່ສາມາດເວົ້າພາສາຕ່າງປະເທດກໍຕາມ. ທ່ານສາມາດນຳໃຊ້ດ້ວຍສອງວິທີຄື: (1) ທ່ານສາມາດນຳໃຊ້ຄວາມຊ່ວຍເຫລືອ ຈາກພະນັກງານນຳທ່ຽວ ທີ່ປາກພາສາຕ່າງປະເທດ ເປັນຜູ້ແປໃຫ້ທ່ານ ຫລື ອາດຈະເປັນພະນັກງານນຳທ່ຽວຂັ້ນແຂວງ ແລະ ຂັ້ນສູນກາງ . (2) ທ່ານສາມາດໃຊ້ສັນຍານ ແລະ ການສາທິດດ້ວຍມືເພື່ອອະທິບາຍ ຄວາມຮູ້ຂອງທ່ານ ແລະ ທ່ານສາມາດເຮັດກິດຈະກຳຮ່ວມກັບນັກທ່ອງທ່ຽວ ເພື່ອສອນເຂົາເຈົ້າກ່ຽວກັບການດຳລົງຊີວິດແບບດັ້ງເດີມ. ( <u>ພວກເຮົາຈະຮຽນຕື່ມອີກ ກ່ຽວກັບຄວາມຮູ້ເຫລົ່ານີ້ ໃນພາກທີ 3</u>).

*ເພດຍິງ ສາມາດເປັນພະນັກງານນຳທ່ຽວ ໄດ້ເໝືອນເພດຊາຍບໍ ?* ຜູ້ຄົນຈຳນວນໜຶ່ງເຊື່ອຖືວ່າ ມີພຽງແຕ່ເພດຊາຍ ທີ່ມີຄວາມສາມາດ ເປັນພະນັກງານນຳທ່ຽວໄດ້ ເພາະວ່າເພດຊາຍແຂງແຮງພຽງພໍທີ່ຈະເປ້ຖືງເຄື່ອງໄດ້ມີແຕ່ເພດຊາຍ ສາມາດຍ່າງທາງໄກ ແລະ ເພດຊາຍເທົ່ານັ້ນມີຂໍ້ມູນທີ່ນັກທ່ອງທ່ຽວຕ້ອງການ. ທັງໝົດຄວາມຄິດເຫລົ່ານີ້ແມ່ນບໍ່ຖືກຕ້ອງ. ຕາມປົກກະຕິແລ້ວ, ເພດຍິງເປ້ ແລະ ຫາບເຄື່ອງຂອງຕ່າງໆ ໜັກຫລາຍໃນແຕ່ລະມື້, ໃນນັ້ນລວມມີ: ເປ້ເຂົ້າ, ເປ້ຟືນ, ຜົນລະປູກຕ່າງໆ, ຫາບນ້ຳ, ເຈ່ຍເດັກນ້ອຍ ແລະ ອື່ນໆ. ໃນຕົວຈິງເພດຍິງຍ່າງທາງໄກຫລາຍ; ເຂົາເຈົ້າກໍຍ່າງໄກຄືກັນກັບເພດຊາຍໃນແຕ່ລະວັນ ເພື່ອໄປນາ,ໄປສວນ, ໄປໄຮ່, ຍ່າງໄປ - ກັບຕະຫລາດ ໃນເມືອງ ແລະ ຍ່າງໄປເກັບພືດ ແລະ ໝາກໄມ້ຢູ່ປ່າ. ຄວາມຮູ້ຂອງເພດຊາຍ ແລະ ເພດຍິງ ແມ່ນເປັນທີ່ໜ້າສົນໃຈເທົ່າທຽມກັນສຳລັບນັກທ່ອງທ່ຽວ. ໃນຕົວຈິງ, ເພດຍິງ ມີຂໍ້ມູນຫລາຍຢ່າງຊຶ່ງເພດຊາຍ ບໍ່ມີ. ຕົວຢ່າງ: ເພດຍິງຮູ້ຫລາຍກ່ຽວກັບການເຮັດປະເພດເຄື່ອງຫັດຖະກຳ ທີ່ແນ່ນອນກວ່າເຂົາເຈົ້າຮູ້ຈັກວິທີການລ້ຽງລູກທີ່ດີກວ່າ ແລະ ເຂົາເຈົ້າຮູ້ຫລາຍກວ່າ ກ່ຽວກັບວຽກສະເພາະ ໃນດ້ານ ກະສິກຳ. ປະມານເຄິ່ງໜຶ່ງ ຂອງຈຳນວນນັກທ່ອງທ່ຽວທັງໝົດ ທີ່ມາຢ້ຽມຢາມ ສປປ ລາວ ແມ່ນເພດຍິງ. ເພາະສະນັ້ນ, ພວກເຮົາສາມາດຄາດຄະເນໄດ້ວ່າ ຢ່າງໜ້ອຍເຄິ່ງໜຶ່ງຂອງຈຳນວນນັກທ່ອງທ່ຽວທັງໝົດທີ່ມາຢ້ຽມຢາມປະເທດລາວ ແມ່ນສົນໃຈໃນການຮຽນຮູ້ ກ່ຽວກັບການດຳລົງຊີວິດຂອງແມ່ຍິງລາວ ແລະ ຕ້ອງການຮຽນໂດຍກົງຈາກເຂົາເຈົ້າເອງ. ດ້ວຍເຫດນັ້ນ, ມັນມີຄວາມສຳຄັນເທົ່າທຽມກັນ ທີ່ປະກອບທັງ ເພດຍິງ ແລະ ເພດຊາຍເຂົ້າເປັນພະນັກງານນຳທ່ຽວ ແລະ ເປັນຜູ້ແປພາສາ.

*ບົດເຝິກຫັດ #4*

ຈົ່ງຂຽນລາຍການ ກ່ຽວກັບບາງຂໍ້ຫ້າມ (ສິ່ງຂະລຳ) ທົ່ວໄປ ໃນບ້ານຂອງທ່ານ. ທ່ານສາມາດຄິດເອົາ ບັນດາກິດຈະກຳໃດໜຶ່ງ ທີ່ທ່ານອາດບໍ່ຕ້ອງການ ໃຫ້ນັກທ່ອງທ່ຽວເຂົ້າຮ່ວມ ຫລື ຂໍ້ມູນໃດໜຶ່ງ ທີ່ທ່ານ ບໍ່ຢາກອະທິບາຍ ໃຫ້ນັກທ່ອງທ່ຽວຮັບຮູ້, ມີກິດຈະກຳ ຫລື ຂໍ້ມູນໃດແດ່ ?

ພະນັກງານນຳທ່ຽວຂັ້ນທ້ອງຖິ່ນສອງທ່ານ ຢູ່ເມືອງ ສິງ, ແຂວງ ຫລວງນ້ຳທາ ອະທິບາຍ ປະຫວັດຂອງ ບ້ານ ພູລີໃຫຍ່, ບ້ານ ເລົ້າເຂົ້າ,ຕັ້ງຢູ່ເສັ້ນທາງເດີນປ່າສຳລັບໜຶ່ງວັນຂອງເຂົາເຈົ້າ. ພາຍຫລັງມາເຖິງເຂດບ້ານເກົ່າ, ຕັ້ງຢູ່ຈອມພູເບື້ອງເທິງຂອງບ້ານໃໝ່, ພວກເຂົາ ໄດ້ອະທິບາຍດັ່ງລຸ່ມນີ້.

" ຫລາຍປີຜ່ານມາ, ບ້ານນີ້ໄດ້ຕັ້ງຢູ່ໃກ້ກັບນ້ຳແດງປະມານ ສອງ ຫາ ສາມ ກິໂລແມັດ ຫ່າງຈາກນີ້. ບົດເລື່ອງໄດ້ກ່າວວ່າ: ພະຍາດລະບາດໄດ້ເກີດຂຶ້ນໃນບ້ານ ພາຍຫລັງການເຮັດພິທີຝັງສົບແບບບໍ່ຖືກຕ້ອງ. ຈາກຫລາຍກວ່າຫ້າສິບຄອບຄົວ ທີ່ອາໃສຢູ່ບ້ານເດີມ, ລອດຊີວິດພຽງແຕ່ສິບຄອບຄົວເທົ່ານັ້ນ. ເຂົາເຈົ້າໄດ້ຍົກຍ້າຍມາຢູ່ເທິງຈອມພູແຫ່ງນີ້ເພື່ອໜີຈາກພະຍາດພະຍາດລະບາດ. ຊາວບ້ານໄດ້ ດຳລົງຊີວິດຢູ່ ເຂດນີ້ໄດ້ຫລາຍປີແລ້ວ. ຫລັງຈາກນັ້ນ, ປະມານສິບສີ່ປີຜ່ານມາ ພັດເກີດໄຟໄໝ້ບ້ານ. ຊາວບ້ານຈຳນວນໜຶ່ງໄດ້ ຕັ້ງຖິ່ນຖານໃໝ່ຢູ່ບ້ານອື່ນໆທີ່ໃກ້ຄຽງ. ສ່ວນຊາວບ້ານທີ່ຍັງເຫລືອ ໄດ້ຍົກຍ້າຍໄປຢູ່ເຂດທົ່ງພຽງ, ຊຶ່ງເປັນເຂດບ້ານໃນປະຈຸບັນ. ເຂົາເຈົ້າເລືອກສະຖານທີ່ໃໝ່ ເພື່ອວ່າ ຈະໄດ້ຢູ່ໃກ້ກັບທົ່ງນາ ທີ່ເຂົາເຈົ້າເຮັດການຜະລິດ. ການຍົກຍ້າຍຄັ້ງນີ້ ໄດ້ເຮັດໃຫ້ການດຳລົງຊີວິດປະຈຳວັນຂອງເຂົາເຈົ້າສະດວກ ແລະ ອຸດົມສົມບູນຂຶ້ນຕື່ມ, ເພາະປະຈຸບັນນີ້ ເຂົາເຈົ້າເຮັດນາແທນ ການເຮັດໄຮ່ ແລະ ເຂົາເຈົ້າກໍບໍ່ໄດ້ຍ່າງໄກກວ່າຈະໄປເຖິງທົ່ງນາຂອງເຂົາເຈົ້າເອງ".

*ບົດເຝິກຫັດ #5*

ຈົ່ງຂຽນປະຫວັດຫຍໍ້ຂອງບ້ານທ່ານ. ບໍ່ພຽງແຕ່ອະທິບາຍ ບ້ານຂອງທ່ານຍ້າຍມາເມື່ອໃດ ແລະ ມາຈາກໃສ ແຕ່ ຍ້ອນຫຍັງ ບ້ານຂອງທ່ານຈຶ່ງຕັ້ງຢູ່ໃນສະຖານທີ່ປະຈຸບັນນີ້.

## ຕົວຢ່າງ : ແກ້ງ ປະຫອດ ( ຫອດໜຶ້ງເຂົ້າ)

ສະຖານທີ່ຕ່າງໆ ໄດ້ຖືກຕັ້ງຊື່ພາຍຫລັງບັນດາເຫດການ ໄດ້ເກີດຂຶ້ນຢູ່ເຂດດັ່ງກ່າວ. ຕາມລຳແມ່ນ້ຳເຊບັ້ງຫຽງ ແຂວງສະຫວັນນະເຂດ ມີແກ້ງເຂດໜຶ່ງຖືກໃສ່ຊື່ວ່າ: "ແກ້ງ ປະຫອດ" . ປະຊາຊົນທ້ອງຖິ່ນເວົ້າວ່າ ແກ້ງໄດ້ຖືກຕັ້ງຊື່ນີ້ຍ້ອນວ່າຫລາຍປີທີ່ຜ່ານມາ, ເມື່ອຊາວບ້ານຈຳນວນ ໜຶ່ງໄດ້ໄປຫາປາໃນເຂດນັ້ນ, ພວກເຂົາໄດ້ເຊື່ອງເຂົ້າໜຽວຈຳນວນໜຶ່ງໃນຫ່ວາງຫີນຂອງແກ້ງ. ບັນດາກ້ອນຫີນສະອາດ, ແຫ້ງ ແລະ ຂະໜາດ ພໍດີເພື່ອປະຫອດໜຶ້ງເຂົ້າທີ່ເຕັມໄປດ້ວຍເຂົ້ານັ້ນໄວ້ ໃຫ້ອອກຈາກເປົ້າສາຍຕາຂອງຝູງນົກ ຊຶ່ງອາດຈະມາກິນເຂົ້າ. ບັນຫາກໍໄດ້ເກີດຂຶ້ນ ຢ່າງໃດກໍຕາມ ເມື່ອເຂົາເຈົ້າສຳນຶກໄດ້ວ່າ ຕົນເອງໄດ້ເຊື່ອງເຂົ້າໄວ້ດີໂພດ ຈົນເຮັດໃຫ້ພວກເຂົາລືມຊອກຫາມັນ. ບັນດາຊາວບ້ານຈື່ໄດ້ວ່າ ວັນນັ້ນພວກເຂົາ
ຍັງບໍ່ທັນໄດ້ກິນ. ຕັ້ງແຕ່ນັ້ນມາ, ແກ້ງນັ້ນ ໄດ້ຖືກຂະໜານນາມວ່າ ແກ້ງ ປະຫອດ ( ແກ້ງ ບ່ອນທີ່ຫອດໜຶ້ງເຂົ້າຖືກປະໄວ້).



ແກ້ງ ປະຫອດ

ທຸກວັນນີ້, ເມື່ອນັກທ່ອງທ່ຽວລ່ອງເຮືອຕາມແມ່ນ້ຳດັ່ງກ່າວ, ເຂົາເຈົ້າມັກລົງຈາກເຮືອຢູ່ບ່ອນນີ້. ເພື່ອວ່າໃຫ້ຜູ້ຂັບເຮືອສາມາດນຳພາເຮືອຂອງຕົນ ໄປຫວິດແກ້ງຢ່າງປອດໄພ. ແນ່ນອນ, ເມື່ອນັກທ່ອງທ່ຽວລົງຈາກເຮືອ, ເຂົາເຈົ້າມັກຈະເປີຫລື ຫິ້ວເຄື່ອງຂອງໄປນຳສະເໝີ ແລະ ກໍ່ມັກວາງສິ່ງຂອງ

## *ຮູບແບບການປຸກເຮືອນ*

ບັນດາເຮືອນຊານໃນປະເທດລາວ ແມ່ນມີຄວາມແຕກຕ່າງ ແລະ ເປັນເອກະລັກ, ຊຶ່ງແຕກຕ່າງຈາກເຮືອນຊານໃນປະເທດອື່ນໆ. ວິທີການປຸກສ້າງຂອງເຂົາເຈົ້າ ກໍ່ມີເອກະລັກເຊັ່ນກັນ. ທ່ານ ສາມາດອະທິບາຍ, ຕົວຢ່າງ: ຮູບຮ່າງລັກສະນະອັນໃດຂອງເຮືອນທ່ານ ທີ່ແຕກຕ່າງຈາກບັນດາເຮືອນຂອງເຜົ່າອື່ນໆໃນປະເທດລາວ. ຕົວຢ່າງ: ທ່ານອາດຈະອະທິບາຍ ວິທີການປຸກເຮືອນ ຫລື ວິທີມຸງຫລັງຄາ(ນັກທ່ອງທ່ຽວ ສ່ວນຫລວງຫລາຍ ບໍ່ເຄີຍເຫັນຫລັງຄາທີ່ເຮັດດ້ວຍຫຍ້າມຸງແບບໃດ). ທ່ານ ຍັງສາມາດອະທິບາຍເພີ່ມເຕີມອີກວ່າ ເຮືອນຫລັງໜຶ່ງຍ້າຍໄດ້ດ້ວຍວິທີໃດ (ບັນດາເຮືອນຊານ ຂອງຫລາຍປະເທດໃນໂລກ ແມ່ນບໍ່ເຄີຍຍ້າຍໄດ້). ແຕ່ມັນກໍ່ມີຄວາມເປັນໄປໄດ້ຫລາຍຢ່າງ.

### ຕົວຢ່າງ: ວິທີການປຸກເຮືອນ ເພື່ອປ້ອງກັນແມງໄມ້ຊະນິດຕ່າງໆ

ຊາວບ້ານ ຂອນ, ບ້ານໄທຍວນສ່ວນຫລວງຫລາຍ ຕັ້ງຢູ່ຕົວເມືອງ ນ້ຳທາ, ປະເພນີ ຫລື ຮີດຄອງເດີມການປຸກເຮືອນ ຂອງເຂົາເຈົ້າ ແມ່ນ ໃຊ້ປະເພດໄມ້ໄຜ່ສຳລັບເຮັດຝາເຮືອນ ແລະ ໄມ້ຊະນິດອື່ນໆ ສຳລັບເຮັດຂອບ ແລະ ເສົາເຮືອນ. ເຂົາເຈົ້າປຸກເຮືອນຕີນເອງເທິງໜ້າດິນ, ການອອກແບບກໍ່ສ້າງທີ່ເຄີຍເຮັດຜ່ານມາ ໄດ້ຖືກນຳໃຊ້ໃນທົ່ວປະເທດລາວ ເພື່ອໃຫ້ເປັນສະຖານທີ່ ສຳລັບເກັບມ້ຽນ ເຄື່ອງຂອງຕ່າງໆ ຢູ່ກ້ອງຕະລ່າງເຮືອນ, ຮົ່ມສຳລັບເດືອນທີ່ມີອາກາດຮ້ອນ ແລະ ປ້ອງກັນຈາກນ້ຳຖ້ວມ. ຍ້ອນວ່າບັນດາເຮືອນ ທີ່ເຮັດດ້ວຍວັດຖຸຕ່າງໆ ຈາກທຳມະຊາດມັນຈຶ່ງຖືກທຳລາຍງ່າຍຈາກ ແມງໄມ້ຊະນິດຕ່າງໆ.



ການສານຝາເຮືອນ ດ້ວຍໄມ້ໄຜ່

ເພື່ອປ້ອງກັນຝາໄມ້ໄຜ່ ຈາກການກິນຂອງແມງໄມ້ຊະນິດໜຶ່ງ ທີ່ຮູ້ຈັກກັນດີຄື: *ແມງມອດ,* ບັນດາຊາວບ້ານເວົ້າວ່າ ມີສາມຢ່າງ ທີ່ຈຳເປັນຕ້ອງເຮັດ. ຂັ້ນຕອນທຳອິດ, ໄມ້ໄຜ່ສຳລັບຝາເຮືອນ ຕ້ອງຕັດໃນໄລຍະເດືອນທີ່ມີອາກາດເຢັນຂອງປີ, ດີທີ່ສຸດແມ່ນ ໄລຍະເດືອນ ພະຈິກ ເຖິງເດືອນ ກຸມ ພາ. ໄມ້ໄຜ່ຄວນເອົາມາຈາກປ່າ, ມັນຈະທົນກວ່າໄມ້ໄຜ່ທີ່ປູກຢູ່ໃນບ້ານ ຫລື ເຂດອ້ອມແອ້ມບ້ານຂອງທ່ານ. ຂັ້ນຕອນສຸດທ້າຍ, ຫລັງຈາກຖືກຕັດ, ໄມ້ໄຜ່ຄວນຈະແຊ່ຢູ່ໃນນ້ຳສິບວັນ, ກ່ອນຈະນຳໄປຕາກແຫ້ງ ແລະ ນຳໄປສານເຮັດຝາ ຫລື ຫລັງຄາ. ຖ້າຕັດໄມ້ໄຜ່ໃນລະດູຮ້ອນ ຫລື ລະດູຝົນ ຫລື ເອົາມາຈາກ ຮ້ານຂາຍໄມ້ໄຜ່ ທີ່ຕັ້ງຢູ່ໃນບ້ານ ຫລື ບໍ່ໄດ້ຖືກແຊ່ນ້ຳກ່ອນ ຈະຖືກນຳໄປໃຊ້, ໄມ້ໄຜ່ຈະເປັນບ່ອນອາໃສຂອງ *ແມງມອດ* ແລະ ຈະຖືກກິນຢ່າງໄວວາພາຍຫລັງການກໍ່ສ້າງສິ້ນສຸດລົງ.



ນາງ ແປງ ທະວີວັນ ແລະ ຄອບຄົວຂອງລາວ

ຊົນເຜົ່າຂະມຸ ແລະ ໄທລື້ ເປັນສອງຊົນເຜົ່າ ຢູ່ໃນເມືອງ ວຽງພູຄາ, ແຂວງ ຫລວງນ້ຳທາຊຶ່ງມີເອກະລັກອັນເກົ່າແກ່ ທີ່ຕິດພັນກັບສຸຂະພາບ ຂອງແມ່ຍິງໃນໄລຍະຢູ່ກຳ. ທ່ານ ນ. ແປງ ທະວີວັນ ແມ່ນຊາວບ້ານໄທລື້ ແລະ ທ່ານ ສີຄຳ ເປັນພະນັກງານ ນຳທ່ຽວຂັ້ນທ້ອງຖິ່ນ(ຂັ້ນບ້ານ), ສົມທຽບຄວາມແຕກຕ່າງລະຫວ່າງຂໍ້ຫ້າມ ຫລື ສິ່ງຂະລຳຕ່າງໆ ແລະ ພາກປະຕິບັດຕົວຈິງພາຍຫລັງການເກີດລູກດ້ວຍຮູບແບບຂອງແຕ່ລະຊົນເຜົ່າ ຂອງເຂົາເຈົ້າ.

## ສົມທຽບການປິ່ນປົວແບບພື້ນເມືອງ ສຳລັບແມ່ຍິງທີ່ເກີດລູກໃໝ່ ແລະ ຂໍ້ຫ້າມ (ສິ່ງຂະລຳ) ຕ່າງໆ ພາຍຫລັງການອອກລູກ ສາມມື້ທຳອິດ

| ຊົນເຜົ່າຂະມຸ | ຊົນເຜົ່າໄທລື້ |
|---|---|
| • ພັນລະຍາຢູ່ກຳ ແລະ ຜູ້ເປັນສາມີ ບໍ່ໄດ້ຮັບອະນຸຍາດໃຫ້ກິນຊີ້ນ, ເຂົາເຈົ້າໄດ້ຮັບອະນຸຍາດໃຫ້ກິນເຂົ້າລ້າໆ ກັບເກືອ ແລະ ນ້ຳເທົ່ານັ້ນ.<br>• ຜູ້ເປັນສາມີ ອາດຊ່ວຍພັນລະຍາປຸງແຕ່ງອາຫານ ແລະ ວຽກເຮືອນຕ່າງໆ. ບັນດາພີ່ນ້ອງຄົນອື່ນທີ່ເປັນເພດຍິງ ເຊັ່ນ: ແມ່ຂອງເມຍ (ແມ່ເຖົ້າ)ກໍຊ່ວຍຄືກັນ. | • ພັນລະຍາຢູ່ກຳ ບໍ່ໄດ້ຮັບອະນຸຍາດໃຫ້ກິນຊີ້ນຊະນິດໃດເລີຍ ນອກຈາກຊີ້ນໄກ່ (ແຕ່ບໍ່ແມ່ນ ໄກ່ສີຂາວ), ສ່ວນ ຜູ້ເປັນສາມີ ແມ່ນໄດ້ຮັບອະນຸຍາດໃຫ້ກິນຊີ້ນໄດ້.<br>• ໃນມື້ທຳອິດ, ມີແຕ່ພີ່ນ້ອງຂອງຝ່າຍຍິງທີ່ໄດ້ຮັບອະນຸຍາດມາຢ້ຽມຢາມແມ່ຢູ່ກຳ ແລະ ຊ່ວຍປຸງແຕ່ງອາຫານ. |
| **ໄລຍະບໍ່ມີການເຄື່ອນໄຫວ (ຄ້ຳເດືອນ)** | |
| • ໄລຍະທີ່ບໍ່ມີການເຄື່ອນໄຫວແມ່ນຄິດໄລ່ຕາມອາທິດຂອງເຜົ່າຂະມຸ, ຊຶ່ງເປັນສິບວັນ (ບໍ່ແມ່ນເຈັດວັນ).<br>• ທັງສອງຄົນ ພັນລະຍາຢູ່ກຳ ແລະ ຜູ້ເປັນສາມີ ບໍ່ຄວນເຄື່ອນໄຫວໃນໄລຍະນີ້.<br>• ໄລຍະທີ່ບໍ່ໄດ້ເຄື່ອນໄຫວ ໄດ້ແບ່ງອອກເປັນ ສາມໄລຍະ, ແຕ່ລະໄລຍະມີສິບວັນ ຊຶ່ງນອນຢູ່ໃນຕົວເລກລວມຂອງ ສາມສິບວັນ. ຢູ່ລະຫວ່າງທຸກໆ ສິບວັນ, ຝ່າຍຊາຍ ໄດ້ຮັບອະນຸຍາດອອກໄປຂ້າງນອກ ເພື່ອເກັບຫ້ອນອາຫານໄວ້ ສຳລັບໄລຍະ ທີ່ບໍ່ໄດ້ເຄື່ອນໄຫວ ໃກ້ຈະມາເຖິງນີ້ .<br>• ໄລຍະນີ້ ຜູ້ເປັນພໍ່ຂອງເດັກ ບໍ່ຄວນຕອກຕະປູ ຫລື ເຮັດວຽກທີ່ໃຊ້ແຮງງານໜັກ ອ້ອມແອ້ມເຮືອນ. | • ໄລຍະທີ່ບໍ່ໄດ້ເຄື່ອນໄຫວ ແມ່ນປະມານໜຶ່ງເດືອນສຳລັບແມ່ຍິງທີ່ເກີດລູກຄົນທຳອິດ ແລະ ປະມານສາມອາທິດ ຫລື ໜ້ອຍກວ່ານັ້ນ ສຳລັບແມ່ຍິງທີ່ມີລູກຄົນທີສອງ.<br>• ໄລຍະນີ້ ຍັງເຫລືອແຕ່ ພັນລະຍາຢູ່ກຳ ທີ່ຍັງບໍ່ທັນໄດ້ເຄື່ອນໄຫວ.<br>• ຝ່າຍຊາຍ ໄດ້ຮັບອະນຸຍາດໃຫ້ເຮັດວຽກທີ່ໃຊ້ແຮງງານໜັກໄດ້ ເຊັ່ນ ການປຸກສ້າງສິ່ງຕ່າງໆອ້ອມແອ້ມເຮືອນ. |

| | |
|---|---|
| o ຊີ້ນຄວາຍ ແລະ ຊີ້ນໝູ ສາມາດກິນໄດ້ພາຍຫລັງ ເກີດລູກໄດ້ຫົກເດືອນ, ຍົກເວັ້ນແມ່ຂອງເດັກອ່ອນເພຍ, ໃນກໍລະນີນີ້ ລາວຕ້ອງລໍຖ້າໜຶ່ງປີ (ບໍ່ສາມາດກິນຄວາຍດ່ອນໄດ້).<br>o ບັນດາງົວ, ແບ້, ໝາສາມາດກິນໄດ້ພາຍຫລັງເກີດລູກໄດ້ສາມປີ.<br>o ບັນດາສັດເພດແມ່ ແມ່ນບໍ່ອະນຸຍາດໃຫ້ກິນໃນໄລຍະຂະລໍາ. | |
| **ບັນດາພິທີທາງສາດສະໜາ** | |
| • ບໍ່ມີພິທີສະຫລອງ ບໍ່ວ່າກ່ອນ ຫລື ຫລັງການຄໍ້າກໍາ. | • ພິທີ *ບາສີ* ຖືກຈັດຂື້ນພາຍຫລັງ ແມ່ຂອງເດັກສິ້ນສຸດ ໄລຍະການຄໍ້າກໍາ. |

ສໍາລັບນັກທ່ອງທ່ຽວ ມີຫລາຍບົດຮຽນ ທີ່ຮຽນໄດ້ຈາກປະເພນີຕ່າງໆເຫລົ່ານີ້, ຊຶ່ງພະນັກງານນໍາທ່ຽວ ອາດຈະອະທິບາຍດັ່ງຕໍ່ໄປນີ້: ພາຍຫລັງເກີດລູກ ແມ່ຍິງຕ້ອງພັກຜ່ອນ ເພື່ອຍືດເວລາອອກໄປ ໂດຍບໍ່ຕ້ອງເຮັດວຽກ. ລາວຕ້ອງດື່ມຂອງແຫລວທີ່ອຸ່ນ, ຊຶ່ງໄດ້ຕົ້ມແລ້ວ (ເພື່ອຂ້າເຊື້ອ ພະຍາດ ແລະ ຊ່ວຍການຜະລິດນໍ້ານົມຈາກເຕົ້າ). ຜູ້ເປັນພັນລະຍາຕ້ອງຢູ່ອຸ່ນ ດ້ວຍການອາບນໍ້າຮ້ອນເຊັ່ນກັນ ຫລື ຈາກຖ່ານໄຟຮ້ອນ ທີ່ວາງໄວ້ຢູ່ກ້ອງຕຽງນອນ. ຜູ້ເປັນສາມີກໍ່ຕ້ອງຊ່ວຍ ເທົ່າທີ່ຈະຊ່ວຍໄດ້. ຊີ້ນສັດຊະນິດຕ່າງໆ, ຊຶ່ງມັກນໍາເຊື້ອພະຍາດຊະນິດຕ່າງໆ ຕ້ອງເອົາໄວ້ຫ່າງຈາກຜູ້ເປັນແມ່ ແລະ ລູກນ້ອຍຂອງລາວ ທີ່ຫາກໍ່ເກີດ ໂດຍການຈໍາກັດສິ່ງດັ່ງກ່າວນັ້ນ ອອກຈາກເຂດ, ບ່ອນທີ່ແມ່ຂອງເດັກ ພັກຜ່ອນຢູ່.

*ບົດເຝິກຫັດ #9*

ມີບັນດາຂໍ້ຫ້າມ ຫລື ພາກປະຕິບັດຕົວຈິງ ທີ່ພິເສດໃດແດ່, ຊຶ່ງກ່ຽວຂ້ອງ ສໍາລັບການຢູ່ກໍາ (ຄໍ້າເດືອນ) ໃນບ້ານ ຫລື ວັດທະນະທໍາຂອງທ່ານ ? ທ່ານໄດ້ໃຊ້ຢາພື້ນເມືອງພິເສດ ຫຍັງແດ່ ສໍາລັບແມ່ ຫລື ເດັກ ພາຍຫລັງການເກີດ ? ຈົ່ງອະທິບາຍ.

**ຕົວຢ່າງ :** **ຢາພື້ນເມືອງ ຂອງເຜົ່າມົ້ງ**

ທ່ານ ນ. ຢີ ຢູ່ບ້ານ ທ່າຫລວງ, ເປັນບ້ານເຜົ່າມົ້ງ ໃນ ເມືອງ ວຽງພູຄາ, ແຂວງ ຫລວງນໍ້າທາ ລາວເປັນໝໍຜີ. ເຖິງວ່າໝໍຜີຫລາຍຄົນ ແມ່ນຜູ້ຊາຍ ແຕ່ກໍມີຈໍານວນໜ້ອຍ ທີ່ເປັນເພດຍິງ. ບັນດາຊາວບ້ານອະທິບາຍວ່າ ມັນບໍ່ມີຄວາມຈໍາເປັນ ສໍາລັບການຝຶກອົບຮົມແບບທາງການ ເພື່ອຈະກາຍເປັນໝໍຜີ, ແຕ່ຂຶ້ນກັບຄວາມຕ້ອງການຫລາຍກວ່າວ່າ ວິນຍານຜີນັ້ນ ຕ້ອງການຢາກຈະຢູ່ກັບທ່ານ. ໃນຕົວຈິງ, ບັນດາໝໍຜີ ແມ່ນໄດ້ຖືກເລືອກໂດຍວິນຍານຜີ (ຜີ) . ມັນໄດ້ແປດປີມາແລ້ວ, ເມື່ອນາງ ຢີ ສໍານຶກໄດ້ຄັ້ງທໍາອິດວ່າມີບາງຢ່າງທີ່ແຕກຕ່າງ, ນາງໄດ້ມີຄວາມຮູ້ສຶກຫລາຍຢ່າງ ທີ່ແຕກຕ່າງ ແລະ ບັນດາປະກົດການແປກໆເກີດຂື້ນ. ນາງໄດ້ປຶກສາໝໍຜີ



ນາງ ຢີ ພ້ອມດ້ວຍສາມີຂອງລາວ

ອາຫານນັ້ນ ມາຈາກໃສ ມີຫລາຍຂໍ້ມູນທີ່ກ່າວມານີ້ ເປັນຄວາມຮູ້ທົ່ວໄປ ສຳລັບຄົນລາວ, ແນ່ນອນ ມັນກໍ່ເປັນສິ່ງທີ່ພິເສດ ແລະ ໃໝ່ ສຳລັບນັກທ່ອງທ່ຽວ. ຄວນອະທິບາຍໃຫ້ນັກທ່ອງທ່ຽວຢູ່ສະເໝີ ທ່ານເຫັນຫຍັງແດ່ຢູ່ໃນທົ່ງນາຕ່າງໆ, ເຖິງແມ່ນວ່າ ມັນເບິ່ງຄື ເປັນເລື່ອງທຳມະດາກໍ່ຕາມ, ທ່ານຈະຄົ້ນພົບວ່າ ນັກທ່ອງທ່ຽວສ່ວນຫລາຍແມ່ນສົນໃຈ, ເຖິງວ່າ ເປັນຄວາມຮູ້ທາງດ້ານກະສິກຳ ແບບທຳມະດາທີ່ສຸດຂອງທ່ານກໍຕາມ.

**ຕົວຢ່າງ:** ວິທີປູກເຂົ້າ (ດຳນາ)

ທ່ານ ບົວເກດ ເປັນພະນັກງານນຳທ່ຽວຂັ້ນທ້ອງຖິ່ນ ຮ່ວມກັບໜ່ວຍບໍລິການນຳທ່ຽວ ຫລວງນ້ຳທາ, ລາວປູກເຂົ້າທຸກໆປີເພື່ອລ້ຽງຄອບຄົວ. ເມື່ອຍ່າງຮ່ວມກັບນັກທ່ອງທ່ຽວຜ່ານບັນດາທົ່ງນາ ລາວມັກຈະຖືກຖາມ ດ້ວຍຄຳຖາມຕ່າງໆກ່ຽວກັບເຂົ້າເຊັ່ນ: " ເຂົ້າໜຽວ ແລະ ເຂົ້າຈ້າວຄື ກັນບໍ ? " ຫລື " ເດືອນໃດປູກ ແລະ ເດືອນໃດເກັບກ່ຽວ? ". ບົວເກດປະຈຸບັນນີ້ ໄດ້ໃຫ້ ການອະທິບາຍຢ່າງລະອຽດແກ່ນັກທ່ອງທ່ຽວ ກ່ຽວກັບການເຮັດນາ ເມື່ອລາວມາເຖິງທົ່ງນາ ໃນເວລາເດີນທາງທ່ອງທ່ຽວແຕ່ລະຄັ້ງ. ລາວອະທິບາຍບັນດາຂັ້ນຕອນການປູກເຂົ້າ ດັ່ງຕໍ່ນີ້:

## ບັນດາຂັ້ນຕອນການປູກເຂົ້ານາ (ດຳນາ)

1. ຕາມທຳມະດາແລ້ວ ພວກເຮົາເລີ່ມເຮັດວຽກໃນເດືອນມິຖຸນາ, ພວກເຮົາເລີ່ມຕົ້ນ ດ້ວຍການກະກຽມຄູກັ້ນນ້ຳຢູ່ຕາມທົ່ງນາຕ່າງໆ. ວຽກນີ້ເປັນວຽກປະຈຳ ເຮັດໂດຍເພດຊາຍ, ແຕ່ບາງຄັ້ງຄາວເພດຍິງກໍຊ່ວຍຄືກັນ. ແຕ່ສິ່ງທີ່ສຳຄັນຄວນຕ້ອງອະນາໄມ ບັນດາຮ່ອງຊົນລະປະທານ ເພື່ອໃຫ້ນ້ຳໄຫລເຂົ້າທົ່ງນາສະດວກ.
2. ຂັ້ນຕອນຕໍ່ໄປແມ່ນເຮັດໃຫ້ດິນອ່ອນ ໂດຍການເອົານ້ຳເຂົ້ານາ. ພວກເຮົາເປີດຮ່ອງຊົນລະປະທານ ເພື່ອປ່ອຍນ້ຳເຂົ້າທົ່ງນາ.
3. ການກະກຽມຂັ້ນຕໍ່ໄປ, ນາທົ່ງຕ່າງໆ ແມ່ນຖືກພວນດິນ. ຕາມປະເພນີດັ້ງເດີມ, ທົ່ງນາ ແມ່ນໄຖໂດຍເພດຊາຍ ຊຶ່ງໃຊ້ຄວາຍລາກໄຖ ທີ່ເຮັດດ້ວຍໄມ້. ແນວໃດກໍ່ຕາມ, ສະໄໝນີ້ຫລາຍຄົນກຳລັງເລີ່ມໃຊ້ລົດໄຖ, ແຕ່ບາງຄົນທີ່ບໍ່ມີເງິນພຽງພໍກໍ່ຍັງໃຊ້ຄວາຍໄຖນາ.



ການກະກຽມດິນນາ




ການໄຖນາແບບປະເພນີ
ດັ້ງເດີມ ໂດຍໃຊ້ຄວາຍ

4. ພວກເຮົາກະກຽມດິນຕອນໜຶ່ງ ໂດຍຮົດນ້ຳໃຫ້ປຽກ ແລະ ເຮັດໃຫ້ມັນເປັນຂີ້ຕົມ, ດິນຕອນນີ້ ແມ່ນໃຊ້ເພື່ອກ້າເຂົ້າ (ຫວ່ານກ້າ).
5. ຂັ້ນຕອນຕໍ່ໄປ, ພວກເຮົາເອົາເຂົ້າເປືອກຈຳນວນໜຶ່ງ ທີ່ໄດ້ສະສົມໄວ້ ຈາກລະດູການຜ່ານມາ ແລະ ແຊ່ນ້ຳໄວ້ ປະມານສອງຄືນ - ໜຶ່ງມື້. ຕາມປົກກະຕິແລ້ວ ວຽກນີ້ແມ່ນເຮັດໂດຍ ເພດຍິງ.
6. ຫລັງຈາກນັ້ນ, ພວກເຮົາເອົາເຂົ້າເປືອກທີ່ຖືກແຊ່ນັ້ນ ແລ້ວນຳໄປປູກໃສ່ດິນຕອນທີ່ກະກຽມ ສຳລັບຫວ່ານກ້າ. ວຽກນີ້ກະກຽມໂດຍເພດຍິງ, ແຕ່ເພດຊາຍກໍຊ່ວຍເພດຍິງເໝືອນກັນ.
7. ພວກເຮົາລໍຖ້າປະມານໜຶ່ງເດືອນ ຈົນເຖິງ ກ້າສູງຂຶ້ນປະມານ 20 - 30 ຊມ.
8. ພວກເຮົາລະບາຍນ້ຳເຂົ້ານາ ໃຫ້ຖ້ວມດິນອີກ ແລະ ພວນດິນອີກເທື່ອໃໝ່, ຄູນດິນຕົມຂຶ້ນ ເພື່ອງ່າຍໃນການຍ້າຍກ້າ. ຫຍ້າຊະນິດຕ່າງໆ ທີ່ປົ່ງຕາມແຄມຄັນນາຕ້ອງໄດ້ຖາງ, ວຽກນີ້ ປົກກະຕິແລ້ວ ແມ່ນເພດຊາຍເປັນຜູ້ເຮັດ.



ແມ່ຍິງ ແລະ ຜູ້ຊາຍ
ກຳລັງມັດກ້າ

ບາງຄັ້ງຄາວຕ້ອງໄດ້ຂາຍຄວາຍ ໃຫ້ກັບຊາວບ້ານ ຢູ່ເບື້ອງແຜ່ນດິນໃຫຍ່ ຟາກກົງກັນຂ້າມ. ນີ້ໝາຍຄວາມວ່າ ເຂົາເຈົ້າຕ້ອງເອົາຄວາຍລອຍຂ້າມໄປຟາກແຜ່ນດິນໃຫຍ່. ຢູ່ບ່ອນນີ້ ຊາວບ້ານມີຄວາມສ່ຽງທີ່ຈະເສຍສິນຄ້າລາຄາແພງ ໃຫ້ແກ່ຫາງທີ່ມີໄລຕອດ ຂອງປາຝາໄລ. ຊາວບ້ານເວົ້າວ່າ ເຂົາເຈົ້າມີຢາ ໄລ່ປາຝາໄລ ທີ່ເປັນພືດທຳມະຊາດ (ປ້ອງກັນບໍ່ໃຫ້ປາຝາໄລຕອດ ໂຕຄວາຍ) ແລະ ໄດ້ນຳໃຊ້ວິທີນີ້ ເພື່ອປ້ອງກັນຄວາຍຂອງເຂົາເຈົ້າ ມາແຕ່ດົນນານກວ່າທຸກຄົນຈະຈຳໄດ້.

ກ່ອນຄວາຍແຕ່ລະໂຕ ຈະຕ້ອງລອຍຂ້າມນ້ຳ, ເອົາເຄືອຕົດໝາມັດຮອບຄໍມັນ. ເຄືອນີ້ມີທົ່ວໄປ ໃນພາກໃຕ້ຂອງປະເທດລາວ ແລະ ເປັນທີ່ຮູ້ຈັກກັນດີ ຂອງຄົນທ້ອງຖິ່ນທັງໝົດ, ເພາະວ່າ ໃບຂອງມັນມີກິ່ນຄືກັບຕົດໝາ ເມື່ອຖືກຍ່ອງ. ໃນຕົວຈິງ, ຊື່ທ້ອງຖິ່ນ ສຳລັບເຄືອນີ້ ເອີ້ນວ່າ: *ເຄືອຕົດໝາ*. ຊາວບ້ານເວົ້າວ່າ ປາຝາໄລ ຊັງກິ່ນເຄືອຕົດໝາ ແລະ ຈະບໍ່ເຂົ້າໄປໃກ້ໂຕຄວາຍ ທີ່ມີເຄືອ ດັ່ງກ່າວ ມັດອ້ອມຄໍຂອງມັນຢູ່.

ໃຫ້ທ່ານຄິດ ກ່ຽວກັບຢາພື້ນເມືອງທ້ອງຖິ່ນ ທີ່ທ່ານນຳໃຊ້ເພື່ອປິ່ນປົວສັດລ້ຽງ, ໄກ່ ຫລື ສັດ ?.

*ບົດເຝິກຫັດ #12*

## ດ້ານອາຫານ

ຄົນລາວສ່ວນຫລວງຫລາຍ ຍັງເຊື່ອວ່າ ບັນດານັກທ່ອງທ່ຽວ ບໍ່ກິນເຂົ້າໜຽວໄດ້, ຊຶ່ງເຂົາເຈົ້າ ກໍ່ບໍ່ສາມາດ ກິນອາຫານເຜັດ. ເພາະສະນັ້ນ, ພວກເຂົາ ກໍ່ບໍ່ຕ້ອງການກິນອາຫານຕ່າງໆ ຂອງທ້ອງຖິ່ນພວກເຮົາ. ແຕ່ພວກເຮົາຈະຮູ້ໄດ້ແນວໃດ ຖ້າພວກເຮົາ ບໍ່ອະນຸຍາດໃຫ້ນັກທ່ອງທ່ຽວ ຄົນໃດຄົນໜຶ່ງ ລອງຊີມອາຫານລາວ ດ້ວຍຕົວເຂົາເຈົ້າເອງ ? ນັກທ່ອງທ່ຽວ ສ່ວນຫລວງຫລາຍ ໄດ້ເດີນທາງໄປ ທົ່ວປະເທດລາວ, ກິນອາຫານໃນຮ້ານຕ່າງໆ ແລະ ບໍ່ເຄີຍມີໂອກາດ ໄດ້ສຳຜັດຕົວຈິງ ກັບອາຫານດັ້ງເດີມຂອງລາວ. ເມື່ອເດີນທາງທ່ອງທ່ຽວ ຮ່ວມກັບພະນັກງານນຳທ່ຽວ ຂັ້ນທ້ອງຖິ່ນ ຫລື ລົງໄປບ້ານເຂດຊົນນະບົດຕ່າງໆ, ນັກທ່ອງທ່ຽວໄດ້ມີໂອກາດພິເສດ ທີ່ຮຽນຮູ້ກ່ຽວກັບໜຶ່ງໃນບັນດາ ສິ່ງທີ່ດຶງດູດອັນສຳຄັນ ທີ່ເປັນເອກະລັກຂອງລາວ ແມ່ນອາຫານ. ນັກທ່ອງທ່ຽວ ສ່ວນຫລວງຫລາຍ ຈະສົນໃຈ ໃນການຊີມອາຫານທ້ອງຖິ່ນຂອງທ່ານ ແລະ ຕ້ອງການຮຽນຮູ້ວິທີປຸງແຕ່ງອາຫານດັ່ງກ່າວ. ຄືກັນກັບພະນັກງານນຳທ່ຽວ ຫລື ເຈົ້າພາບຄົນໜຶ່ງ, ວຽກຂອງທ່ານແມ່ນ ສະແດງ ແລະ ແນະນຳວິທີປຸງແຕ່ງ ແລະ ກິນອາຫານທ້ອງຖິ່ນ ຊະນິດຕ່າງໆ ຂອງລາວ. ມັນເປັນສິ່ງທຳມະດາຫລາຍ, ພຽງແຕ່ເທົ່ານີ້ ກໍ່ສາມາດໃຫ້ຂໍ້ມູນທີ່ອຸດົມສົມບູນ ແກ່ແຂກຂອງທ່ານໄດ້ ແລະ ຈະເປັນ ການສະໜຸກສະໜານ ສຳລັບເຂົາເຈົ້າອີກດ້ວຍ.

**ຕົວຢ່າງ:** ໄປກິນເຂົ້າປ່າ

ເຜົ່າກຳ ແມ່ນຊົນເຜົ່າໜຶ່ງ ທີ່ດຳລົງຊີວິດຄຽງຄູ່ ຢູ່ກັບທຳມະຊາດ ໂດຍສືບມາ ໃນຫລາຍຍຸກຫລາຍສະໄໝ, ເພື່ອຄວາມຢູ່ລອດ ແລະ ຄວາມຍືນຍົງ ຂອງເຂົາເຈົ້າເອງ, ເຂົາເຈົ້າອາໄສກິນໝາກໄມ້ ແລະ ພືດຊະນິດຕ່າງໆໃນປ່າທີ່ອຸດົມສົມບູນ ແລະມີຄຸນຄ່າທາງອາຫານສູງ. ເພື່ອເກັບທ້ອນ ອາຫານນີ້, ເຂົາເຈົ້າໃຊ້ເວລາຫລາຍ ເພື່ອອອກໄປທົ່ງ ແລະ ເຂົ້າໄປໃນເຂດປ່າຕ່າງໆ. ເນື່ອງຈາກວ່າ ໃນໄລຍະອັນຍາວນານ ທີ່ໃຊ້ເວລາ ຢູ່ນອກບ້ານຂອງ ຕົນເອງ. ເຂົາເຈົ້າ ໄດ້ມີການພັດທະນາວິທີປຸງແຕ່ງອາຫານ ແບບພື້ນເມືອງ ໃນຂະນະທີ່ ໄປກິນເຂົ້າປ່າ.

4. ອາຫານອື່ນໆ ກໍ່ປຸງແຕ່ງຄືກັນ, ເຊັ່ນ: ແຈ່ວໝາກເຜັດ ຊີ້ງປະສົມດ້ວຍໝາກງາ ແລະ ປີ້ງໄກ່ ເທິງກອງຖ່ານ.




ການປຸງແຕ່ງແຈ່ວໝາກງາ




ນັກທ່ອງທ່ຽວ ກຳລັງຮຽນ
ເຮັດບ່ວງ ດ້ວຍໄມ້ໄຜ




ຜູ້ນຳທ່ຽວຂັ້ນບ້ານ ກຳລັງສາທິດ
ວິທີເຮັດຈອກ ແລະ ໄມ້ທູ່

5. ໃນຂະນະທີ່ກຳລັງລໍຖ້າການປຸງແຕ່ງອາຫານດັ່ງກ່າວ, ບັນດາຊາວບ້ານຜູ້ເປັນເຈົ້າພາບ ໄດ້ສອນໃຫ້ນັກທ່ອງທ່ຽວ ວິທີເຮັດໄມ້ທູ່, ບ່ວງ, ຈອກ ແລະ ອຸປະກອນຮັບໃຊ້ແຕ່ງກິນຈາກ ໄມ້ໄຜ່ ແລະ ໄມ້ປະເພດຕ່າງໆ

6. ອາຫານ ໄດ້ຖືກຈັດ ຢູ່ເທິງໃບຕອງກ້ວຍ ຫລື ໃບໄມ້ຊະນິດຕ່າງໆ. ຊາວບ້ານ ບໍ່ໃຊ້ປະເພດເຄື່ອງຢາງ ເຊັ່ນ: ຖ້ວຍ, ຈານ, ຈອກ ຫລື ແນວຮອງຈອກ ແລະ ອື່ນໆ ເພາະວ່າ ນັ້ນອາດບໍ່ແມ່ນ ປະເພນີ ແລະ ບໍ່ເໝາະສົມສຳລັບນັກທ່ອງທ່ຽວ.



ອາຫານໄດ້ຈັດວາງ ເທິງໃບກ້ວຍ
ເປັນທີ່ຮຽບຮ້ອຍ



ການຈັດວາງໃບກ້ວຍ




ບັນດານັກທ່ອງທ່ຽວ ແລະ ຊາວບ້ານທີ່ເປັນ
ເຈົ້າພາບ ຮ່ວມກັນກິນເຂົ້າປ່າ ແບບປະເພນີ
ຂອງຊົນເຜົ່າກໍ ຢ່າງເບີກບານມ່ວນຊື່ນ

7. ໃນທີ່ສຸດ, ນັກທ່ອງທ່ຽວ ແລະ ພະນັກງານນຳທ່ຽວຂັ້ນບ້ານກໍ່ໄດ້ ຮັບປະທານອາຫານ ຮ່ວມກັນດ້ວຍຄວາມເບີກບານ. ນັກທ່ອງທ່ຽວ ຮູ້ສຶກສະບາຍໃຈຂຶ້ນໃນ ການກິນເຂົ້າຮ່ວມກັບ ເຈົ້າພາບ ແລະ ການກິນເຂົ້າຮ່ວມກັນນັ້ນ ເຮັດໃຫ້ອາຫານມີລົດຊາດດີກວ່າເກົ່າອີກ !

ຂັ້ນຕອນທຳອິດ ໃນການຜະລິດຜ້າຝ້າຍ ແມ່ນ ປູກ ແລະ ການຜະລິດເສັ້ນຝ້າຍ, ຊຶ່ງຈະຕ່ຳເຂົ້າເປັນແຜ່ນແພ. ຂະບວນການນີ້, ຕົ້ນຕໍແມ່ນດຳເນີນ ໂດຍເອື້ອຍນ້ອງແມ່ຍິງ, ເລີ່ມຕົ້ນ ເມື່ອດອກຝ້າຍ ຫາກໍເກັບກູ້ມາໃໝ່ໆ ຈາກສວນ.

ບັນດາຂັ້ນຕອນ ການຜະລິດເສັ້ນຝ້າຍ ມີດັ່ງຕໍ່ໄປນີ້:

1. ***ອີ້ວຝ້າຍ*** : ດອກຝ້າຍ ທີ່ຫາກໍກູ້ມາໃໝ່ໆ ຖືກອີ້ວໝູນໄປລະຫວ່າງ ໄມ້ອີ້ວສອງອັນ ເພື່ອເຮັດໃຫ້ ແກ່ນດອກຝ້າຍແຍກອອກຈາກໃຍຂອງມັນ.

2. ***ດີດຝ້າຍ*** : ໃຍຝ້າຍໄດ້ຖືກສະບັດ ເຮັດໃຫ້ເນື້ອຝ້າຍແຕກອອກຈາກກັນ ຢ່າງລະອຽດ ແລະ ຍືງຂຶ້ນ, ສະດວກໃນການເຂັນ ແລະ ລໍ້ອອກເປັນເສັ້ນ.

3. ***ລໍ້ຝ້າຍ*** : ໃຍຝ້າຍທີ່ດີດແລ້ວ, ຫລັງຈາກນັ້ນ ໃຊ້ມືລໍ້ ໃຫ້ເປັນຮູບກົມໆ ແລະ ຍາວ.

4. ***ເຂັນຝ້າຍ*** : ໃຍຝ້າຍດັ່ງກ່າວ ໄດ້ຖືກອີ້ວເຂົ້າເປັນເສັ້ນ ໂດຍແກນເຄື່ອງປັ່ນຝ້າຍ ເພື່ອສືບຕໍ່ຜະລິດເປັນເສັ້ນຝ້າຍ. ຂະໜາດຂອງຝ້າຍທີ່ຖືກດຶງເຂົ້າໄປແກນປັ່ນນັ້ນ ແມ່ນ ໄດ້ກຳໜົດຄວາມໜາຂອງເສັ້ນຝ້າຍ. ຄວາມສາມາດ ຂອງ ຫລາ ຫລື ເຄື່ອງປັ່ນຝ້າຍ ທີ່ດຶງຝ້າຍເຂົ້າໄປຫາ ແກນນັ້ນ ດ້ວຍຂະໜາດທີ່ສະໝສະເໝີ ເພື່ອໃຫ້ເຮັດໃຫ້ເສັ້ນຝ້າຍມີ ຄວາມໜາບໍ່ປ່ຽນແປງ.

5. ***ເປຍຝ້າຍ*** : ເອົາຝ້າຍທີ່ເຂັນແລ້ວ ມາເປຍເປັນປອຍໄວ້.

6. ***ຍ້ອມຝ້າຍ*** : ກ່ອນຈະຍ້ອມສີ ເອົາຝ້າຍທີ່ເປຍແລ້ວນັ້ນ ຈຸບນ້ຳທຳມະດາກ່ອນ, ຫລັງຈາກນັ້ນ ເອົາລົງໄປແຊ່ນ້ຳສີ ທີ່ຕົ້ມເພື່ອຍ້ອມ. ຕາມປົກກະຕິ ເປືອກໄມ້ ແລະ ໝາກໄມ້ ຊະນິດຕ່າງໆ ຈະໃຫ້ສີທຳມະຊາດ.

7. ***ຂ້າຝ້າຍ*** : ແຊ່ຝ້າຍໃນນ້ຳເຂົ້າທີ່ຕຳແລ້ວ. ພາຍຫລັງແຊ່ແລ້ວ ກໍ່ປັ້ນນ້ຳອອກ, ນຳເອົາຝ້າຍໄປພຶ່ງແລ້ວຕາກໃຫ້ແຫ້ງ. ຂັ້ນຕອນນີ້ແມ່ນ ເຮັດໃຫ້ຝ້າຍເຄັ່ງ ແລະ ບໍ່ມັກຟຸ່ຍ. ຫລັງຈາກນີ້, ເສັ້ນຝ້າຍບໍ່ຂີດ ແລະ ບໍ່ພັບກັນງ່າຍໆ. ຖ້າຂາດຂັ້ນຕອນນີ້ເສັ້ນຝ້າຍຈະຂາດງ່າຍ ໃນເວລາຕ່ຳ.

8. ***ກວັກຝ້າຍ*** : ໃນທີ່ສຸດເສັ້ນຝ້າຍ ກໍໄດ້ຖືກປັ່ນ ໃສ່ກົງປັ່ນຝ້າຍ ແລະ ໃສ່ໂບກ ຫລື ຫລອດປັ່ນ ສຳລັບສະສົມໄວ້ ເພື່ອສ...

9. ***ຄົ້ນໃສ່ເຝືອ ຫລື...*** ...ໄປ ຄົ້ນໃສ່ເຝືອທີ່ເຮັ...

***ບົດເຝິກຫັດ #14***

ຈົ່ງຂຽນຊື່ ໜຶ່ງຜະລິດຕະພັນ ທີ່ເພດຍິງເຮັດເປັນປະຈຳ ໃນບ້ານຂອງທ່ານ ແລະ ໜຶ່ງຜະລິດຕະພັນ ທີ່ເພດຊາຍເຮັດເປັນປະຈຳ. ຈົ່ງເລືອກເອົາ ໜຶ່ງໃນສອງຜະລິດຕະພັນດັ່ງກ່າວນີ້ ແລະ ຂຽນລົງບັນດາຂັ້ນຕອນ ສຳລັບການເຮັດຜະລິດຕະພັນນີ້.

**ຕົວຢ່າງ:** ບັນດາລວດລາຍ ການຕ່ຳຜ້າ

ບັນດາລວດລາຍ ການຕ່ຳຜ້າຂອງລາວ ແມ່ນແຕກຕ່າງຢ່າງຊັດເຈນ ແຕ່ເໜືອ ເຖິງ ໃຕ້ ຂອງປະເທດ, ໂດຍສະເພາະລະຫວ່າງກຸ່ມຊົນຊາດຊົນເຜົ່າຕ່າງໆ. ບາງລາຍ ມີສີສັນທີ່ແຕກຕ່າງກັນ, ຊຶ່ງເຫັນຊັດເຈນໄດ້ ມີແຕ່ສາຍຕາທີ່ໄດ້ຮັບການຝຶກມາແລ້ວເທົ່ານັ້ນ. ບ້ານ ເພຍໄຟ ຕັ້ງຢູ່ແຄມຝັ່ງແມ່ ນ້ຳຂອງ ມີຄວາມຍາວປະມານ 50 ກິໂລແມັດ ທາງທິດໃຕ້ຂອງເມືອງ ປາກເຊ, ແຂວງ ຈຳປາສັກ.ໂດຍທົ່ວໄປແລ້ວ ຊາວບ້ານ ໃຊ້ລາຍພິເສດເອີ້ນວ່າ: ລາຍ *ໝາກຈັບ.* ຊາວບ້ານ ຈຳນວນໜຶ່ງເວົ້າວ່າ ການອອກແບບນີ້ ແມ່ນພາຍຫລັງໜາມໝາກຈັບຂີດ, ຊຶ່ງກໍຖືກເອີ້ນວ່າ: *ໝາກຈັບ* ແປກປະຫລາດ, ລາຍນີ້

| | |
|---|---|
| • ຍອຍທີ່ຖືກຫຍິບໃສ່ຕີນກະໂປ່ງຂອງແມ່ຍິງ ເປັນຍອຍນ້ອຍ ແລະ ແບບທຳມະດາ. | • ຍອຍທີ່ຖືກຫຍິບໃສ່ຕີນກະໂປ່ງຂອງແມ່ຍິງ ເປັນຍອຍໃຫຍ່, ມີຫລາຍສີສັນ. |
| • ກະໂປ່ງພື້ນເມືອງຂອງແມ່ຍິງ ຄວາມຍາວ ຂອງມັນແມ່ນຢູ່ເທິງຫົວເຂົ່າ. | • ກະໂປ່ງພື້ນເມືອງຂອງແມ່ຍິງ ຄວາມຍາວ ຂອງມັນແມ່ນສັ້ນກວ່າ ຂອງເຜົ່າກໍ ພູລີໃຫຍ່ ໜ້ອຍໜຶ່ງ. |

*ບົດເຝິກຫັດ #16*

ເຄື່ອງນຸ່ງແບບພື້ນເມືອງໃດ ທີ່ເປັນຂອງບ້ານ ຫລື ຊົນເຜົ່າຂອງທ່ານ ? ຈົ່ງສົມທຽບຄວາມແຕກຕ່າງ ລະຫ່ວາງການນຸ່ງຖື ແບບປະເພນີຂອງທ່ານ ແລະ ມາດຕະຖານການນຸ່ງຖືແບບປະເພນີລາວ. ຖ້າວ່າການນຸ່ງຖື ແບບປະເພນີຂອງທ່ານ ຄືກັນກັບ ການນຸ່ງຖືແບບປະເພນີລາວ. ທ່ານສາມາດອະທິບາຍຄວາມແຕກຕ່າງໃດໜຶ່ງ ໃນລວດລາຍຜ້າ ຂອງທ່ານໄດ້ບໍ ?



ເຜົ່າກໍ ພູລີນ້ອຍ (ເບື້ອງຊ້າຍ) ແລະ ເຜົ່າກໍ ພູລີໃຫຍ່ (ເບື້ອງຂວາ)

## *ນິທານຕ່າງໆ*

ມີຫລາຍບົດເລື່ອງ ຫລື ນິທານຕ່າງໆ ທີ່ສຳຄັນໃນປະເທດລາວ. ບົດເລື່ອງເຫລົ່ານີ້ ສ່ວນຫລວງຫລາຍ ຍັງບໍ່ເຄີຍມີນັກທ່ອງທ່ຽວໄດ້ຍິນ. ເພາະວ່າ ນິທານສ່ວນຫລວງຫລາຍ ໃນປະເທດລາວ ບໍ່ເຄີຍໄດ້ຂຽນເປັນຕຳລາ ແລະພຽງແຕ່ເລົ່າປາກເປົ່າເທົ່ານັ້ນ. ດ້ວຍເຫດນີ້, ນິທານຕ່າງໆຂອງທ່ານ ຈະເປັນສິ່ງທີ່ໜ້າສົນໃຈ ອັນສຳຄັນສຳລັບແຂກຂອງທ່ານເອງ. ສິ່ງທີ່ສຳຄັນຢ່າງໜຶ່ງທີ່ຄວນຈຳໄວ້, ຢ່າງໃດກໍ່ຕາມ, ທ່ານຄວນເລືອກເອົານິທານເລື່ອງໜຶ່ງ ທີ່ມີຄວາມໝາຍ ຫລື ບົດຮຽນສອນໃຈ. ສະນັ້ນ, ຄວນຈະມີເຫດຜົນໃດໜຶ່ງ ຍ້ອນຫຍັງ ທ່ານຈິ່ງເລົ່າເລື່ອງນີ້ ແລະ ນັກທ່ອງທ່ຽວ ຈະຄອງຄອຍທ່ານອະທິບາຍສູ່ເຂົາເຈົ້າຟັງ, ຫລັງຈາກທ່ານສິ້ນສຸດການເລົ່າເລື່ອງ. ບົດເລື່ອງໜຶ່ງ ທີ່ຂາດຄວາມໝາຍ ຫລື ບົດຮຽນສອນໃຈ ຄືກັບ ລົດເມ ຫລື ລົດບັດ ໄປແບບບໍ່ມີຈຸດໝາຍ, ຄົນເຮົາ ບໍ່ມັກຂຶ້ນລົດເມ, ຢ່າງໜ້ອຍ ເຂົາເຈົ້າຮູ້ວ່າມັນຈະໄປໃສ. ສະນັ້ນ, ຄວນຈື່ຈຸດໝາຍປາຍທາງຂອງທ່ານ ແລະ ໃຫ້ຄວາມໝາຍ ໃນທ້າຍຂອງບົດເລື່ອງ.

ເວລາເຂົາເຈົ້າຍ່າງໄປຮອດໂຮງຮຽນ ເຂົາເຈົ້າໄດ້ກົ້ມຫົວຄຳນັບ ນາຍຄູໃໝ່ຂອງເຂົາເຈົ້າ. ເວລານັ້ນ ນາຍຄູໄດ້ສັງເກດເບິ່ງ ແລະ ຮູ້ວ່າ ອາງໄດ ເປັນແມ່ຍິງ, ແຕ່ນາຍຄູຄົນນັ້ນ ບໍ່ໄດ້ເວົ້າຫຍັງ. ຍ້ອນເຫັນວ່າ ແສງເພັດ ແລະ ອາງໄດ ເປັນເພື່ອນທີ່ສະໜິດສະໜົມ ຄູຈຶ່ງຈັດໃຫ້ເຂົາເຈົ້າ ນອນຮ່ວມຕຽງດຽວກັນ, ຫົ່ມຜ້າຜືນດຽວກັນ ແລະ ນອນໃນມຸ້ງດາງດຽວກັນ. ເມື່ອເຖິງເວລາເຂົ້ານອນ ແສງເພັດ ໄດ້ແກ້ເສື້ອນອນ ແຕ່ ອາງໄດ ບໍ່ໄດ້ແກ້. ແສງເພັດ ເວົ້າກັບ ອາງໄດ ວ່າ " ຖ້າເຈົ້າບໍ່ແກ້ເສື້ອນອນ ເຈົ້າຈະຮ້ອນຫລາຍ " ອາງໄດ ຕອບວ່າ: "ແມ່ຂອງຂ້ອຍ ໄດ້ໃສ່ດຸມເສື້ອໃຫ້ຂ້ອຍ ສາມຮ້ອຍດຸມ, ຖ້າຂ້ອຍແກ້ມັນຈະຕ້ອງໃຊ້ເວລາດົນ. ຂ້ອຍນອນແບບນີ້ ກໍ່ສະບາຍຢູ່ແລ້ວ" ເວົ້າແລ້ວ ລາວກໍ່ລົ້ມຫົວນອນ.

ໃນທ້າຍປີທີສາມ ທີ່ ອາງໄດ ຮຽນຢູ່ໂຮງຮຽນແຫ່ງນັ້ນ, ໄດ້ມີພິທີສະຫລອງບຸນປີໃໝ່ ເວລານັ້ນ ນັກຮຽນທັງໝົດ ໄດ້ພາກັນໄປທ່ອງທ່ຽວໃນປ່າແຫ່ງໜຶ່ງ ທີ່ເຕັມໄປດ້ວຍດອກໄມ້ບານ. ອາງໄດ ເວົ້າກັບ ແສງເພັດ ເພື່ອນທີ່ດີ ຂອງລາວວ່າ: ພວກເຮົາໃກ້ຈະສິ້ນສຸດການຮຽນ ໃນບໍ່ຊ້ານີ້ແລ້ວ. ອາງໄດ ຈຳເປັນຕ້ອງກັບບ້ານໃນໄວໆນີ້. ແສງເພັດ ເວົ້າກັບ ອາງໄດ ວ່າ ຕະຫລອດໄລຍະສາມປີ ທີ່ຮຽນຢູ່ນຳກັນ. ພວກເຂົາ ກາຍເປັນເພື່ອນ ທີ່ດີນຳກັນ ແລະ ບໍ່ເຄີຍໄດ້ຜິດຖຽງກັນຈັກເທື່ອ. ຫລັງຈາກພວກເຮົາຮຽນຈົບ ພວກເຮົາຄວນຈະກັບຄືນເມືອບ້ານນຳກັນ. "ອາງໄດ ຕອບຄືນວ່າ: ມື້ຄືນ ທີ່ຜ່ານມາຂ້ອຍຝັນເຫັນພໍ່ແມ່ຂອງຂ້ອຍ. ດຽວນີ້ເຂົາເຈົ້າເຖົ້າຫລາຍແລ້ວ, ສະນັ້ນ ຂ້ອຍຈະຕ້ອງກັບບ້ານໃຫ້ໄວທີ່ສຸດ ກັບກ່ອນເຈົ້າອີກດ້ວຍ " ຫລັງຈາກນັ້ນ, ລາວໄດ້ແຈ້ງໃຫ້ນັກຮຽນ ໃນຫ້ອງວ່າ ລາວ ຈະໄດ້ກັບບ້ານກ່ອນໝູ່. ລາວໄດ້ສະແດງຄວາມຂອບໃຈ ຕໍ່ນາຍຄູ ແລະ ເພື່ອນຮ່ວມຫ້ອງ ທີ່ໄດ້ເປີດ ໂອກາດໃຫ້ລາວຮຽນ ຢູ່ໂຮງຮຽນແຫ່ງນີ້. ລາວໄດ້ເວົ້າກັບ ແສງເພັດ ວ່າ: ຫລັງຈາກເຈົ້າຮຽນຈົບ ຂໍເຊີນເຈົ້າໄປຢາມເຮືອນຂ້ອຍແດ່ ແສງເພັດ ເວົ້າຕໍ່ໄປວ່າ: ກະລຸນາ ລໍຖ້າຈັກສອງສາມວັນແລ້ວພວກເຮົາກັບເມືອບ້ານພ້ອມກັນ. ອາງໄດ ອະທິບາຍ ຕໍ່ໄປວ່າ: ອ້າຍ ແສງເພັດເອີຍ, ເຈົ້າເວົ້າອອກ ມາ ໂດຍບໍ່ໄດ້ຄິດ ພວກເຮົາເປັນອັນດຽວກັນ. ຕົວຂ້ອຍປຽບເໝືອນດວງຕາເວັນ ແລະ ຕົວເຈົ້າປຽບ ເໝືອນແຜ່ນດິນ. ຂ້ອຍປຽບ ເໝືອນວິນຍານ ແລະ ເຈົ້າ ປຽບເໝືອນຄົນ. ເມື່ອນາຍຄູໄດ້ຍິນຄຳອະທິບາຍ ຂອງ ອາງໄດ ນາຍຄູໄດ້ຫົວຂຶ້ນ ຍ້ອນຮູ້ວ່າ ແສງເພັດ ບໍ່ທັນຮັບຮູ້ວ່າ ອາງໄດເປັນເພດຍິງ.

ຫລັງຈາກສິບຫ້າວັນຕໍ່ມາ ອາງໄດ ໄດ້ເດີນທາງກັບມາຮອດບ້ານ. ຫລັງຈາກສະແດງຄວາມ ເຄົາລົບຕໍ່ພໍ່ແມ່ແລ້ວ ລາວໄດ້ປ່ຽນຊຸດຜູ້ຊາຍອອກ ແລະ ກັບມານຸ່ງຊຸດແມ່ຍິງ ຂອງລາວຄືນເປັນປົກກະຕິ. ພໍ່ແມ່ຂອງລາວໄດ້ຖາມວ່າ: "ເປັນຫຍັງເຈົ້າໜີໄປເປັນເວລາດົນນານ ໂດຍບໍ່ໄດ້ກັບມາຢາມບ້ານ ? " ອາງໄດ ຕອບວ່າ, "ລູກໄດ້ໄປຮຽນເປັນເວລາສາມປີ ແລະຮຽນໄດ້ຄະແນນສູງ. ດຽວນີ້ລູກສາມາດອ່ານ ແລະ ຂຽນໄດ້ເປັນຢ່າງດີ " ພໍ່ແມ່ຂອງລາວຮູ້ສຶກດີໃຈ ແລະ ຕອບວ່າ, ພວກເຮົາດີໃຈ ຫລາຍທີ່ສຸດ ທີ່ລູກສາວຂອງພວກເຮົາ ສາມາດອ່ານໄດ້ ຂຽນເປັນ" .

ມື້ໜຶ່ງນາງໄດ້ຖືກຮ້ອງຂໍ ໃຫ້ແຕ່ງງານກັບຜູ້ຊາຍ ທີ່ຢູ່ບ້ານໃກ້ຄຽງ ພໍ່ແມ່ຂອງລາວເຫັນດີ ແລະ ລາວກໍ່ເລີ່ມກະກຽມພິທີໝັ້ນ. ໃນວັນນັ້ນ, ແສງເພັດ ໄດ້ມາຊອກຫາເຮືອນ ອາງໄດ ເພື່ອມາຢ້ຽມຢາມ ຕາມຕົກລົງກັນໃນເມື່ອກ່ອນ. ແສງເພັດໄດ້ພົບເຫັນເຮືອນຂອງ ອາງໄດ ແລະ ຍ່າງເຂົ້າ ໄປໃນເຮືອນ. ຢູ່ໃນເຮືອນຫລັງນັ້ນ ແສງເພັດ ພົບເຫັນຍິງສາວສວຍງາມຜູ້ໜຶ່ງ. ໃນຊຸດທີ່ສວຍງາມ ແລະ ປະດັບເອ້ໄປດ້ວຍເຄື່ອງມີຄ່າ. ລາວງາມຄືກັນກັບ ແສງຕາເວັນ ຕາຂອງລາວງາມຄືກັນກັບ ດວງດາວ. ໃນມືລາວຖືຫວີຄຳ ແລະ ຄັນຮົ່ມ. ຍິງສາວຄົນນັ້ນ ເຊີນໃຫ້ ແສງເພັດ ນັ່ງລົງ ແລະ ດື່ມ ນ້ຳຊາ. ແສງເພັດ ອະທິບາຍວ່າ ຂ້ອຍຊື່ ແສງເພັດ ແລະ ຂ້ອຍໄດ້ມາຢ້ຽມຢາມໝູ່ ຂອງຂ້ອຍ ທີ່ຊື່ ອາງໄດ, ຊຶ່ງຂ້ອຍເຄີຍໄດ້ຮຽນຢູ່ກັບລາວ ໃນໄລຍະສາມປີທີ່ຜ່ານມາ. ອາງໄດ ຢູ່ນີ້ບໍ່? ຍິງສາວຄົນນັ້ນຕອບວ່າ " ອ້າຍເອີຍຂ້ອຍນີ້ແຫລະຮຽນຢູ່ນຳເຈົ້າ. ເຈົ້າບໍ່ຮູ້ວ່າແມ່ນຂ້ອຍຍ້ອນວ່າເວລາທີ່ພວກ ເຮົາຮຽນຢູ່ນຳກັນນັ້ນ ຂ້ອຍໄດ້ນຸ່ງຊຸດຜູ້ຊາຍ. ແສງເພັດ ເຂົ້າໃຈວ່າມີຫຍັງເກີດຂຶ້ນ ລາວຢຸດດື່ມນ້ຳຊາ ທັງຮູ້ສຶກເສຍໃຈ ແລະ ເລີ່ມຮ້ອງໄຫ້. ອາງໄດ ໄດ້ອ້ອນວອນວ່າ, ອ້າຍເອີຍ ບໍ່ຕ້ອງຕົກໃຈ.

ພື້ນຂຸມຝັງສົບນັ້ນໄດ້ພົບ ແຕ່ກັບສີຂາວ. ເຂົາໄດ້ທຸບກັບສີຂາວນັ້ນອອກມາ ເລີຍເຫັນແມງກະເບື້ອສີຂາວ 2 ໂຕ ບິນອອກຈາກກັບ ຂຶ້ນສູ່ທ້ອງ ຟ້າ. ຄູ່ໝັ້ນ ຂອງອາງໄດເກີດເສຍໃຈ ທີ່ ອາງໄດ ຈາກໄປ ຈຶ່ງຈັບເອົາສົ້ນເສື້ອຂາດຂອງ ອາງໄດ ທີ່ດຶງໄດ້ນັ້ນ ມາກືນກິນ ແລ້ວຂ້າຕົວເອງຕາຍທັນທີ.

ທຸກຄົນທີ່ມາຮ່ວມງານວິວາ ໄດ້ມາເຕົ້າໂຮມກັນ ມີຜູ້ເຖົ້າຄົນໜຶ່ງ ປະກາດຂຶ້ນວ່າ ພວກເຂົາ ສາມຄົນ ໄດ້ຕາຍໄປແລ້ວ ກະລຸນາຈົດຈຳເຫດການນີ້ໄວ້ ແລະ ພວກເຮົາຈະຕ້ອງຮຽນເອົາບົດຮຽນນີ້. ຜູ້ຊາຍ ແລະ ຜູ້ຍິງບໍ່ຄວນເອ້ຍ້ອງ ພວກເຮົາຄວນນຸ່ງເຄື່ອງທຳມະດາ ແລະ ງ່າຍດາຍ. ຈົບ.

*ບົດເຝິກຫັດ #17*

ທ່ານຮູ້ນິທານເລື່ອງໃດ ເລື່ອງໜຶ່ງບໍ ? ຈົ່ງເລົ່ານິທານຂອງທ່ານໃຫ້ໝູ່ຮ່ວມຫ້ອງ ຂອງທ່ານຟັງ. ນິທານຂອງທ່ານ ມີຄວາມໝາຍຄືແນວໃດ ?.

## ຂໍ້ຫ້າມ (ສິ່ງຂະລຳ) ຕ່າງໆ

ຢູ່ໃນ ປະເທດລາວ ມີຂໍ້ຫ້າມ ຫລື ສິ່ງຂະລຳຫລາຍຢ່າງ, ຊຶ່ງເຈາະຈົງ ສຳລັບຊົນເຜົ່າຕ່າງໆ, ບັນດາສາສະໜາ ແລະ ສະຖານທີ່ແຕກຕ່າງກັນ. ມັນມີຄວາມສຳຄັນ ທີ່ນັກທ່ອງທ່ຽວເຂົ້າໃຈຂໍ້ຫ້າມຕ່າງໆ ເພື່ອວ່າ ເຂົາເຈົ້າຈະບໍ່ລະເມີດ ຫລື ສ້າງຄວາມເຂົ້າໃຈຜິດທາງດ້ານວັດທະນະທຳ. ບັນດານັກທ່ອງທ່ຽວ ຍັງມີຄວາມສົນໃຈ ຢາກເຂົ້າໃຈເປັນຫຍັງ ຈຶ່ງມີຂໍ້ຫ້າມດັ່ງກ່າວ ແລະ ປະຫວັດຄວາມເປັນມາຂອງມັນ ມີຄືແນວໃດ. ຄວນຈື່ວ່າ ທ່ານບໍ່ຄວນບອກນັກທ່ອງທ່ຽວ ພຽງແຕ່ ສິ່ງທີ່ຄວນເຮັດ ແລະ ສິ່ງທີ່ບໍ່ຄວນເຮັດ, ແຕ່ສຳຄັນກວ່າ ແລະ ໜ້າສົນໃຈກວ່າ ທີ່ຈະບອກ ນັກທ່ອງທ່ຽວ *ເປັນຫຍັງ* ຈຶ່ງມີຂໍ້ຫ້າມ ແລະ ມັນມີຄວາມໝາຍຄືແນວໃດ ?.

**ຕົວຢ່າງ:** ການຂະລຳ ບໍ່ໃຫ້ລ້ຽງເປັດ ແລະ ໝູ ຢູ່ໃນບ້ານ ທາດອິງຮັງ

ຖ້າທ່ານຮູ້ ປະຫວັດຂອງພະທາດອິງຮັງ ຊຶ່ງເປັນສະຖານທີ່ ສັກສິດແຫ່ງໜຶ່ງໃນ ພາກໃຕ້ຂອງ ປະເທດລາວ, ທ່ານຈະຮູ້ວ່າ ເປັນຫຍັງທາດແຫ່ງນີ້ ຈຶ່ງມີຊື່ວ່າ *ອິງຮັງ*. ຊາວບ້ານໄດ້ເວົ້າວ່າ ຢູ່ທີ່ນີ້ ປະມານພັນປີ ກ່ອນໜ້ານີ້, ພະພຸດທະເຈົ້າໄດ້ສະເດັດມາຜ່ານເຂດນີ້ ແລະ ຫລັງຈາກເພິ່ນ ໄດ້ສັນຊີ້ນໝູຈາກທ້ອງຖິ່ນ, ເພິ່ນໄດ້ເກີດອາການເຈັບໜັກ ແລະ ໄດ້ຢຸດພັກເຊົາ. ຢູ່ທີ່ນີ້ ເພິ່ນໄດ້ຢືນອີງ *ຕົ້ນຮັງ* ສະນັ້ນ, ຫລັງຈາກ ທາດໄດ້ຖືກສ້າງຂຶ້ນ ເພິ່ນຈຶ່ງໄດ້ໃສ່ຊື່ວ່າ: ທາດອິງຮັງ.




ພະທາດ ອິງຮັງ

ປະຊາຊົນທັງໝົດທີ່ຢູ່ບ້ານທາດ, ເປັນບ້ານ ທີ່ຢູ່ທາງຂ້າງທາດອິງຮັງ ໄດ້ສືບທອດ ຂໍ້ຫ້າມນີ້ຢ່າງເຂັ່ງຂັດ ຕັ້ງແຕ່ສະໄໝພຸດທະການ ເປັນຕົ້ນມາ. ເພາະສະນັ້ນ, ຊາວບ້ານຈະບໍ່ໄດ້ລ້ຽງໝູ ແລະ ເປັດ ໃນບ້ານອີກເລີຍ. ຫວ່າງບໍ່ດົນມານີ້, ໄດ້ມີຫລັດຖານ ທາງວິທະຍາສາດ ເວົ້າວ່າ ເວລາມີ ການລ້ຽງໝູ ແລະ ເປັດ ຢູ່ໃກ້ຊິດ ກັບຄົນ ຈະເກີດມີພະຍາດຕິດຕໍ່ ຈາກສາຍ ພັນໜຶ່ງ ໄປສູ່ສາຍພັນອື່ນ ແລະ ສ້າງພະຍາດ ຕິດຕໍ່ ສາຍພັນໃໝ່ຂຶ້ນ. ພູມປັນຍາທີ່ປະຊາຊົນ ຢູ່ບ້ານດັ່ງກ່າວ ບໍ່ໄດ້ລ້ຽງໝູ ແລະ ເປັດ ຢູ່ໃກ້ຊິດກັນອາດຈະເປັນບົດຮຽນຕົວຈິງ ທີ່ຊາວໂລກ ສາມາດມາຖອດຖອນບົດຮຽນ ນຳໄດ້.

## ຕົວຢ່າງ: ດົນຕີ ຂອງເຜົ່າກະລ່ອມ

ທ່ານ ເສົາແກ້ວ, ທ່ານ ບຸນຕັນ, ທ່ານ ກອງຈັນ ແລະ ທ່ານ ຄຳດາ ຊຶ່ງມາຈາກຄະນະດົນຕີ ພື້ນເມືອງ ຂອງ*ເຜົ່າກະລ່ອມ.*

ໄດ້ສະແດງຮັບໃຊ້ແຂກ ເປັນປົກກະຕິຢູ່ເຮືອນພັກທ່າເຮືອ ແຂວງ ຫລວງນ້ຳທາ ຊຶ່ງເລີ່ມສະແດງຮັບໃຊ້ນັກທ່ອງທ່ຽວຢູ່ເຮືອນພັກໄດ້ສອງປີທີ່ຜ່ານມາ. ຊື່ສຽງຂອງກຸ່ມ ນັກສະແດງ ໄດ້ຮັບຄວາມນິຍົມຫລາຍຂຶ້ນ, ປະຈຸບັນນີ້ເຂົາເຈົ້າໄດ້ຖືກເຊື້ອເຊີນ ໃຫ້ໄປສະແດງຮັບ ໃຊ້ໃນງານຕ່າງໆ ເລື້ອຍໆ ເຊັ່ນ: *ງານບາສີ,* ງານດອງ ແລະ ງານສັງສັນອື່ນໆ. ນັກດົນຕີເຫລົ່ານັ້ນ ໄດ້ເວົ້າວ່າ ໃນສະໄໝທີ່ພໍ່ແມ່ຂອງເຂົາເຈົ້າເປັນບ່າວນັ້ນ, ດົນຕີຂອງ *ເຜົ່າກະລ່ອມ* ແລະ ເຜົ່າລາວ ເປັນທີ່ນິຍົມ
ທີ່ສຸດ ແລະ ມີນັກດົນຕີຢູ່ໃນຕົວເມືອງ ຫລິ້ນຢ່າງແຜ່ຫລາຍ. ແຕ່ເນື່ອງຈາກວ່າ ຄວາມນິຍົມດົນຕີພື້ນເມືອງໄດ້ລຸດລົງ ຈຶ່ງ
ຫລົງເຫລືອພຽງແຕ່ ບາງບຸກຄົນ ທີ່ຮູ້ຫລິ້ນເຄື່ອງດົນຕີພື້ນເມືອງເຫຼົ່ານີ້.

ພວກນັກດົນຕີພື້ນເມືອງທັງສີ່ທ່ານ ໄດ້ເວົ້າວ່າ ເຂົາເຈົ້າຮຽນຫລິ້ນເຄື່ອງດົນຕີ ຈາກການຟັງ ແລະ ໃຊ້ຄວາມຮູ້ສຶກໂດຍບໍ່ ໄດ້ຜ່ານໂຮງຮຽນ ເປັນທາງການ ແລະ ບໍ່ໄດ້ໃຊ້ປຶ້ມ. ຄວາມຈິງແລ້ວ, ດົນຕີທີ່ເຂົາເຈົ້າຫລິ້ນຢູ່ ໃນປະຈຸບັນ ບໍ່ໄດ້ມີການບັນທຶກຈົດກ່າຍໄວ້ ແຕ່ປະການໃດ ເຂົາເຈົ້າຫລິ້ນ ດົນຕີໂດຍອາໄສຄວາມຊົງຈຳເທົ່ານັ້ນ.

ໃນວົງດົນຕີຂອງເຂົາເຈົ້າມີ ເຄື່ອງດົນຕີ ສີ່ ຊະນິດຄື:

***ຊໍໂອ:*** ເປັນເຄື່ອງດົນຕີຊະນິດສອງສາຍ ຫລິ້ນດ້ວຍໄມ້ສີຊໍ, ອອກສຽງຕ່ຳກວ່າ

***ຊໍອີ້:*** ເຄື່ອງດົນຕີຊະ ນິດນີ້ ໄດ້ຜະລິດຂຶ້ນ ທີ່ແຂວງ ຫລວງພະບາງ.



ຊໍໂອ ຫລິ້ນໂດຍ ທ່ານ ເສົາແກ້ວ



ຊໍອີ້ ຫລິ້ນໂດຍ ທ່ານ ກອງຈັນ

***ຊໍອີ້:*** ເປັນເຄື່ອງດົນຕີ ສອງສາຍ ເຊັ່ນກັນ ຫລິ້ນດ້ວຍໄມ້ສີຊໍ, ອອກສຽງສູງກວ່າ ***ຊໍໂອ.*** ເຄື່ອງດົນຕີ ນີ້ ອອກສຽງດັງທີ່ສຸດໃນວົງ. ເຄື່ອງດົນຕີຊະນິດນີ້ ໄດ້ປະດິດຂຶ້ນຢູ່ທີ່ແຂວງ ຫລວງພະບາງ ເຊັ່ນກັນ.

**ຕົວຢ່າງ** ການຮ້ອງເພງຂອງເຜົ່າກໍ

ນາງ ມີເຊາະ ແລະ ນາງ ແຊເຊີະ, ທັງສອງ ເປັນຜູ້ນຳທ່ຽວເຜົ່າກໍ ຢູ່ ເມືອງສິງ. ຕາມປົກກະຕິ ເຂົາເຈົ້າມັກໃຊ້ເວລາຍ່າງ ໄປໄຣ່ ຫລື ເຂົ້າໄປ ໃນປ່າ ເພື່ອເກັບເຄື່ອງປ່າຂອງດົງມາລ້ຽງຄອບຄົວ. ມັນເປັນປະເພນີຂອງເຜົ່າກໍ ທີ່ໃຊ້ເວລາຍ່າງ ຜ່ານພູຜາປ່າດົງ ແລະ ທົ່ງໄຣ່ທົ່ງນາ ດ້ວຍການຮ້ອງເພງ ແລະ ຍ່າງໄປພ້ອມໆກັນ. ເພງເຫລົ່ານີ້ ບໍ່ໄດ້ມີການບັນທຶກໄວ້ ແຕ່ນັກຮ້ອງ ເປັນຜູ້ພັດທະນາຂຶ້ນມາ ຕາມຄວາມສາມາດຂອງ ເຂົາເຈົ້າ, ມີບາງຄັ້ງ ກໍ່ຮ້ອງສະລັບກັນ ລະຫວ່າງ ນັກຮ້ອງ ສອງຄົນ, ເປັນການນິຍົມອັນໜຶ່ງ ຊຶ່ງຄ້າຍກັນກັບສອງຄົນ ກຳລັງຮ້ອງຕອບກັນ. ເວລານາງ ມີເຊາະ ແລະ ນາງ ແຊເຊີະ ໄປຍ່າງກັບນັກທ່ອງທ່ຽວ ເຂົາເຈົ້າເບີກບານມ່ວນຊື່ນ ທີ່ໄດ້ຮ້ອງເພງ ໃຫ້ ນັກທ່ອງທ່ຽວຟັງ, ເຊັ່ນ ເຂົາເຈົ້າໄດ້ຮັບການ ຊື່ນຊົມວ່າ ນັກທ່ອງທ່ຽວມີຄວາມອອນຊອນ ກັບສຽງເພງພື້ນເມືອງນີ້ຫລາຍ. ຢູ່ຂ້າງລຸ່ມນີ້ ແມ່ນຕົວຢ່າງໜຶ່ງ ຂອງເນື້ອ ເພງ ທີ່ເຂົາເຈົ້າມັກຮ້ອງ.

**ຕົວຢ່າງ** ເພງຂອງເຜົ່າກໍ

" ເອົາສິ່ງໃດ ສິ່ງໜຶ່ງ ໃຫ້ພວກເຮົາຊົງຈຳ ສຳລັບມື້ນີ້ .
ພວກເຮົາຮ້ອງເພງຕາມຄວາມຮູ້ສຶກ.
ຄືພວກເຮົາຮ້ອງເພງນີ້
ພວກເຮົາໄດ້ຈື່ທຸກຄົນ ທີ່ໄດ້ມາຍ່າງເສັ້ນທາງນີ້
ກ່ອນພວກເຮົາ.
ເມື່ອນົກບິນ ຢູ່ເທິງທ້ອງຟ້າ
ຢ່າລືມຫລຽວຂຶ້ນເທິງ
ແລະ ຖ້າວ່ານົກບິນລັບຂອບຟ້າ,
ບໍ່ຕ້ອງຢຸດຮ້ອງເພງ.
ເວລາເຈົ້າຫລຽວເບິ່ງທາງໜ້າ,
ຢ່າລືມຫລຽວເບິ່ງທາງຫຼັງ.
ສິ່ງທີ່ພວກເຮົາຮ້ອງໃນມື້ນີ້,
ຢ່າລືມມື້ອື່ນ, "



ນາງ ມີເຊາະ ແລະ ນາງ ແຊເຊີະ ກຳລັງຮ້ອງເພງ ໃນຂະນະທີ່ເຂົາເຈົ້າຍ່າງປ່າ

*ບົດເຝິກຫັດ #19*

ທ່ານຮູ້ເພງພື້ນເມືອງໃດໜຶ່ງບໍ່ ? ຈົ່ງຝຶກແອບ ວິທີຮ້ອງເພງພື້ນເມືອງ ໃຫ້ກຸ່ມ ນັກທ່ອງທ່ຽວ. ຈົ່ງໃຊ້ຄວາມອົດທົນ. ການຮຽນຮ້ອງເພງ ຂອງນັກທ່ອງທ່ຽວ ຈະຕ້ອງໄດ້ໃຊ້ເວລາພໍສົມຄວນ.

## ຜະລິດຕະພັນເຄື່ອງປ່າຂອງດົງ

ໃນຫລາຍໆປະເທດ ປະຊາຊົນໄດ້ໄປຊື້ ຜະລິດຕະພັນສຳເລັດຮູບຢູ່ຕະຫຼາດ. ວັດຖຸດິບສ່ວນໃຫຍ່ ໄດ້ຜະລິດອອກມາ ຈາກນິຄົມກະເສດ ແລະ ຜ່ານຂະບວນການແປຮູບຢູ່ໃນໂຮງງານ ໃນສປປ ລາວ, ພວກເຮົາໄດ້ເກັບກູ້ພືດຜັກ ຊະນິດຕ່າງໆເຊັ່ນ: ຜັກ, ໝາກໄມ້, ຢາພື້ນເມືອງ ແລະ ວັດຖຸດິບຈາກປ່າທຳມະຊາດ. ນີ້ເປັນສິ່ງທີ່ນັກທ່ອງທ່ຽວ ສົນໃຈຫລາຍ ຊຶ່ງເຂົາເຈົ້າບໍ່ເຄີຍເຫັນຄົນ ໄປເກັບກູ້ສິ່ງເຫລົ່ານັ້ນຈາກປ່າ, ການເກັບໝາກໄມ້ ແລະ ຜັກຈາກປ່າ

ໝາກເປົ້າຍັງສາມາດປິ່ນປົວອາການເຈັບຕີນ. ວິທີກຽມຢາຄື ເອົາໝາກເປົ້າໄປຕົ້ມຈົນຟົດ ແລ້ວ ປົ່ງໄວ້ໄລຍະໜຶ່ງແລ້ວ ຖອກໃສ່ຊາມ ເອົາຕີນຈຸ່ມລົງ ສິບຕໍ່ເຮັດແນວນີ້ໄປປະມານ ສິບ ຫາ ສິບ ຫ້າ ນາທີ ຈົນກວ່າອາການເຈັບຈະດີຂຶ້ນເອງ.

ໝາກເປົ້າ ຫຍັງສາມາດໃຊ້ຍ້ອມສີທຳມະຊາດ ແທນສີແດງ. ທ່ານຈະເຫັນວ່າ ສີທາງໃນ ຂອງ ໝາກເປົ້າເປັນສີແດງ (ນາງ ຄຳ ຊີ້ໃຫ້ນັກທ່ອງທ່ຽວ ເຫັນສີທາງໃນຂອງໝາກເປົ້າ). ໃນເວລາຂ້ອຍ ເປັນເດັກນ້ອຍ ພວກເຮົານຳໃຊ້ ໝາກເປົ້າ ເປັນສີຍ້ອມເຄື່ອງ ໂດຍໃສ່ໝໍ້ຕົ້ມໃຫ້ຟົດແລ້ວ ເອົາເຄື່ອງແຊ່ໄວ້ປະມານໜຶ່ງ ຫາ ສອງ ຊົ່ວໂມງ ແລ້ວເອົາອອກມາຕາກໄວ້ ບ່ອນຮົ່ມເພື່ອບໍ່ໃຫ້ແສງແດດທຳລາຍສີ. ປະຈຸບັນນີ້ມີຫຼາຍຄົນ ໄດ້ໄປຊື້ສີແດງ ຈາກຕະຫຼາດແຕ່ກໍ່ຍັງມີບາງຄົນຍັງນຳໃຊ້ສີ ທຳມະຊາດແບບນີ້ຢູ່.

*ບົດເຝິກຫັດ #20*

> ຈົ່ງເລືອກເອົາພືດ ທີ່ເປັນຢາພື້ນເມືອງຊະນິດໜຶ່ງ. ຈົ່ງອະທິບາຍ ມັນນຳໃຊ້ ສຳລັບເຮັດຫຍັງ, ນຳໃຊ້ແນວໃດ, ມີຄຸນປະໂຫຍດຫຍັງແດ່ ແລະ ຊື່ທ້ອງຖິ່ນ ເອີ້ນວ່າແນວໃດ.

## ຕົວຢ່າງ: ນ້ຳມັນ ຍາງ

ນ້ຳມັນຍາງ ເປັນນ້ຳມັນທີ່ມີຄຸນປະໂຫຍດຫຼາຍ ເກັບກູ້ຈາກຕົ້ນຍາງທຳມະຊາດ ໂດຍຊາວ ບ້ານຢູ່ທົ່ວທຸກແຫ່ງຂອງ ປະເທດລາວ. ນ້ຳມັນນີ້ມັກ ນຳໃຊ້ທົ່ວໄປ ເພື່ອໄຕ້ຢູ່ໃນເຂດຊົນນະບົດໃນ ເມື່ອກ່ອນ. ນອກນັ້ນຍັງນຳໃຊ້ເພື່ອຈອດພື້ນເຮືອ ແລະ ທາຄຸໄມ້, ທາປ້ອງກັນແມງໄມ້ ແລະ ທາອຸປະກອນ ສຳລັບຈັບນົກ.ຂະບວນການກັ່ນຕອງໄດ້ອະທິບາຍຢູ່ຂ້າງລຸ່ມນີ້:

ເອົາພ້າ ບັກ ເຄິ່ງກາງຂອງຕົ້ນຍາງ ແຕ່ບໍ່ບັກຈົນຂາດ ເພື່ອເຮັດໃຫ້ນ້ຳມັນຍາງຍ້ອຍອອກ. ຫຼັງຈາກນັ້ນສາມວັນ ຊາວບ້ານ ຈະມາເກັບເອົານ້ຳມັນ ທີ່ຍ້ອຍອອກມາຈາກຕົ້ນ. ຈາກນັ້ນ ສອງ ສາມວັນໃດ ມາເກັບເອົາ ນ້ຳມັນຍາງເທື່ອໜຶ່ງ.

*ບົດເຝິກຫັດ #21*

> ຈົ່ງຂຽນລາຍຊື່ ບາງຜະລິດຕະພັນ ເຄື່ອງປ່າຂອງດົງ ຊຶ່ງນຳໃຊ້ ສຳລັບຜະລິດຫລາຍຢ່າງເຊັ່ນ: ເຮືອນຊານ, ເຄື່ອງເຟີນິເຈີ, ເຄື່ອງຫັດຖະກຳ ແລະ ເຄື່ອງມືຕ່າງໆ. ຈົ່ງຂຽນລາຍການໃຫ້ຫລາຍທີ່ສຸດ ເທົ່າທີ່ຈະຫລາຍໄດ້.



ຊາວບ້ານ ຕະອອງ ຢູ່ໃນເຂດປ່າສະຫງວນ
ແຫ່ງຊາດ ເຊປຽນ ກຳລັງອະທິບາຍ
ວິທີເກັບນ້ຳມັນຍາງ




ທ່ານ ລາວປາວ ກຳລັງອະທິບາຍ
ພຶດຕິກຳການກິນຂອງລີງ

ຕອນເຊົ້າ ທ່ານ ສາມາດໄດ້ຍິນສຽງລີງຮ້ອງເປັນບາງຄັ້ງຄາວ, ໂດຍສະເພາະໃນລະດູໜາວ ແລະ ລະດູແລ້ງ ທ່ານ ລາວປາວ ໄດ້ຊີ້ໃຫ້ນັກທ່ອງທ່ຽວເບິ່ງ ໝາກໄມ້ຊະນິດຕ່າງໆ, ຍອດ ແລະ ໃບໄມ້ ທີ່ລີງກິນເປັນອາຫານ, ສ່ວນຫລາຍລີງມັກກິນປະເພດໝາກໄມ້. ແຕ່ບາງຄັ້ງ ໃນຍາມບໍ່ມີໝາກໄມ້ ພວກມັນຈະກິນຍອດໃບໄມ້ ແລະ ເຄືອໄມ້ ເປັນອາຫານ. ທ່ານ ລາວປາວ ອະທິບາຍວ່າ: ຖ້າຢາກຮູ້ວ່າ ພວກລີງຢູ່ໃກ້ ຫຼື ໄກຈະຕ້ອງເບິ່ງຈາກ ຈຳນວນໝາກໄມ້: ຖ້າບໍ່ມີໝາກໄມ້ ເຫລືອ ຢູເປັນຈຳນວນຫລາຍ ພວກເຮົາ ຈະຮູ້ວ່າ ຈຳພວກລີງໄດ້ອາໄສ ຢູ່ບໍລິເວນນັ້ນ ຍ້ອນວ່າ ພວກເຂົາກຳລັງກິນໝາກໄມ້. ຂໍ້ມູນທັງໝົດເຫຼົ່ານີ້ລ້ວນແຕ່ເປັນສິ່ງທັບໃຈ ສຳລັບນັກທ່ອງທ່ຽວ.




ພູຢູ່ໃກ້ບ້ານທ່າຫລວງ ແມ່ນພູທີ່ມີລີງ
ອາໄສຢູ່ຈຳນວນຫລາຍ



ສະແດງ ໃຫ້ນັກທ່ອງທ່ຽວ
ເຫັນ ເຄືອໄມ້ທີ່ຖືກລີງແຫ້ນກິນ

*ບົດເຝິກຫັດ #22*

ຢູ່ບໍລິເວນໃກ້ບ້ານຂອງທ່ານ ມີສັດປ່າ ແລະ ນົກຊະນິດໃດແດ່ ? ເລືອກເອົາ ສັດປ່າຊະນິດໜຶ່ງທີ່ທ່ານຮູ້ດີ ແລະ ອະທິບາຍວ່າ ມັນອາໄສຢູ່ໃສ, ມັນມັກກິນຫຍັງ ແລະ ໃຜເປັນສັດຕູຂອງມັນ ແລະ ມັນເປັນສັດຕູຂອງໃຜ. ທ່ານຈະເອົານັກທ່ອງທ່ຽວ ໄປເບິ່ງສັດຊະນິດນີ້ ໄດ້ແນວໃດ ແລະ ຢູ່ໃສ ? ຕອນແລງ ຫຼື ຕອນເຊົ້າ ? ລະດູໜາວ ຫຼື ລະດູຝົນ ?

## ນິທານພື້ນເມືອງກ່ຽວກັບໂຕທະນີ

ຢູ່ໃກ້ບ້ານ ທ່າຫລວງ ມີບ້ານເຜົ່າກໍ (ອາຄາ) ສອງບ້ານ, ບ້ານ ນ້ຳໂລະ ແລະ ບ້ານພູແຍະ ຢູ່ໃກ້ບ້ານດັ່ງກ່າວ ມີຈຳນວນ ທະນີແກ້ມດຳ ຊຶ່ງເປັນຊະນິດພັນທີ່ຫາຍາກ ແລະ ໃກ້ຈະສູນພັນ, ໃນຫວ່າງບໍ່ດົນມານີ້ ມີນັກທ່ອງທ່ຽວຫຼາຍຄົນໄປຢ້ຽມຢາມເບິ່ງໂຕທະນີ ແລະ ຟັງສຽງຮ້ອງອັນອ່ອນຊ້ອຍຂອງມັນ.ເຖິງວ່າເຜົ່າອາຄາບາງຄົນ ຈະໃຊ້ທະນີເຮັດພິທີກຳ ແລະ ເອົາມາລ້ຽງໄວ້ເບິ່ງ,ແຕ່ຊາວບ້ານ ນ້ຳໂລະ ແລະ ຊາວບ້ານ ພູແຍະ ມີຄວາມເຊື່ອຖືວ່າ ການຂ້າ ທະນີ ເປັນສິ່ງທີ່ຜິດຕໍ່ຮີດຄອງຂອງເຂົາເຈົ້າ.




ຊາວບ້ານນ້ຳໂລະເຊື່ອວ່າ ການຂ້າທະນີ
ແມ່ນຜິດຕໍ່ຮີດຄອງ

ກ່ອນຈະເອົາລູກໜ້າໄປຍິງຈາກໜ້າເກັກນີ້, ລູກໜ້າຈະຕ້ອງໄດ້ເອົາໄປທາໃສ່ຢາພິດທຳມະຊາດ ຫຼື ເອີ້ນວ່າ ໜ້ອງ ເສຍກ່ອນ ຈຶ່ງເອົາໄປຍິງໄດ້. ຢາພິດນີ້ເອົາມາຈາກຕົ້ນສັບ ເອີ້ນວ່າໜ້ອງ. ຊຶ່ງເປັນຢາພິດ ທີ່ມີລິດສູງ ແລະ ຖ້ານາຍພານບັງເອີນຖືກລູກໜ້າໜ້ອງບາດ ຫຼື ລູກໜ້າໜ້ອງຂີດໃສ່ຮອຍບາດ ລາວກໍ່ຈະຕາຍ. ຢູ່ບ້ານຕະອອງຍັງໂຊກດີ ເພາະວ່າເຂົາເຈົ້າສາມາດປິ່ນປົວອາການນີ້ໄດ້ ຜູ້ທີ່ຖືກບາດເຈັບສາມາດປິ່ນປົວໄດ້ ດ້ວຍການກິນຈີ່ກະປູສົດ. ຊາວບ້ານນີ້ ໄດ້ເອົາໃຈໃສ່ຢ່າງເຄັ່ງຂັດ ໂດຍບໍ່ເອົາລູກໜ້າໜ້ອງ ໄປວາງໄວ້ຢູ່ໃກ້ກະປູ ເພາະຈະເຮັດໃຫ້ພິດຢາຂອງ ໜ້ອງ ເສຍຄຸນ.



ງານແຂ່ງຂັນ ຍິງໜ້າເກັກ ຢູ່ເມືອງ ວຽງພູຄາ
ແຂວງ ຫລວງນ້ຳທາ

*ບົດເຝິກຫັດ #24*

ໃຫ້ເອົາ ກັບດັກພື້ນເມືອງ ທີ່ໃຊ້ຈັບສັດ, ນົກ ຫລື ແມງໄມ້ ມາໃຫ້ນັກຮຽນຢູ່ຫ້ອງເບິ່ງ. ຈົ່ງອະທິບາຍ ວິທີນຳໃຊ້ກັບດັກ ແລະ ມັນໃຊ້ສຳລັບຫຍັງ. ຖ້າບໍ່ມີ ໃຫ້ທ່ານແຕ້ມຮູບແທນ.

## ຕົວຢ່າງ: ໄຊປາໃຫຍ່ (ຂາ)




ໄຊ ສຳລັບຈັບປາໃຫຍ່

ຊາວບ້ານເຂດ ດອນແດງ, ເມືອງ ປະທຸມພອນ, ແຂວງ ຈຳປາສັກ
ອ ະ ທ ິ ບ າ ຍ ວ ິ ທ ີ ກ າ ນ
ນຳໃຊ້ ອຸປະກອນຈັບປາແບບພື້ນເມືອງ, ຊຶ່ງເອີ້ນວ່າ(ຂາ). ຂາ ແມ່ນໄຊໃຫຍ່ມີປາກ
ກ້ວາງ, ປົກກະຕິແລ້ວເພິ່ນຈະໃສ່ໄວ້ຢູ່ແຄມນ້ຳ ເພື່ອຈັບປາໃຫຍ່.

ການໃສ່ໄຊຊະນິດນີ້ ເພິ່ນເອົາໃບໄມ້ ແລະ ເຫຍື່ອລໍ້ຄື: ກະດູກງົວ, ຄວາຍ ຍັດໃສ່ໃນໄຊ ເອົາໄຊແຊ່ນ້ຳທີ່ເລິກສົມຄວນ ປິ່ນປາກໄຊ ໃຫ້ຂະໜານກັບສາຍນ້ຳ ເມື່ອປາລອຍມາເຫັນຈະພາກັນເຂົ້າໄປຊື້ນຢູ່ໃນໄຊ ຊຶ່ງມີໃບໄມ້ ແລະ ກະດູກເໝັນ. ການໃສ່ໄຊ ແມ່ນແຊ່ປະໄວ້ຄ້າງຄືນ, ຕອນເຊົ້າມື້ຕໍ່ມາຈຶ່ງດຶງຂຶ້ນມາເທິງບົກ ເພື່ອເກັບເອົາປາ. ການກູ້ໄຊ ແມ່ນດຶງເຊືອກ ທີ່ມັດໃສ່ຫາງໄຊຂຶ້ນເທິງບົກ ໂດຍບໍ່ຕ້ອງລົງນ້ຳໃຫ້ປຽກຕົນໂຕ.




ຊາວບ້ານ ກຳລັງກະກຽມໄຊ ໄປໃສ່ປາ

ຊາວບ້ານຢ້ຳວ່າ ສະໄໝກ່ອນ ປະຊາຊົນໃຊ້ໄຊ ຫລາຍກວ່າໃຊ້ແຫ. ຍ້ອນວ່າໄຊເຮັດງ່າຍກວ່າແຫ ແລະ ການໃສ່ໄຊ ເປັນວິທີທີ່ງ່າຍກວ່າຄື: ເອົາໄຊປະໄວ້ຕອນແລງໃຫ້ປາເຂົ້າ ແ...
ສອນໃຫ້ຄົນຮຸ່...

*ບົດເຝິກຫັດ #25*

ໃນຫ້ອງຮຽນ ຈົ່ງອະທິບາຍ ປາຊະນິດໃດ ໂດຍທົ່ວໆໄປ ປະຊາຊົນເຄີຍຫາໄດ້
ຕ າ ມ ແ ມ ່ ນ ້ ຳ
ຕ່າງໆ ຢູ່ທ້ອງຖິ່ນ. ຈົ່ງອະທິບາຍ ວິທີການຫາປາແບບທົ່ວໄປ ຫາດ້ວຍວິທີໃດ. ຖ້ານັກທ່ອງທ່ຽວມີເວລາ ຈົ່ງພາເຂົາເຈົ້າໄປຫາປາ ແລະ ສອນວິທີໃຊ້ເຄື່ອງມືຫາປາແບບພື້ນເມືອງ ໃຫ້ ເຂົາເຈົ້າຮູ້ ເຊັ່ນ: ການໃສ່ມອງ.

## *ການນຳໃຊ້ ອິນຊີທັງຫ້າ*

ມີຫ້າທາງເລືອກ ທີ່ນັກທ່ອງທ່ຽວຄົນໜຶ່ງ ສາມາດຮຽນຮູ້ປະສົບການໃດໜຶ່ງ. ສິ່ງເຫລົ່ານັ້ນຄື: ສຽງ, ການເບິ່ງ, ລົດຊາດ, ກິ່ນ ແລະ ການຈັບບາຍ. ເມື່ອນຳພາທ່ຽວ, ທ່ານຕ້ອງອຳນວຍຄວາມສະດວກ ໃນການເຮັດກິດຈະກຳຕ່າງໆ, ຊຶ່ງສະແດງອອກ ດ້ວຍອິນຊີທັງຫ້າ. ຖ້າທ່ານມີແຕ່ເວົ້າ, ທ່ານຈະສະແດງອອກພຽງແຕ່ອິນຊີດຽວ (ສຽງ), ປະໄວ້ ສີ່ອິນຊີ ທີ່ຍັງບໍ່ໄດ້ໃຊ້. ລຸ່ມນີ້ ແມ່ນການອະທິບາຍຫຍໍ້ ວິທີນຳໃຊ້ ຫລື ການສະແດງອອກ ສຳລັບອິນຊີທັງຫ້າ.

**ສຽງ :** ນີ້ແມ່ນ ລວມເອົາການເວົ້າ ແລະ ການອະທິບາຍສິ່ງຕ່າງໆ ດ້ວຍປາກເປົ່າ. ມັນຍັງລວມເອົາການສອນ
ໃ ຫ ້
ນັກທ່ອງທ່ຽວ ກ່ຽວກັບສຽງນົກ, ແມງໄມ້ ແລະ ສັດປ່າອື່ນໆ. ຄືກັນກັບ ການຮ້ອງເພງ ແລະ ການເສບດົນຕີ ທີ່ໃຊ້ເຄື່ອງດົນຕີພື້ນເມືອງຕ່າງໆ ລ້ວນແລ້ວສະແດງອອກ ແບບຄຸນລັກສະນະນີ້.

**ການເບິ່ງ :** ນີ້ແມ່ນວິທີການສະແດງ ດ້ວຍວັດຖຸສິ່ງຂອງ ຫລື ການສາທິດກິດຈະກຳຕ່າງໆ ໂດຍການໃຊ້ພຶດຕິກຳຕົວຈິງ. ນັກທ່ອງທ່ຽວສາມາດຮຽນຮູ້ ດ້ວຍການເບິ່ງທ່ານເຮັດສິ່ງໃດສິ່ງໜຶ່ງ ເຊັ່ນ: ການສະແດງພິທີສະເຫລີມສະຫລອງໃດໜຶ່ງ ຫລື ການເຮັດເຄື່ອງຫັດຖະກຳໃດໜຶ່ງ. ເຂົາເຈົ້າສາມາດຮຽນຮູ້ ດ້ວຍການເຫັນວັດຖຸສິ່ງຂອງ ຫລື ຜ່ານການເຫັນຮູບແຕ້ມຕ່າງໆ.

**ລົດຊາດ :** ການອະທິບາຍລົດຊາດຂອງພືດ, ຕົ້ນໄມ້ຊະນິດໃດໜຶ່ງ ຫລື ອາຫານ ສິ່ງທີ່ດີທີ່ສຸດ ແມ່ນ ການອະນຸຍາດໃຫ້ນັກທ່ອງທ່ຽວ ລອງຊີມສິ່ງນັ້ນ, ທີ່ມັນບໍ່ເປັນພິດ (ບໍ່ເບື່ອ) !

**ກິ່ນ :** ກິ່ນຫອມຈາກອາຫານ, ພືດຕ່າງໆ, ທຳມະຊາດ ແລະ ສິ່ງອື່ນໆ ທີ່ນັກທ່ອງທ່ຽວມີຄວາມສົນໃຈ ແລະ ແຕກຕ່າງສຳລັບເຂົາເຈົ້າ ບັນດານັກທ່ອງທ່ຽວທີ່ໄດ້ຮັບອະນຸຍາດ ໃຫ້ເຂົ້າເຮືອນຄົວຂອງທ່ານ ແລະ ຊ່ວຍແຕ່ງກິນນັ້ນເປັນກິດຈະກຳທີ່ດີຢ່າງໜຶ່ງ ສຳລັບຄວາມຮູ້ສຶກນີ້. ເຊີນນັກທ່ອງທ່ຽວເຂົ້າໃນເຮືອນຂອງທ່ານ, ພາເຂົາເຈົ້າເຂົ້າໄປໃນປ່າ ຫລື ເຂົ້າໄປໃນເຂດກະສິກຳຕ່າງໆນີ້ ກໍ່ສະແດງອອກເຖິງຄຸນລັກສະນະນີ້.

**ການສຳພັດ :** ນັກທ່ອງທ່ຽວ ຕ້ອງການຮຽນຮູ້ໂດຍກົງ ຈາກປະສົບການທ້ອງຖິ່ນ ໃນ ສປປ ລາວ ເຊັ່ນ: ການຫາປາ, ການແຕ່ງກິນ, ເກັບໝາກໄມ້ ແລະ ພືດຕ່າງໆ, ການດຳນາ (ປູກເຂົ້າ) ຜະລິດເຄື່ອງຫັດຖະກຳຕ່າງໆ ແລະ ສິ່ງອື່ນອີກຫລາຍຢ່າງ. ມັນເປັນສິ່ງທີ່ດີ ທີ່ໃຫ້ນັກທ່ອງທ່ຽວ ຊ່ວຍວຽກເຮືອນ ແລະ ກິດຈະກຳອື່ນໆ. ຄ້າຍຄືກັນກັບຕົວຢ່າງທີ່ໄດ້ເວົ້າມາຂ້າງເທິງນີ້ ຄື: ການປຸງແຕ່ງອາຫານ ຍີ່ປຸ່ນ, ທາງທີ່ດີທີ່ສຸດ ສຳລັບການຮຽນຮູ້ສິ່ງໃດສິ່ງໜຶ່ງ ແມ່ນການເຮັດຕົວຈິງ !

*ບົດເຝິກຫັດ #26*

ກະລຸນນາ ອະທິບາຍ ຫ້າກິດຈະກຳ, ທີ່ທ່ານສາມາດເຮັດ ຮ່ວມກັບນັກທ່ອງທ່ຽວ ຊຶ່ງກ່ຽວຂ້ອງກັບ ແຕ່ລະອິນຊີທັງຫ້າ.

ນັກທ່ອງທ່ຽວສ່ວນຫລາຍ ບໍ່ເຄີຍຕຳເຂົ້າ. ຖ້າທ່ານຕ້ອງການສາທິດວິທີຕຳເຂົ້າໃສ່ ຄົກມອງ. ທ່ານສາມາດສາທິດໃຫ້ນັກທ່ອງທ່ຽວຮູ້ ກ່ຽວກັບເຂົ້າເປືອກ ແລະ ພິສູດ ວິທີເອົາເຂົ້າໃສ່ຄົກມອງ. ຫລັງຈາກນັ້ນ, ທ່ານກໍ່ນຳເອົາສາກ ມາຕຳເຂົ້າດັ່ງກ່າວ ສອງ ເຖິງ ສາມຄັ້ງ. ຂັ້ນຕອນສຸດທ້າຍ, ທ່ານ ອາດສາທິດ ໃຫ້ນັກທ່ອງທ່ຽວເຫັນຄວາມແຕກຕ່າງ ຂອງເຂົ້າກ່ອນຕຳ ແລະ ຫລັງການຕຳ. ນັກທ່ອງທ່ຽວອາດຈະເຂົ້າໃຈໄວວ່າສິ່ງນີ້ ແມ່ນໃຊ້ສຳລັບເຮັດຫຍັງ. ຕອນນີ້ບໍ່ມີຄຳເວົ້າ ມີແຕ່ການກະທຳຕົວຈິງ.


ບັນດາ ພະນັກງານນຳທ່ຽວນີ້
ກຳລັງສາທິດວິທີຕຳເຂົ້າ

ໃນເມື່ອສາທິດ ສິ່ງໃດສິ່ງໜຶ່ງ ທີ່ມີການສັບສົນຂຶ້ນ, ທ່ານຄວນຈະແຍກການສາທິດ ອອກເປັນຫລາຍພາກ ເພື່ອເຮັດໃຫ້ມັນງ່າຍຂຶ້ນ. ຄືກັບການກິນຊີ້ນສະເຕັກ (ຊີ້ນປ່ຽງໃຫຍ່), ການຕັດ ຫລື ແຍກ ການສາທິດອອກເປັນຫລາຍປ່ຽງນ້ອຍ ແລະ ເຮັດໃຫ້ເຂົ້າໃຈງ່າຍກວ່າເກົ່າ.


ຈິມ ຈອນສັນ

1. ພາກທຳອິດ ສະແດງການເຄື່ອນໄຫວດ້ວຍມືຈາກການຟ້ອນ.
2. ພາກຕໍ່ໄປ, ທ່ານອາດຈະສາທິດ ການເຄື່ອນຍ້າຍຕີນ.


ຈິມ ຈອນສັນ

3. ຫລັງຈາກນັ້ນ, ສາທິດວິທີການວາງຕົວຂອງເພດຍິງ, ເພດຊາຍ ແລະ ວິທີເຄື່ອນຍ້າຍນຳກັນແບບໃດ.
4. ພາກສຸດທ້າຍ, ສາທິດບົດຟ້ອນທັງໝົດ.

*ບົດເຝິກຫັດ #27*

ສາທິດໃຫ້ນັກຮຽນ ໃນຫ້ອງຂອງທ່ານ ດ້ວຍບົດຟ້ອນ ຫລື ບົດເພງພື້ນເມືອງ ໃດໜຶ່ງ. ຈົ່ງແຍກບົດຟ້ອນ ຫລື ບົດເພງ ອອກເປັນສາມ ຫລື ຫລາຍພາກ, ສາທິດແຕ່ລະພາກຕ່າງຫາກ. ສຸດທ້າຍ, ສາທິດບົດຮ້ອງ ຫລື ບົດຟ້ອນ ຕອນສຸດທ້າຍໃຫ້ຈົບ.

## ບົດບັນທຶກ ກ່ຽວກັບການສະແດງ ຫລື ການສາທິດທີ່ເໝາະສົມທາງດ້ານວັດທະນະທໍາ

ຖ້າທ່ານໝັ້ນໃຈວ່າສິ່ງໃດທີ່ແມ່ນຄວາມບໍ່ເໝາະສົມທາງດ້ານວັດທະນະທຳ ທີ່ຈະສະແດງ/ ສາທິດ, ທ່ານບໍ່ຈໍາເປັນທີ່ຈະເຮັດການສະແດງ. ຕົວຢ່າງ : ເຜົ່າກໍ (ອາຄາ) ຄົນໜຶ່ງອາດຈະຮູ້ສຶກໜ້າອາຍທີ່ສະແດງວິທີນໍາໃຊ້ ໂອນຊາ ໃນໄລຍະບໍ່ແມ່ນບຸນປີໃໝ່, ເພາະວ່າມັນເປັນສິ່ງທີ່ຂະລໍາ ທີ່ຈະ ສະແດງ ຫລື ສາທິດ. ໃນກໍລະນີທີ່ພະນັກງານນໍາທ່ຽວ ບໍ່ອາດຮຽກຮ້ອງໃຫ້ມີການສາທິດ ຫລື ສະແດງ ແລະ ທ່ານສາມາດທົດແທນການສະແດງນັ້ນດ້ວຍການອະທິບາຍ ການນໍາໃຊ້ ໂອນຊາ ໂດຍບໍ່ໄດ້ມີການສະແດງວິທີນໍາໃຊ້ ໂອນຊາ.



ການສະແດງ ຫລື ການເຮັດພິທີບາສີ ແມ່ນສິ່ງໜຶ່ງທີ່ທ່ານສາມາດເຮັດ ໃນເມື່ອນັກທ່ອງທ່ຽວມາຢ້ຽມຢາມບ້ານຂອງທ່ານ

## ການແນະນໍາ ດ້ວຍການເຮັດຕົວຈິງ (ປະສົບການ ແລະ ກິດຈະກໍາຕ່າງໆ)

ທາງເລືອກທີ່ດີທີ່ສຸດ ສໍາລັບນັກທ່ອງທ່ຽວ ເພື່ອຮຽນຮູ້ກ່ຽວກັບສິ່ງໃດສິ່ງໜຶ່ງ ແລະ ສິ່ງທີ່ສະໜຸກສະໜານມ່ວນຊື່ນ ສໍາລັບເຂົາເຈົ້າ ແມ່ນໄດ້ເຂົ້າຮ່ວມຕົວຈິງ ໃນກິດຈະກໍາຂອງທ້ອງຖິ່ນ. ເຖິງແມ່ນວ່ານັກທ່ອງທ່ຽວ ຢູ່ໃນໄລຍະ ພັກແລ້ງກໍ່ຕາມ, ນັກທ່ອງທ່ຽວຈໍານວນໜຶ່ງ ອາດຈະມັກຊ່ວຍຊາວບ້ານ ເຮັດວຽກປະຈໍາວັນຂອງຊາວບ້ານ. ນັກທ່ອງທ່ຽວຫລາຍຄົນບໍ່ຖືສາ ເລື່ອງການເປື້ອນເລັກໆ ໜ້ອຍໆ ແລະ ພະຍາຍາມຊອກຮູ້ສິ່ງໃໝ່ໆ.



ມັນເປັນຂໍ້ຫ້າມ (ສິ່ງຂະລໍາ) ທີ່ຈະໃຊ້ໂອນຊາ ຂອງ ເຜົ່າກໍ ໃນໄລຍະທີ່ບໍ່ແມ່ນປີໃໝ່ ຂອງເຂົາເຈົ້າ

ຫລາຍໆ ກິດຈະກໍາທົ່ວໆໄປໃນບ້ານ ແມ່ນມີຄວາມສົນໃຈ ແລະ ສະໜຸກສະໜານ ສໍາລັບນັກທ່ອງທ່ຽວ. ທ່ານບໍ່ຈໍາເປັນຮູ້ພາສາຕ່າງປະເທດ ເພື່ອເຊີນນັກທ່ອງທ່ຽວຄົນໃດຄົນໜຶ່ງ ເຮັດກິດຈະກໍາຮ່ວມກັບທ່ານ.

ນີ້ແມ່ນລາຍການ ຈາກບາງກິດຈະກໍາ ທີ່ທ່ານອາດຈະເຊີນນັກທ່ອງທ່ຽວ ເຮັດກິດຈະກໍາຮ່ວມກັບທ່ານ:

- ປູກເຂົ້າ.
- ເກັບກ່ຽວເຂົ້າ
- ເສຍຫຍ້າ
- ຟາດເຂົ້າ
- ຕໍາເຂົ້າ
- ປູກພືດ/ຜັກຕ່າງໆ
- ເກັບພືດ/ຜັກຕ່າງໆ

ຄຳຕອບທີ່ສຳຄັນ ກ່ຽວກັບການແນະນຳ ແມ່ນຄວາມອົດທົນ, ໃຊ້ເວລາທີ່ຈະສອນນັກທ່ອງທ່ຽວ ແລະ ຈາກນັ້ນ ໃຫ້ເຂົາເຈົ້າ ລອງເຮັດກິດຈະກຳເອງ, ເຖິງແມ່ນວ່າ ເຂົາເຈົ້າບໍ່ສາມາດເຮັດກິດຈະກຳນັ້ນ ດີເທົ່າທີ່ຄວນກໍ່ຕາມ.

*ບົດເຝິກຫັດ #29:*

ຈົ່ງເລືອກໜຶ່ງກິດຈະກຳ ເພື່ອສອນໃຫ້ບັນດານັກທ່ອງທ່ຽວ ແລະ ເຮັດຮ່ວມກັບເຂົາເຈົ້າ. ສ້າງແຜນວິທີການສອນ ໃຫ້ແກ່ນັກທ່ອງທ່ຽວ. ສຸດທ້າຍ, ເອົານັກທ່ອງທ່ຽວກຸ່ມໜຶ່ງ ມາບ້ານຂອງທ່ານເຄິ່ງມື້ ເພື່ອເຮັດກິດຈະກຳຮ່ວມກັນທ່ານ.

### ບັນດາກິດຈະກຳ ທີ່ເໝາະສົມ ທາງດ້ານວັດທະນະທຳ

ຖ້າທ່ານໝັ້ນໃຈວ່າ ກິດຈະກຳໜຶ່ງ ທີ່ບໍ່ເໝາະສົມ ທາງດ້ານວັດທະນະທຳ ເພື່ອເຮັດຮ່ວມກັບ ນັກທ່ອງທ່ຽວ ຄົນໃດຄົນໜຶ່ງ, ທ່ານບໍ່ເຂົ້າໃຈທີ່ປະຕິບັດກິດຈະກຳ. ຕົວຢ່າງ : ມີບາງກິດຈະກຳ ທີ່ອາດບໍ່ເໝາະສົມ ສຳລັບເພດຍິງເຂົ້າຮ່ວມ ແລະ ກົງກັນຂ້າມ ບາງກິດຈະກຳ ອາດຈະບໍ່ເໝາະສົມ ສຳລັບເພດຊາຍເຂົ້າຮ່ວມຄືກັນ. ໃນບາງບ້ານ ຕົວຢ່າງ : ມັນບໍ່ເໝາະສົມ ສຳລັບເພດຍິງຈັບຊີ້ນ. ໃນກໍລະນີນັ້ນ, ມັນອາດຈະບໍ່ເໝາະສົມ ສຳລັບນັກທ່ອງທ່ຽວຍິງ ທີ່ຈະເຂົ້າຮ່ວມໃນກິດຈະກຳ ກ່ຽວກັບການປຸງແຕ່ງຊີ້ນ (ເຮັດອາຫານປະເພດຊີ້ນ). ເພື່ອທົດແທນສິ່ງດັ່ງກ່າວ, ທ່ານອາດຈະຖາມ ຫລື ແນະນຳ ນັກທ່ອງທ່ຽວເພດຍິງ ເພື່ອເຂົ້າຮ່ວມ ກິດຈະກຳການປຸງແຕ່ງພືດຜັກຊະນິດຕ່າງໆ ໃນຂະນະທີ່ ນັກທ່ອງທ່ຽວເພດຊາຍ ປຸງແຕ່ງປະເພດຊີ້ນ ຕົວຢ່າງ : ມັນອາດຈະບໍ່ເໝາະສົມ ສຳລັບນັກທ່ອງທ່ຽວຊາຍຜູ້ໜຶ່ງ ໄປເຂົ້າປ່າ ກັບແມ່ຍິງຊາວບ້ານຜູ້ໜຶ່ງ (ໄປໜຶ່ງຕໍ່ໜຶ່ງ) ເພື່ອເກັບໜໍ່ໄມ້. ມັນອາດຈະດີກວ່າ ຖ້າວ່ານັກທ່ອງທ່ຽວໄປກັບກຸ່ມແມ່ຍິງ ແລະ ຜູ້ຊາຍໃນບ້ານເປັນກຸ່ມ ຫລື ໝູ່ຄະນະ. ມີຫລາຍໆ ຕົວຢ່າງ ເຊັ່ນ : ມັນຂຶ້ນຢູ່ກັບທ່ານທີ່ຈະກຳນົດວ່າ ສິ່ງໃດເໝາະສົມ ແລະ ສິ່ງໃດບໍ່ເໝາະສົມ ແລະ ເພື່ອປັບປຸງ ບັນດາກິດຈະກຳຂອງທ່ານໃຫ້ສອດຄ່ອງ.

*ບົດເຝິກຫັດ #30*

ມີກິດຈະກຳໃດແດ່ ທີ່ທ່ານຮູ້ສຶກວ່າ ບໍ່ເໝາະສົມ ທີ່ຈະເຮັດຮ່ວມກັບ ນັກທ່ອງທ່ຽວ ? ຍ້ອນຫຍັງ ?

## ການແນະນຳ ດ້ວຍການປາກເວົ້າ (ການອະທິບາຍ)

ວິທີນຳໃຊ້ແບບທົ່ວໆໄປ, ຊຶ່ງທ່ານສາມາດສອນນັກທ່ອງທ່ຽວ ກ່ຽວກັບຄວາມຮູ້ ແລະ ປະສົບການທ້ອງຖິ່ນຂອງທ່ານ ແມ່ນຜ່ານການອະທິບາຍແບບປາກເປົ່າ. ມີຫລາຍວິທີການພື້ນຖານ ທີ່ທ່ານຈຳເປັນ ທີ່ຈະຕ້ອງຮູ້ກ່ອນ ເພື່ອການອະທິບາຍທີ່ດີ ໃຫ້ນັກທ່ອງທ່ຽວ. ເມື່ອທ່ານເບິ່ງການສະແດງໜຶ່ງ ຫລື ການສະແດງໃນໂທລະທັດ, ທ່ານອາດຈະສັງເກດ ບາງສິ່ງບາງຢ່າງ ທີ່ກ່ຽວກັບນັກສະແດງ : ເຂົາເຈົ້າບໍ່ເຄີຍ ປິ່ນຫລັງຕໍ່ໜ້າຜູ້ຊົມ, ທ່ານຍາມໃດກໍ່ເຫັນໜ້າເຂົາເຈົ້າ. ເຂົາເຈົ້າເວົ້າສຽງດັງ ; ສະນັ້ນ ທຸກຄົນສາມາດໄດ້ຍິນເຂົາເຈົ້າ. ເຂົາເຈົ້າປ່ຽນລະດັບສຽງຄໍ ເພື່ອໃຫ້ເຫັນຄວາມຮູ້ສຶກ ໃນເວລາເສຍໃຈ, ຫງ່ວມເຫງົາ, ມ່ວນຊື່ນ, ໃຈຮ້າຍ ຫລື ຕື່ນເຕັ້ນ. ເຂົາເຈົ້າກໍ່ຈະນຳໃຊ້ມື ແລະ ແຂນຂອງເຂົາເຈົ້າ ເພື່ອເນັ້ນຄວາມຮູ້ສຶກຫລາຍຢ່າງ ທີ່ແຕກຕ່າງ. ຄືກັນກັບ ພະນັກງານນຳທ່ຽວຂັ້ນບ້ານ ທ່ານຄວນຈະເຮັດໃຫ້ຕົວຂອງທ່ານ ເປັນທີ່ໜ້າສົນໃຈ, ປະທັບໃຈ ຄືກັນກັບນັກສະແດງໃນຮູບເງົາ ຫລື ໂທລະທັດ.



ຜູ້ນຳທ່ຽວຄົນນີ້ ບໍ່ຮູ້ເວົ້າ (ຫູໜວກ) ພາສາອັງກິດ; ສະນັ້ນ, ລາວໃຊ້ການກະທຳ ເພື່ອອະທິບາຍ ຄວາມໝາຍວ່າແນວໃດ



ພະນັກງານນຳທ່ຽວສອງທ່ານນີ້ ສາທິດ ວິທີ ປົວງູຕອດ ໂດຍຜ່ານການເປົ່າ

**ການສະແດງທ່າທາງ** : ໃຊ້ມືຂອງທ່ານ, ແຂນ ແລະ ຮ່າງກາຍຂອງທ່ານ ເພື່ອຊ່ວຍທ່ານ ໃນການອະທິບາຍໃຫ້ມີຄວາມປະທັບໃຈກວ່າເກົ່າ. ການເບິ່ງຜູ້ໃດຜູ້ໜຶ່ງຢືນຊື່ໆ ໃນຂະນະທີ່ ເຂົາເຈົ້າເວົ້າຢູ່ອາດຈະເຮັດໃຫ້ເບື່ອ ຫລື ເຊັງ. ນັກສະແດງຜູ້ທີ່ໃຊ້ການເຄື່ອນໄຫວແມ່ນ ສະໜຸກສະໜານ ທີ່ຈະເບິ່ງ; ນັກສະແດງຜູ້ມີແຕ່ເວົ້າ ຈະເຮັດໃຫ້ເຮົາເຫງົານອນ.ຈົ່ງຊີ້ບອກສິ່ງຂອງຕ່າງໆ; ໃຊ້ແຂນຂອງທ່ານ ເພື່ອຊີ້ບອກບາງສິ່ງບາງຢ່າງ ທີ່ຄ້າຍຄືກັນ; ສ້າງພຶດຕິກຳ ເພື່ອຊ່ວຍນັກທ່ອງທ່ຽວ ວາດພາບທ່ານອະທິບາຍ ກ່ຽວກັບຫຍັງ ຫລື ເຄື່ອນຍ້າຍໄປມາເລັກນ້ອຍ ເພື່ອໃຫ້ຜູ້ຄົນເຫລົ່ານັ້ນບໍ່ເບື່ອທີ່ແນມເບິ່ງທ່ານ.

**ສຳນຽງ**: ທ່ານຄວນຈະປ່ຽນສຳນຽງຂອງສຽງ ເພື່ອເນັ້ນໜັກຄວາມຮູ້ສຶກຕ່າງໆ ທີ່ແຕກຕ່າງກັນ. ຕົວຢ່າງ: ຖ້າທ່ານກຳລັງອະທິບາຍສັດຕົວໜຶ່ງກຳລັງຈັບເຫຍື່ອ ຂອງມັນດ້ວຍວິທີໃດ ຫລື ແບບໃດ, ທ່ານອາດຈະເລີ່ມທຳອິດ ດ້ວຍສຽງທີ່ອ່ອນນຸ້ມ ເພື່ອເນັ້ນໂຕສັດນັ້ນ ກຳລັງເຄື່ອນຍ້າຍງຽບໆຜ່ານປ່າ. ຫລັງຈາກນັ້ນ ທ່ານອາດສືບຕໍ່ ດ້ວຍນ້ຳສຽງດັງຂຶ້ນ ແລະ ດັງຂຶ້ນກວ່າເກົ່າ ຈົນເຖິງຂັ້ນສຸດທ້າຍ ທີ່ສັດຕົວດັ່ງກ່າວ ຂ້າເຫຍື່ອຂອງມັນ. ຖ້າວ່າທ່ານທົດແທນ ແບບນ້ຳສຽງໂທນດຽວ ບໍ່ມີສຽງຂຶ້ນສຽງລົງທີ່ຫລາກຫລາຍ, ນັກທ່ອງທ່ຽວຈະຮູ້ສຶກເບື່ອ ແລະ ບໍ່ມີຄວາມສົນໃຈ.

**ການສື່ສານດ້ວຍຕາ**: ຄວນຈະກວາດສາຍຕາເບິ່ງແຂກຂອງທ່ານ ໃນຂະນະທີ່ທ່ານກຳລັງເວົ້າ. ເພື່ອສະແດງໃຫ້ເຫັນວ່າ ທ່ານກຳລັງເວົ້າກັບໝົດທຸກຄົນໃນກຸ່ມ ຫລື ຄະນະ, ທ່ານຕ້ອງຫລຽວເບິ່ງຕາຂອງທຸກໆ ຄົນ. ແທນທີ່ທ່ານຫລຽວຕາເບິ່ງພຽງຄົນດຽວ ໃນຂະນະທີ່ທ່ານກຳລັງ ອະທິບາຍ, ແຂກ ຄົນອື່ນຂອງທ່ານ ຈະຮູ້ສຶກວ່າ ທ່ານລືມເຂົາເຈົ້າ ແລະ ບໍ່ໄດ້ເວົ້ານຳເຂົາເຈົ້າ ທ່ານຄວນມອງອ້ອມຮອບກຸ່ມ ແລະ ເຫລືອດມອງແຕ່ລະຄົນໃນໝູ່ຄະນະ ແລະ ເຮັດໃຫ້ເຂົາເຈົ້າໝົດທຸກຄົນຮູ້ສຶກວ່າ ໄດ້ຮ່ວມຢູ່ໃນຄະນະດຽວກັນກັບທ່ານ.

**ລະດັບສຽງ** : ບາງຄັ້ງຄາວທ່ານຈະຢູ່ໃນກຸ່ມທີ່ມີຫົກຄົນ ຫລື ຫລາຍກວ່າ. ທ່ານຄວນເວົ້າດັງພຽງພໍ ເພື່ອໃຫ້ຄົນຟັງທ່ານ, ເຖິງແມ່ນວ່າເຂົາເຈົ້າບໍ່ສາມາດເຂົ້າໃຈທຸກຢ່າງ ສິ່ງທີ່ທ່ານເວົ້າ.ທ່ານຄວນຈະເວົ້າສຽງດັງເພື່ອວ່າຜູ້ຄົນຢູ່ຂ້າງຫລັງສາມາດໄດ້ຍິນ. ກ່ອນທ່ານຈະເລີ່ມເວົ້າ ຫລື ອະທິບາຍ. ທ່ານຄວນຈະຖາມຜູ້ຄົນຢູ່ຂ້າງຫລັງວ່າເຂົາເຈົ້າສາມາດໄດ້ຍິນທ່ານ ຫລື ບໍ່ ?.

ບົດເຝິກຫັດ #33

ຈົ່ງຂຽນເຫດຜົນ 3 ຢ່າງ ເປັນຫຍັງ ທ່ານ ຕ້ອງການເປັນພະນັກງານນຳທ່ຽວ ?

## ການພົວພັນ ກັບບັນດານັກທ່ອງທ່ຽວ

ຖ້າພະນັກງານນຳທ່ຽວ ແມ່ນເປັນຄົນດຽວທີ່ເວົ້າຢູ່ ຫລື ອະທິບາຍ, ບັນດານັກທ່ອງທ່ຽວ ຈະຮູ້ສຶກເບື່ອ ແລະ ບໍ່ຢາກຟັງ. ຂັ້ນຕອນສຸດທ້າຍ ຂອງແຕ່ລະຄຳອະທິບາຍ. ທ່ານຄວນຖາມນັກທ່ອງທ່ຽວຢູ່ສະເໝີວ່າແຕ່ລະຄົນມີຄຳຖາມທີ່ຈະຖາມບໍ່ ເພື່ອກວດເບິ່ງຄວາມເຂົ້າໃຈ ແລະ ຄຳຄິດເຫັນຈາກເຂົາເຈົ້າ. ທ່ານຍັງສາມາດຖາມຄຳຖາມຕ່າງໆສຳລັບຈຸດປະສົງ ເພື່ອແນໃສ່ດຶງດູດຄວາມສົນໃຈ ຂອງນັກທ່ອງທ່ຽວກັບສິ່ງທີ່ພວກທ່ານອະທິບາຍ. ຕົວຢ່າງ : ອຸປະມາວ່າ ທ່ານຈະອະທິບາຍ ວິທີນຳໃຊ້ຄົກມອງຕຳເຂົ້າ, ທ່ານອາດຈະເລີ່ມຖາມເຂົາເຈົ້າດ້ວຍຄຳຖາມງ່າຍໆ "ມີຜູ້ໃດຮູ້ບໍ່ວ່າອັນນີ້ແມ່ນຫຍັງ ?" ຄຳຖາມນີ້ ເປັນສິ່ງທີ່ໜ້າສົນໃຈ ແລະ ມີປະສິດທິຜົນກວ່າເວົ້າແບບທຳມະດາກັບນັກທ່ອງທ່ຽວ ອັນນີ້ແມ່ນຫຍັງ ແລະ ເວົ້າຍາວ. ຍິ່ງໄປກວ່ານັ້ນ, ສະຖານະການແບບນີ້ ທ່ານຄວນເຮັດເກມງ່າຍໆ ໂດຍການເວົ້າ "ຄົນທຳອິດທີ່ເດົາກ່ອນ ວ່າອັນນີ້ແມ່ນຫຍັງ ຈະເປັນຄົນທຳອິດ ທີ່ຈະລອງ ຫລື ໃຊ້ກ່ອນໝູ່" ນີ້ເຮັດໃຫ້ການອະທິບາຍຂອງທ່ານ ສະໜຸກສະໜານ ແລະ ເບີກບານມ່ວນຊື່ນ ໃຫ້ແກ່ນັກທ່ອງທ່ຽວຂຶ້ນຕື່ມ. ພາຍຫລັງການອະທິບາຍ ວິທີນຳໃຊ້ຄົກມອງແລ້ວ,ໃນຂັ້ນຕອນສຸດທ້າຍ ທ່ານອາດຈະອະນຸຍາດໃຫ້ນັກທ່ອງທ່ຽວຄົນອື່ນໆ ປ່ຽນກັນໃຊ້ ຫລື ທົດລອງເຮັດກິດຈະກຳນັ້ນ.

## ການເຮັດວຽກກັບຜູ້ແປພາສາ

ຜູ້ນຳທ່ຽວຂອງບ້ານຫລາຍຄົນ ຈະໃຊ້ເວລາຢ່າງໜ້ອຍໜຶ່ງ ເຖິງສອງ ປີ ເຮັດວຽກກັບຜູ້ແປພາສາ ຈົນກະທັ້ງເຂົາເຈົ້າ ມີຄວາມສາມາດດຳເນີນໃນການເວົ້າ ພາສາຕ່າງປະເທດຂັ້ນພື້ນຖານທີ່ຈຳເປັນ ສຳລັບການອະທິບາຍ ໃຫ້ນັກທ່ອງທ່ຽວ. ເພື່ອນຳໃຊ້ພາສາໃຫ້ຖືກຕ້ອງ ແມ່ນຕ້ອງໃຊ້ເວລາ ໃນການຝຶກພໍສົມຄວນເພື່ອໃຫ້ມີຄວາມຊຳນິຊຳນານ . ປັດໃຈຕໍ່ໄປນີ້ ແມ່ນສຳລັບການແປພາສາ ທີ່ຄວນເອົາໃຈໃສ່.



ຮູບຂອງພະນັກງານນຳທ່ຽວຂັ້ນບ້ານ ກຳລັງເວົ້າ ແລະ ພະນັກງານນຳທ່ຽວຂັ້ນແຂວງ ກຳລັງແປພາສາ

**<u>ເວົ້າໃນລະດັບຊ້າ</u>:** ທ່ານຄວນຈະເວົ້າຊ້າ ແລະ ອະນຸຍາດຜູ້ແປ ພາສາ ແປເປັນໄລຍະ (ເປັນຂັ້ນຕອນ) ຖ້າຫາກທ່ານເວົ້າ ຖ້າທ່ານເວົ້າໄວໂພດ, (ຜູ້ແປພາສາຈະລືມຫລາຍຢ່າງສິ່ງທີ່ທ່ານເວົ້າ ແລະ ຈະບໍ່ສາມາດແປຄວາມໝາຍ ຫລື ປະໂຫຍກຂອງທ່ານ ສຳເລັດໄດ້.

**<u>ແຍກລະຫວ່າງ ແຕ່ລະແນວຄວາມຄິດ</u>:** ຫລັງແຍກ ແຕ່ລະແນວຄວາມຄິດຕົ້ນຕໍ, ທ່ານຄວນຢຸດ ແລະ ປ່ອຍໃຫ້ຜູ້ແປພາສາ ແປຄວາມໝາຍນັ້ນ, ຕົວຢ່າງ : ອຸປະມາວ່າ ທ່ານຕ້ອງການອະທິບາຍຂໍ້ມູນດັ່ງຕໍ່ໄປນີ້ ກ່ຽວກັບຢາພື້ນເມືອງ (ພືດ) :

ຄົນໜຶ່ງວ່າ ທ່ານຈະບໍ່ມັກລົມ ກ່ຽວກັບປະເດັນດັ່ງກ່າວ ໂດຍການເວົ້າ " ຂ້ອຍບໍ່ມັກລົມ ກ່ຽວກັບປະເດັນນັ້ນ ເຮົາມາພາກັນລົມເລື່ອງກ່ຽວກັບສິ່ງອື່ນໆກັນເທາະ". ມັນເປັນການດີ ໃນກໍລະນີ ທີ່ເວົ້າໂດຍກົງກັບນັກທ່ອງທ່ຽວ ແລະ ບອກເຂົາເຈົ້າວ່າ ບາງສິ່ງທີ່ບໍ່ເໝາະສົມທີ່ຈະກ່າວເຖິງ.

### ຝຶກຕົວຈິງກັບຜູ້ແປພາສາ:

ກ່ອນທີ່ທ່ານຈະນຳພານັກທ່ອງທ່ຽວ ອອກເດີນທາງທ່ອງທ່ຽວ, ທ່ານຄວນໃຊ້ເວລາກັບຜູ້ແປພາສາ. ສະນັ້ນ, ລາວເຂົ້າໃຈສິ່ງທີ່ທ່ານຈະອະທິບາຍ. ອັນນີ້ຈະເຮັດໃຫ້ມັນງ່າຍຂຶ້ນ ສຳລັບຜູ້ແປພາສາຈະແປ ແລະ ຈະເຮັດໃຫ້ການແປພາສານີ້ມນວນ ແລະ ຟັງງ່າຍຂຶ້ນເຊັ່ນກັນ.

## *ການແນະນຳ ດ້ວຍບົດນິທານຕ່າງໆ (ນິທານເລົ່າລື)*

ນິທານພື້ນເມືອງ ຫລື ທ້ອງຖິ່ນ ເປັນທີ່ໜ້າສົນໃຈຫລາຍ ໃຫ້ແກ່ນັກທ່ອງທ່ຽວ. ໂດຍການເລົ່ານິທານບົດໃດໜຶ່ງ ທ່ານສາມາດສອນໃຫ້ນັກທ່ອງທ່ຽວຄົນໃດໜຶ່ງ ກ່ຽວກັບຂໍ້ຫ້າມ ຫລື ສິ່ງຂະລຳຕ່າງໆຂອງບ້ານ, ຄວາມເຊື່ອຖືຂອງທ້ອງຖິ່ນ, ປະຫວັດສາດໃນຍຸກປະຈຸບັນ ຫລື ຍຸກບູຮານ, ສັດປ່າ ແລະ ບັນດາປ່າ ແລະ ຫລາຍໆຢ່າງ. ທ່ານຍັງສາມາດເຮັດໃຫ້ນັກທ່ອງທ່ຽວຫົວ ຫລື ເຮັດໃຫ້ເຂົາເຈົ້າຄິດ ກ່ຽວກັບສິ່ງໃດສິ່ງໜຶ່ງທີ່ສຳຄັນໃນຊີວິດ.

ເພື່ອເລົ່ານິທານໃຫ້ມ່ວນ ທ່ານຕ້ອງເຂົ້າໃຈ 3 ອົງປະກອບສຳຄັນ ຂອງບົດເລື່ອງ ຫລື ນິທານ

1. **<u>ບັນລະຍາຍເຫດການ (ປະຫວັດຄວາມເປັນມາ)</u>**: ໃນການເລີ່ມຕົ້ນຂອງທຸກໆເລື່ອງ ທ່ານ ຕ້ອງສະເໜີສະຖານທີ່ ແລະ ໄລຍະເວລາຂອງເລື່ອງທີ່ເກີດຂຶ້ນ. ທ່ານຈຳເປັນທີ່ພັນລະນາມັນຢູ່ໃສ ແລະ ມັນແມ່ນຄຸນລັກສະນະແບບໃດ.
2. **<u>ສະເໜີບັນຫາ</u>**: ໃນແຕ່ລະບົດນິທານແມ່ນມີບັນຫາ ມີບາງຢ່າງທີ່ປ່ຽນຄຸນລັກສະນະ ຫລື ປ່ຽນອັນອື່ນອີກ ເມື່ອທ່ານສະເໜີບັນຫາ, ຜູ້ຟັງເລີ່ມມີຄວາມຕື່ນເຕັ້ນ ແລະ ຕ້ອງການທີ່ຈະຮູ້ ແມ່ນຫຍັງຈະເກີດຂຶ້ນໃນບັ້ນທ້າຍຂອງເລື່ອງ :
3. **<u>ການແກ້ບັນຫາ</u>**: ນີ້ເປັນບ່ອນທີ່ຜູ້ເລົ່ານິທານ ອະທິບາຍຜົນ ຫລື ສິ່ງທີ່ເກີດຂຶ້ນ ໃນບັ້ນທ້າຍຂອງນິທານ. ນີ້ແມ່ນເວລາຜູ້ຟັງຮຽນຮູ້ ຄວາມໝາຍຂອງນິທານ ຫລື ບົດເລື່ອງ ແລະ ເຫດຜົນທີ່ເລົ່ານິທານບົດນີ້. ມັນມີຄວາມສຳຄັນຫລາຍ ທີ່ມີຄວາມໝາຍ ສຳລັບບົດນິທານທັງໝົດ. ຖ້າບົດເລື່ອງຂອງທ່ານ ບໍ່ມີຄວາມໝາຍ, ຫລັງຈາກນັ້ນ ຜູ້ຟັງຈະບໍ່ເຂົ້າໃຈ ຍ້ອນຫຍັງ ທ່ານຈຶ່ງເລົ່າ:

ນີ້ແມ່ນນິທານ ຕົວຢ່າງ, ເອີ້ນ ***ນິທານຫີນແຮດ (ຮູບໂຕແຮດ),*** ໄດ້ເລົ່າໃນໄລຍະເດີນປ່າ ໃນ ແຂວງສະຫວັນນະເຂດ ໂດຍ ທ່ານ ບຸນທອນ ພົມມະຈັກ ຊຶ່ງເປັນຜູ້ອາວຸໂສ ຢູ່ບ້ານນາຍາງ, ເມືອງພິນ :

**(ບັນລະຍາຍເຫດການ)** "ແຕ່ກີ້ແຕ່ກ່ອນ, ເມື່ອແຜ່ນດິນຍັງອ່ອນ, ກ່ອນໜ້າທີ່ຫີນຈະແຂງຕົວໃນຕອນນັ້ນ. ມີສັດຫລາຍປະເພດອາໃສຢູ່ໃນປ່າ ແລະ ດົງຕ່າງໆ. ໃນເວລານັ້ນໄດ້ມີການຊ່ວງຊີງ ຂອງບັນດາບຸກຄົນ ທີ່ເໝືອນພະເຈົ້າ ພວກເຮົາບໍ່ຮູ້ວ່າພວກເຂົາແມ່ນໃຜ, ແຕ່ພວກເຂົາມີພະລັງພິເສດ.

*ບົດເຝິກຫັດ #34*

ຮ່ວມກັບພະນັກງານນຳທ່ຽວ ທີ່ເວົ້າພາສາອັງກິດ, ຝຶກວິທີເລົ່ານິທານໃນຫ້ອງ ຮຽນ ແລະ ວິທີການແປ. ຢຸດຊົ່ວຄາວເປັນແຕ່ລະໄລຍະ ຂອງປະໂຫຍກການເລົ່າ ເພື່ອໃຫ້ຜູ້ແປ ສາມາດແປງ່າຍຂຶ້ນ, ແຕ່ບໍ່ຄວນຢຸດຫລາຍເທື່ອເກີນໄປ ທີ່ອາດຈະເຮັດໃຫ້ນິທານໜ້າເບື່ອ ຫລື ຍາວເກີນໄປ.

*ບົດເຝິກຫັດ #35*

ຈົ່ງເລືອກ ນິທານເລື່ອງໜຶ່ງ ທີ່ທ່ານຮູ້ດີ, ຈົ່ງຄິດກ່ຽວກັບ ຄວາມໝາຍຂອງນິທານ ແລະ ທ່ານສາມາດເວົ້າຫຍັງແດ່ ໃນຕອນທ້າຍ ເພື່ອຮັບປະກັນວ່າ ມັນມີຄວາມມ່ວນຊື່ນ ແລະ ເຕັມໄປດ້ວຍຄວາມໝາຍ. ຈົ່ງເລົ່ານິທານ ໃຫ້ໝູ່ໃນຫ້ອງຮຽນຂອງທ່ານຟັງ.

## ການແນະນຳ ດ້ວຍວິທີການສົນທະນາ (ບົດສົນທະນາ)

ວິທີການໃຫ້ຂໍ້ມູນ ແກ່ນັກທ່ອງທ່ຽວແບບທົ່ວໄປ ແລະ ບໍ່ເປັນທາງການ ແມ່ນການສົນທະນາ ປຶກສາຫາລື. ຕາມປົກກະຕິ ທ່ານອາດຈະບໍ່ຮູ້ວ່ານັກທ່ອງທ່ຽວຕ້ອງການຫຍັງ ຫລື ທ່ານຈະແນະນຳເຂົາເລື່ອງຫຍັງ ສະນັ້ນ ການສົນທະນາກັບເຂົາເຈົ້າຈະຊ່ວຍໃຫ້ທ່ານເຂົ້າໃຈຄວາມຕ້ອງການຂອງເຂົາເຈົ້າ ແລະ ບໍ່ຈຳເປັນອະທິບາຍໝົດທຸກຢ່າງ ແຕ່ຕົ້ນຮອດປາຍ. ເວລາທີ່ເໝາະສົມ ສຳລັບການສົນທະນາແມ່ນ ກ່ອນ ແລະ ຫລັງອາຫານ ໃນເວລາທີ່ນັກທ່ອງທ່ຽວ ມັກຈະພັກຜ່ອນ ແລະ ຄິດ ກ່ຽວກັບສິ່ງທີ່ເຂົາເຈົ້າຢາກເຫັນ.




ການສົນທະນາ ຫລັງອາຫານ ແມ່ນວິທີການທີ່ດີ ສຳລັບການຖ່າຍທອດຄວາມຮູ້ ແກ່ນັກທ່ອງທ່ຽວ ໃນສະໜາມ ໄລຍະທີ່ກຳລັງພັກຜ່ອນ

### ການສົນທະນາແບບບຸກຄົນ ແລະ ແບບເປັນກຸ່ມ

ການສົນທະນາ ກັບບຸກຄົນທ່ອງທ່ຽວ ໃນເວລາເດີນທາງ ແມ່ນເປັນໂອກາດທີ່ດີ ສຳລັບທ່ານ ເພື່ອທຳຄວາມຮູ້ຈັກກັບນັກທ່ອງທ່ຽວ ແລະ ໃຫ້ເຂົາເຈົ້າຮູ້ຈັກທ່ານຫລາຍຂຶ້ນ ນັກທ່ອງທ່ຽວຈຳນວນໜຶ່ງ ແມ່ນຈະຖາມຫລາຍໃນຄະນະທີ່ຄົນອື່ນຢູ່ງຽບໆ ແລະ ຟັງຄົນອື່ນລົມກັນ. ຖ້າວ່າ ໃນເວລາທ່ານສົນທະນາ ກັບບຸກຄົນນັກທ່ອງທ່ຽວ ແລະ ລາວຖາມຄຳຖາມໃດໜຶ່ງທີ່ສຳຄັນ ສຳລັບໝົດທຸກຄົນຕ້ອງຮູ້ແມ່ນທ່ານຕ້ອງຢຸດ ແລະ ອະທິບາຍໃຫ້ໝົດທຸກຄົນເຂົ້າໃຈພ້ອມກັນ. ອັນນີ້ຈະຊ່ວຍໃຫ້ວຽກຂອງທ່ານງ່າຍຂຶ້ນ ແລະ ທ່ານກໍ່ບໍ່ຈຳເປັນຕ້ອງອະທິບາຍໃຫ້ຟັງເທື່ອລະຄົນ ພ້ອມກັນນັ້ນ ບັນດານັກທ່ອງທ່ຽວກໍ່ຈະໄດ້ຮັບຂໍ້ມູນທີ່ສຳຄັນ ສຳລັບເຂົາເຈົ້າ.

ຜູ້ນຳທ່ຽວ: "ມັນໃຊ້ເວລາ ປະມານ 3 - 4 ອາທິດ"
ນັກທ່ອງທ່ຽວ: "ເບື້ອງຕົ້ນແມ່ນເຮັດແນວໃດ?"
ຜູ້ນຳທ່ຽວ: "ທຳອິດແມ່ນ ຕົ້ມເຂົ້າໃນໝໍ້ໃຫຍ່"
ນັກທ່ອງທ່ຽວ: "ຕໍ່ໄປເຮັດແນວໃດ ?"
ຜູ້ນຳທ່ຽວ: "ເຮົາປ່ອຍນ້ຳອອກ ແລ້ວຕື່ມເຊື້ອເຫລົ້າ"
ນັກທ່ອງທ່ຽວ: "ຕໍ່ໄປເຮັດແນວໃດ?"

*ຈຸດອ່ອນ ຂອງການສົນທະນາດັ່ງກ່າວ ແມ່ນຫຍັງ?* ນັກທ່ອງທ່ຽວຖາມຫລາຍຄຳຖາມ ແຕ່ໄດ້ຮັບຂໍ້ມູນໜ້ອຍ. ຜູ້ນຳທ່ຽວໃຫ້ຄຳຕອບແບບ ແມ່ນ/ບໍ່ແມ່ນ ແທນທີ່ຈະອະທິບາຍລະອຽດ. ນັກທ່ອງທ່ຽວຮູ້ສຶກເມື່ອຍ ແລະ ເບື່ອໜ່າຍ ເມື່ອຖາມຫລາຍເກີນໄປ. ຜູ້ນຳທ່ຽວຄວນຕີກຕອງຄຳຖາມທຳອິດຂອງນັກທ່ອງທ່ຽວ ແລະ ຫລັງຈາກນັ້ນ ຈຶ່ງຄ່ອຍຕອບໂດຍລະອຽດ ກ່ຽວກັບວິທີ ຜະລິດເຫລົ້າຂາວ ແບບລາວໆ, ດັ່ງລຸ່ມນີ້:

ນັກທ່ອງທ່ຽວ: "ການຕົ້ມເຫລົ້າຂາວແມ່ນເຮັດໄດ້ພາຍໃນວັນດຽວ ຫລື ບໍ່?"
ຜູ້ນຳທ່ຽວ: "ບໍ່, ມັນໃຊ້ເວລາປະມານ 3 - 4 ອາທິດ"
ນັກທ່ອງທ່ຽວ: "ທຳອິດແມ່ນເຮັດແນວໃດ?"
ຜູ້ນຳທ່ຽວ: "ທຳອິດແມ່ນຕົ້ມເຂົ້າໃນໝໍ້ໃຫຍ່ ຫລັງຈາກນັ້ນ ຖອກນ້ຳອອກ ແລ້ວຕື່ມເຊື້ອເຫລົ້າໃສ່ເຂົ້າ ແລ້ວຄືນມັນໃຫ້ທົ່ວໃນກະຖັງໝັກເຫລົ້າແບບນີ້. ຫລັງຈາກນັ້ນ 2 ອາທິດ ແມ່ນຕົ້ມກັ່ນເຫລົ້າ ໃຊ້ເຄື່ອງແບບນີ້"
ນັກທ່ອງທ່ຽວ: "ເຫລົ້າຂາວແກ້ວໜຶ່ງ ແມ່ນຂາຍໃນລາຄາເທົ່າໃດ?"
ຜູ້ນຳທ່ຽວ: "ໃນບ້ານນີ້ແມ່ນຂາຍລາຄາ 3.000 ກີບ ຕໍ່ແກ້ວ ແຕ່ໃນເມືອງແມ່ນ ຂາຍແກ້ວ ລະ 5.000 ກີບ."

ຕົວຢ່າງຂ້າງເທິງແມ່ນໃຫ້ຂໍ້ມູນລະອຽດກວ່າ ແລະ ເຮັດໃຫ້ນັກທ່ອງທ່ຽວເຂົ້າໃຈງ່າຍກວ່າຕົວຢ່າງທຳອິດ. ສັງເກດເຫັນວ່າ ໃນຕົວຢ່າງທີສອງນັກທ່ອງທ່ຽວຖາມຄຳຖາມໜ້ອຍກວ່າ ແຕ່ໄດ້ຂໍ້ມູນຫລາຍກວ່າ.

## ການມີສ່ວນຮ່ວມຂອງຊາວບ້ານໃນການສົນທະນາ

ໃນເວລາສົນທະນາ ແມ່ນຄວນຊັກຊວນເອົາຊາວບ້ານ ທີ່ມີໜ້າມາຮ່ວມໂອ້ລົມ ເພາະນັກທ່ອງທ່ຽວຢາກຈະທຳຄວາມຮູ້ຈັກກັບຊາວບ້ານທຸກຄົນ. ເມື່ອມີຊາວບ້ານຫລາຍຄົນ ( ທັງຍິງທັງຊາຍ, ເດັກ ແລະ ຜູ້ເຖົ້າ ) ມາຮ່ວມສົນທະນາ ນັກທ່ອງທ່ຽວຈະມີໂອກາດດີກວ່າ ໃນການທຳຄວາມຮູ້ຈັກກັບເຂົາເຈົ້າ. ເບິ່ງຕົວຢ່າງລຸ່ມນີ້:

[ທ່ານກຳລັງຢູ່ໃນເຮືອນຂອງທ່ານ ກັບກຸ່ມນັກທ່ອງທ່ຽວ ແລະ ອະທິບາຍ ກ່ຽວກັບຄອບຄົວຂອງທ່ານ ແລະ ວິຖີຊີວິດຂອງທ້ອງຖິ່ນ. ຫລັງຈາກທ່ານແນະນຳສະມາຊິກຄອບຄົວ ແລະ ອະທິບາຍຫ້ອງນອນແຕ່ລະຫ້ອງ ໃຫ້ນັກທ່ອງທ່ຽວຟັງແລ້ວ ທ່ານເລີ່ມສົນທະນາ.]

## ບົດບັນທຶກ ກ່ຽວກັບການສົນທະນາ ທີ່ເໝາະສົມ ທາງດ້ານວັດທະນະທຳ

ຖ້າທ່ານເຊື່ອວ່າ ບາງຢ່າງມັນບໍ່ເໝາະສົມທາງດ້ານວັດທະນະທຳ ທີ່ຈະສົນທະນາ ທ່ານ ບໍ່ຈຳເປັນຕ້ອງສົນທະນາ, ນັກທ່ອງທ່ຽວສາມາດ ຖາມບາງຄຳຖາມ ທີ່ເປັນຄຳຖາມໂດຍກົງ ຊຶ່ງທ່ານ ອາດຈະຮູ້ສຶກບໍ່ສະດວກທີ່ຈະຕອບ. ທ່ານພຽງແຕ່ບອກເຂົາເຈົ້າວ່າ "ຂ້ອຍບໍ່ຄ່ອຍຈະມັກລົມ ກ່ຽວກັບປະເດັນນັ້ນ" ແລະ ຖາມຄຳຖາມອື່ນ.

*ບົດເຝິກຫັດ #36*

ມີປະເດັນຫຍັງແດ່ ທີ່ທ່ານບໍ່ມັກເອົາມາສົນທະນາ ? ຂຽນລາຍການ ກ່ຽວກັບບາງຫົວຂໍ້ເຫລົ່ານີ້. ທ່ານຈະເວົ້າຫຍັງ ກັບນັກທ່ອງທ່ຽວ ຖ້າວ່າ ລາວຕ້ອງການທີ່ຈະສົນທະນາປະເດັນດັ່ງກ່າວ ?.

# ຂໍ້ສະຫລຸບ

ປຶ້ມຄູ່ມືນີ້ ໄດ້ໃຫ້ຂໍ້ແນະນໍາຕ່າງໆແກ່ທ່ານ ກ່ຽວກັບຄວາມຮູ້ທ້ອງຖິ່ນ ແລະ ວິທີການນໍາໃຊ້ ຄວາມຮູ້ເຫລົ່ານັ້ນເຂົ້າໃນວຽກງານການທ່ອງທ່ຽວ. ມັນໄດ້ນໍາສະເໜີຕົວຢ່າງທີ່ຫລາກຫລາຍ ກ່ຽວກັບຄວາມຮູ້ທ້ອງຖິ່ນ ສໍາລັບເພດຍິງ ແລະ ເພດຊາຍ, ຊຶ່ງໄດ້ຖືກນໍາໃຊ້ເຂົ້າໃນວຽກງານການທ່ອງທ່ຽວໃນ ສປປ ລາວ. ຫວັງຢ່າງຍິ່ງ, ທ່ານຄົງໄດ້ຮຽນຮູ້ ກ່ຽວກັບຄວາມຮູ້ທ້ອງຖິ່ນຂອງຕົນຫລາຍຂຶ້ນ ແລະ ປະຈຸບັນ ສາມາດເຂົ້າໃຈບາງວິທີການ, ທີ່ສາມາດນໍາໃຊ້ ເພື່ອນໍາສະເໜີຂໍ້ມູນເຫລົ່ານີ້ ໃຫ້ແກ່ນັກທ່ອງທ່ຽວ.

ມັນເປັນສິ່ງທີ່ສໍາຄັນທີ່ຈະຕ້ອງເຂົ້າໃຈ, ຢ່າງໃດກໍ່ຕາມ, ປຶ້ມຫົວນີ້ພຽງແຕ່ເປັນຂໍ້ສະເໜີ ສໍາລັບຫົວຂໍ້ ກ່ຽວກັບວິທີການຖ່າຍທອດຄວາມຮູ້ ແລະ ປະສົບການທ້ອງຖິ່ນເທົ່ານັ້ນ ແລະ ມັນຍັງບໍ່ທັນເປັນສະມຸດລາຍການຄວາມຮູ້ທ້ອງຖິ່ນທີ່ສົມບູນ ຂອງປະເທດລາວເທື່ອ. ພ້ອມກັນນັ້ນ, ກໍ່ຍັງບໍ່ແມ່ນປຶ້ມຄູ່ມື ດ້ານເຕັກນິກການນໍາທ່ຽວທີ່ລະອຽດ ແລະ ກວ້າງຂວາງເຊັ່ນກັນ. ແຕ່ກໍ່ຂຶ້ນຢູ່ກັບທ່ານ, ພະນັກງານນໍາທ່ຽວຂັ້ນທ້ອງຖິ່ນ. ເພື່ອສືບຕໍ່ຝຶກຄວາມສາມາດ ແລະ ປັບປຸງ ຄວາມເຂົ້າໃຈຂອງທ່ານເອງ ກ່ຽວກັບຄວາມຮູ້ທ້ອງຖິ່ນ ໃນຂອບເຂດບ້ານຂອງທ່ານ. ການຮຽນ ແລະ ການຝຶກອົບຮົມ ແມ່ນອົງປະກອບທີ່ສໍາຄັນ ເພື່ອຈະກາຍເປັນພະນັກງານນໍາທ່ຽວ ຜູ້ທີ່ມີຄວາມສາມາດ ແນວໃດກໍຕາມ, ມັນບໍ່ສາມາດປ່ຽນແທນປະສົບການໄດ້. ເພາະສະນັ້ນ, ມັນສໍາຄັນທີ່ສຸດ ຊຶ່ງທ່ານໄດ້ຮຽນບົດຮຽນຕ່າງໆ ຈາກປຶ້ມຄູ່ມືນີ້ ແລະ ນໍາໃຊ້ເຂົ້າໃນພາກປະຕິບັດຕົວຈິງ.

ພວກຂ້າພະເຈົ້າ, ຊຶ່ງເປັນຜູ້ຂຽນ ປຶ້ມຄູ່ມືນີ້ ຂໍອວຍພອນໃຫ້ທ່ານ ໂຊກດີ ໃນການນໍາສະເໜີ ໃຫ້ແກ່ນັກທ່ອງທ່ຽວ: ຄວາມຮູ້ ແລະ ປະສົບການທ້ອງຖິ່ນທີ່ເປັນເອກະລັກຂອງທ່ານ ແລະ ຫວັງວ່າ ດ້ວຍການເຮັດຕົວຈິງ ພວກເຮົາສາມາດປົກປັກຮັກສາ ແລະ ສະຫງວນໄວ້ ມໍລະດົກທ້ອງຖິ່ນ ແລະ ຄວາມຮູ້ພື້ນຖານ ຂອງ ສປປ ລາວ ເພື່ອຜົນປະໂຫຍດ ແລະ ຄວາມມ່ວນຊື່ນ ຂອງຄົນລຸ້ນຫລັງ.